ກໍ່ສ້າງພັກ

ວາລະສານເຜີຍແຜ່, ແນະນຳວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ
ຂອງຄະນະຈັດຕັ້ງສູນກາງພັກ

ຂໍ່ານັບຮັບຕ້ອນ ວັນສ້າງຕັ້ງຄະນະຈັດຕັ້ງສູນກາງພັກ ຄົບຮອບ 70 ປີ (25 ມີນາ 1955-25 ມີນາ 2025)

ທ່ານ ນ. ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍຄະນະ ເຄື່ອນໄຫວເຮັດວຽກ ຢູ່ແຂວງສະຫວັນນະເຂດ

ສະບັບ: 266

ປະຈຳປີ 2024/4

korsangphakmagazine@gmail.com

ໃນລະຫວ່າງວັນທີ 4-5 ກໍລະກົດ 2024 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງທົ່ວປະເທດ 6 ເດືອນຕົ້ນປີ 2024 ພາຍໃຕ້ການເປັນປະທານຂອງສະຫາຍ ນາງ ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຄະນະພັກ ຄຈສພ, ຄະນະກົມ ພາຍໃນສຳນັກງານ ຄຈສພ, ຫົວໜ້າ-ຮອງຫົວໜ້າຄະນະຈັດຕັ້ງແຂວງ-ນະຄອນຫຼວງ ແລະ ຫົວໜ້າ-ຮອງຫົວໜ້າກົມຈັດຕັ້ງ-ພະນັກງານຂອງບັນດາກະຊວງ-ອົງການເຂົ້າຮ່ວມຢ່າງພ້ອມພຽງ.

(ເອກອັກຄະລັດຖະທູດແຫ່ງສາທາລະນະລັດປະຊາຊົນຈີນ ຄົນໃໝ່)

(ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມແຫ່ງຍີ່ປຸ່ນ ຄົນໃໝ່)

ວັນທີ 18 ກໍລະກົດ 2024 ທ່ານ ນາງ ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ນາງ ຟັ່ງຫົງ (FANG HONG) ເອກອັກຄະລັດຖະທູດແຫ່ງສາທາລະນະລັດປະຊາຊົນຈີນ ຄົນໃໝ່ ປະຈຳ ສປປ ລາວ ພ້ອມດ້ວຍຄະນະ ແລະ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ໂຄອິຊູມິ ຊິໂຕມຸ ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມແຫ່ງຍີ່ປຸ່ນປະຈຳ ສປປ ລາວ ຄົນໃໝ່ ພ້ອມຄະນະ .

ໃນວັນທີ 17 ກໍລະກົດ 2024 ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ຈັດພິທີເຊື່ອມຊຶມເອກະສານສຳຄັນຈຳນວນໜຶ່ງ ແລະ ມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2023 ຂຶ້ນທີ່ຫ້ອງປະຊຸມໃຫຍ່ສຳນັກງານລັດວິສາຫະກິດໄຟຟ້າລາວ ໂດຍການເປັນປະທານຂອງສະຫາຍ ໂພໄຊ ໄຊຍະສອນ ເລຂາຄະນະບໍລິຫານງານພັກ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ມີບັນດາສະຫາຍກຳມະການພັກກະຊວງ, ຄະນະພັກຮາກຖານ, ຄະນະໜ່ວຍພັກ, ຄະນະຫ້ອງການ, ຄະນະກົມ, ຄະນະສະຖາບັນ, ຄະນະອຳນວຍການລັດວິສາຫະກິດ, ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໃນວັນທີ 22 ກໍລະກົດ 2024 ຄະນະຈັດຕັ້ງສູນກາງພັກ ໄດ້ເປີດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ I ໃຫ້ແກ່ພະນັກງານ-ສະມາຊິກພັກຂອງຕົນ ໂດຍໃຫ້ກຽດເປັນປະທານເປີດພິທີຂອງສະຫາຍ ນ. ບຸດສະດີ ທະນະເມືອງ ກຳມະການສູນກາງພັກ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີສະຫາຍ ປອ. ສຸພາວະດີ ຫຼ້າຄຳສາຍ ຫົວໜ້າກົມຄຸ້ມຄອງການຮຽນ-ການສອນ ພ້ອມດ້ວຍຄະນະ ຈາກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ມີຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສູນ ພາຍໃນ ຄຈສພ, ຄູອາຈານ, ນັກສຶກສາ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໃນລະຫວ່າງເດືອນກໍລະກົດ 2024 ຄະນະຈັດຕັ້ງສູນກາງພັກ, ກະຊວງແຜນການ ແລະ ການລົງທຶນ ໄດ້ຈັດກອງປະຊຸມເຜີຍແຜ່ເຊື່ອມຊຶມມະຕິຂອງກົມການເມືອງສູນກາງພັກ, ຄໍາສັ່ງແນະນໍາຂອງຄະນະເລຂາທິການສູນກາງພັກ ແລະ ປາຖະກະຖາວັນເກີດປະທານ ສຸພານຸວົງ ຄົບຮອບ 115 ປີ, ວັນເຊັນສົນທິສັນຍາມິດຕະພາບ-ການຮ່ວມມື ຄົບຮອບ 47 ປີ ແລະ ການສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 62 ປີ, ໃນນັ້ນ, ຄະນະຈັດຕັ້ງສູນກາງພັກ ໂດຍການເປັນປະທານຂອງ ສະຫາຍ ນ. ບຸດສະດີ ທະນະເມືອງ ກໍາມະການສູນກາງພັກ ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ແລະ ກະຊວງແຜນການ ແລະ ການລົງທຶນ ໂດຍການເປັນປະທານຂອງ ສະຫາຍ ນ. ພອນວັນ ອຸທະວົງ ຮອງເລຂາຄະນະພັກ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.

ໃນວັນທີ 14 ມິຖຸນາ 2024 ຄະນະບໍລິຫານງານຊາວໜຸ່ມຄະນະຈັດຕັ້ງສູນກາງພັກ ໄດ້ຈັດກອງປະຊຸມສໍາມະນາ ແລະ ແລກປ່ຽນບົດຮຽນໃນຫົວຂໍ້: "ບາງບົດຮຽນໃນການນໍາໃຊ້ເຕັກໂນໂລຊີດີຈີຕ້ອນ ເຂົ້າໃນການຄຸ້ມຄອງວຽກງານວິຊາສະເພາະ" ໂດຍການເປັນປະທານຂອງສະຫາຍ ນ. ບຸດສະດີ ທະນະເມືອງ ກໍາມະການສູນກາງພັກ ຮອງເລຂາຄະນະພັກ ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ແລະ ສະຫາຍ ປອ ສັນຕິສຸກ ສິມມາລາວົງ ຮອງເລຂາຄະນະພັກ ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ, ມີເລຂາ-ຮອງເລຂາ ຄະນະບໍລິຫານງານຊາວໜຸ່ມ ຄຈສພ, ມີເລຂາໜ່ວຍຊາວໜຸ່ມຫ້ອງການ, ບັນດາກົມ ແລະ ສູນ ພາຍໃນ ຄຈສພ, ມີແຂກຮັບເຊີນ ແລະ ພ້ອມດ້ວຍສະມາຊິກຊາວໜຸ່ມທົ່ວສໍານັກງານຄະນະຈັດຕັ້ງສູນກາງພັກເຂົ້າຮ່ວມຢ່າງພ້ອມພຽງ.

ການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ ຂອງພະນັກງານ-ສະມາຊິກພັກ ແມ່ນຄວາມຈຳເປັນ ພາວະວິໄສ ໃນເງື່ອນໄຂປະຈຸບັນ

ໂດຍ: ນະຄອນໄຊ ແກ້ວສຸຣິຍະວົງ

ຄືດັ່ງທີ່ຮູ້ນຳກັນແລ້ວວ່າ, ສະພາບການພາກພື້ນ ແລະ ສາກົນ ຍັງຜັນແປຢ່າງສັບສົນ ແລະ ເຄັ່ງຮ້ອນເປັນພິເສດ, ໃນນັ້ນ ວິກິດການດ້ານພະລັງງານ ແລະ ເງິນເຟີ້ ໄດ້ກາຍເປັນບັນຫາໃຫຍ່ໃນທົ່ວໂລກ, ເຊິ່ງໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ການພັດທະນາຂອງປະເທດເຮົາ ທີ່ມີພື້ນຖານເສດຖະກິດບອບບາງຢູ່ແລ້ວ ຍິ່ງເພີ່ມຄວາມຫຍຸ້ງຍາກຕື່ມອີກເປັນຕົ້ນ ຄວາມຫຍຸ້ງຍາກດ້ານເສດຖະກິດມະຫາພາກ ທີ່ຄຸມເຄືອມາເປັນເວລາຫຼາຍປີ, ທັງມີບັນຫາການຂາດແຄນນໍ້າມັນເຊື້ອໄຟ, ອັດຕາແລກປ່ຽນເງິນຕາເໜັງຕີງແຮງ, ເງິນເຟີ້, ລາຄາສິນຄ້າ ແລະ ຄ່າຄອງຊີບສູງ ອັນໄດ້ສົ່ງຜົນກະທົບໜັກໜ່ວງຕໍ່ຊີວິດການເປັນຢູ່ ຂອງພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າທີ່ຮ້າຍແຮງ-ໜັກໜ່ວງສົມຄວນ; ບັນຫາສິ່ງເສບຕິດ ແລະ ປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນສັງຄົມ ເປັນຕົ້ນ ອຸປະຕິເຫດຕາມທ້ອງຖະໜົນ, ຂີ້ລັກງັດແງະ ແລະ ອາຊະຍາກຳຕ່າງໆຍັງເພີ່ມຂຶ້ນ; ບັນຫາການເສື່ອມຖອຍຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ຂອງພະນັກງານ-ສະມາຊິກພັກ ທີ່ໜ້າເປັນຫ່ວງ ແລະ ເປັນໄພອັນຕະລາຍຕໍ່ບົດບາດການນຳພາຂອງພັກ; ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງຍົກສູງຄຸນສົມບັດສິນທຳປະຕິວັດ ຂອງລະບອບພະນັກງານ-ສະມາຊິກພັກ ກໍ່ຄືຄະນະນຳແຕ່ລະຂັ້ນ, ແນໃສ່ຮັບປະກັນການບູລະນະລະບົບການເມືອງ ຂອງບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ, ກ່ອນອື່ນໝົດ ຕ້ອງປັບປຸງພັກ ກໍ່ຄືຝຶກຝົນຫຼໍ່ຫຼອມສະມາຊິກພັກ ໃຫ້ໜັກແໜ້ນດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

ລວມຄວາມແລ້ວ, ຄຸນສົມບັດສິນທຳປະຕິວັດ ແມ່ນຄວາມດີທີ່ມີປະຈຳຕົວ ອັນປະກອບດ້ວຍການມີນໍ້າໃຈເສຍສະຫຼະເພື່ອຊາດ, ມີຈິດໃຈຮັກຊາດ, ມີຄວາມດຸໝັ່ນຂະຫຍັນພຽນ, ມີຄວາມຊື່ສັດ ປະຢັດ ແລະ ປອດໃສ, ມີລະບຽບວິໄນ, ມີນໍ້າໃຈສາມັກຄີເອື້ອເຟື້ອເຜື່ອແຜ່ ແລະ ບໍ່ອະຄະຕິ ບໍ່ອິດສາ ບໍ່ບັງບຽດສຽດສີຄົນອື່ນ. ສຳລັບ ຄຸນສົມບັດສິນທຳປະຕິວັດ ຂອງພະນັກງານ-ສະມາຊິກພັກ ກໍ່ແມ່ນຄວາມດີອັນປະເສີດທີ່ມີຕິດຕົວ ຂອງພະນັກງານ-ສະມາຊິກພັກ ອັນເກີດມາຈາກການຝຶກຝົນຫຼໍ່ຫຼອມຕາມທິດສະດີມາກ-ເລນິນ ເຊິ່ງພັກເຮົາໄດ້ເວົ້າວ່າ ຄຸນສົມບັດສິນທຳປະຕິວັດ ຂອງພະນັກງານ-ສະມາຊິກພັກ ແມ່ນອົງປະກອບໜຶ່ງທີ່ສຳຄັນ ຂອງຄຸນທາດການເມືອງ, ມັນແມ່ນອາລົມຈິດ, ແມ່ນແບບແຜນການເຄື່ອນໄຫວເຮັດວຽກງານ, ແບບແຜນການດຳລົງຊີວິດໃນສັງຄົມ ແລະ ໃນຄອບຄົວຂອງພະນັກງານ-

ສະມາຊິກພັກ ຂອງແຕ່ລະສະຫາຍ; ຄຸນສົມບັດສິນທຳປະຕິວັດ ແມ່ນສິ່ງຕັດສິນຄວາມກ້າວໜ້າ ຂອງພະນັກງານ-ສະມາຊິກພັກ ຂອງແຕ່ລະສະຫາຍ.

ຄວາມຈຳເປັນພາວະວິໄສ ໃນການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ ຂອງພະນັກງານ-ສະມາຊິກພັກ ໃນເງື່ອນໄຂປະຈຸບັນ ແມ່ນຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ກໍ່ຄືຄວາມຕ້ອງການຂອງພັກ-ລັດ ແລະ ຂອງທົ່ວສັງຄົມ ໃນການອົບຮົມ, ສ້າງພະນັກງານ-ສະມາຊິກພັກທີ່ດີ ມີຈັນຍາບັນ-ຈັນຍາທຳ ຫຼື ມີສິນທຳ ແລະ ຈະຣິຍະທຳ ທີ່ແທ້ຈິງ, ຍ້ອນວ່າພະນັກງານ-ສະມາຊິກພັກ ເປັນຜູ້ຕັດສິນຜົນສຳເລັດຂອງພາລະກິດປະຕິວັດປະຊາທິປະໄຕ ກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ນຳພາປະເທດຊາດຫຼຸດພົ້ນສະຖານະພາບປະເທດດ້ອຍພັດທະນາ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ ຕາມອຸດົມການຂອງພັກ ກໍ່ຄືວັດຖຸປະສົງ ແລະ ເປົ້າໝາຍຂອງພັກວາງໄວ້. ສະນັ້ນ, ໃນເງື່ອນໄຂເສດຖະກິດຕະຫຼາດ, ການເຊື່ອມໂຍງກັບສາກົນ ທີ່ມີທັງກາລະໂອກາດເອື້ອອຳນວຍ ແລະ ສິ່ງທ້າທາຍທົດສອບຫຼາຍປະການ ແລະ ໃນປະຈຸບັນ ປະເທດເຮົາ ກໍ່ພວມປະເຊີນໜ້າກັບບັນຫາຫຍຸ້ງຍາກດ້ານເສດຖະກິດ ແລະ ບັນຫາອື່ນໆທີ່ເກີດຂຶ້ນໃນສັງຄົມ, ຍິ່ງຈຳເປັນຕ້ອງມີພະນັກງານ-ສະມາຊິກພັກ ທີ່ມີຄວາມຮູ້, ຄວາມສາມາດ, ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີມານະຈິດປະຕິວັດ ກໍ່ຄືມີທາດແທ້ຫຼັກໝັ້ນ, ມີຄວາມຈົງຮັກພັກດີຕໍ່ຊາດ, ຕໍ່ປະຊາຊົນດ້ວຍຄວາມບໍລິສຸດໃຈ, ມີແບບແຜນດຳລົງຊີວິດທີ່ປອດໃສ; ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ ສະແຫວງຫາຄວາມຮູ້, ດຸໝັ່ນຄົ້ນຄວ້າ-ຮ່ຳຮຽນ ເພື່ອຍົກລະດັບໃນທຸກດ້ານ, ມີສະຕິຕໍ່ການຈັດຕັ້ງ ແລະ ຝຶກຝົນໃຫ້ເປັນຄົນມີລະບຽບວິໄນ ກໍ່ຄືເຄົາລົບກົດໝາຍ ແລະ ກົດລະບຽບຂອງພັກ ຢ່າງເຂັ້ມງວດ. ນັ້ນຄືຄວາມຈຳເປັນພາວະວິໄສ ແລະ ຄວາມຮຽກຮ້ອງຕ້ອງການອັນຮີບດ່ວນທີ່ສຸດຂອງພັກເຮົາ ໃນການປັບປຸງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ແມ່ນເລີ່ມຈາກການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດຂອງພະນັກງານ-ສະມາຊິກພັກ ເປັນອັນຕົ້ນຕໍ, ເຊິ່ງພັກເຮົາຖືວ່າ ຄຸນສົມບັດເປັນກົກ ແລະ ຄວາມສາມາດເປັນສິ່ງສຳຄັນ ທີ່ຂາດບໍ່ໄດ້, ພະນັກງານນຳພາຜູ້ໜຶ່ງ, ຖ້າມີແຕ່ຄຸນສົມບັດສິນທຳປະຕິວັດ, ແຕ່ຂາດຄວາມຮູ້, ຄວາມສາມາດ ແມ່ນເຮັດວຽກຫຍຸ້ງຍາກ; ກົງກັນຂ້າມ, ຖ້າມີແຕ່ຄວາມຮູ້, ຄວາມສາມາດເກັ່ງ, ແຕ່ຂາດຄຸນສົມບັດສິນທຳປະຕິວັດ ແມ່ນບໍ່ສາມາດນຳພາການປະຕິວັດໄດ້ ກໍ່ໃຊ້ການບໍ່ໄດ້. ໝາຍຄວາມວ່າ ເນື້ອແທ້ຂອງຄຸນສົມບັດສິນທຳປະຕິວັດ ແມ່ນຄຸນນະພາບຂອງສະມາຊິກພັກ-ພະນັກງານນຳພາແຕ່ລະຂັ້ນ, ຖ້າຫາກສະມາຊິກພັກ-ພະນັກງານ ນຳພາແຕ່ລະຂັ້ນ ມີຄຸນນະພາບດີເປັນສ່ວນຫຼາຍ, ພັກກໍ່ມີຄວາມເຂັ້ມແຂງ-ໜັກແໜ້ນ ແລະ ສາມາດເປັນແກນນຳໃນການນຳພາມະຫາຊົນໄດ້; ແຕ່ຫາກມີສະມາຊິກພັກສ່ວນຫຼາຍຄຸນນະພາບບໍ່ດີ, ພັກບໍ່ເຂັ້ມແຂງ ແລະ ບໍ່ສາມາດນຳພາມະຫາຊົນໄດ້. ເວົ້າລວມແລ້ວ, ການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ ຂອງພະນັກງານ-ສະມາຊິກພັກ ແມ່ນມີໜ້າທີ່ສຳຄັນອັນໜຶ່ງຂອງພະນັກງານ-ສະມາຊິກພັກ ແລະ ກໍ່ແມ່ນຄວາມຮັບຜິດຊອບໂດຍກົງຂອງຄະນະພັກແຕ່ລະຂັ້ນທີ່ຈະຕ້ອງໄດ້ເອົາໃຈໃສ່ຕໍ່ເນື່ອງ ແລະ ເປັນປົກກະຕິ.

ແຕ່ເຖິງຢ່າງໃດກໍ່ຕາມ, ກໍ່ຍັງເຫັນວ່າ ສະມາຊິກພັກ-ພະນັກງານນຳພາຈຳນວນໜຶ່ງ ເສື່ອມຖອຍດ້ານ

ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ເຊິ່ງສະແດງອອກໃນຄວາມເປັນເຈົ້າການຮັບຜິດຊອບຕໍ່ໜ້າທີ່ການເມືອງ ຍັງບໍ່ທັນສູງເທົ່າທີ່ຄວນ, ພ້ອມທັງເກີດມີແນວຄິດອາຍາສິດ, ແນວຄິດຈຸ້ມເຈື້ອເຊື້ອສາຍ ແລະ ສວຍໃຊ້ໜ້າທີ່ຕຳແໜ່ງໃນການສໍ້ລາດບັງຫຼວງ. ພັກເຮົາໄດ້ຕີລາຄາວ່າ: ຄະນະນຳຈຳນວນໜຶ່ງ, ພະນັກງານ-ສະມາຊິກພັກ ຈຳນວນບໍ່ໜ້ອຍ ໃນແຕ່ລະຂັ້ນ ບໍ່ທັນເຂົ້າໃຈເລິກເຊິ່ງ ແລະ ຍັງລັງເລ ຕໍ່ການສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ, ບໍ່ທັນກຳແໜ້ນບັນດາບັນຫາຕົ້ນຕໍ ທີ່ຕ້ອງແກ້ໄຂຕົວຈິງ ທັງຂາດການທຸ່ມເທ, ການເສຍສະຫຼະ, ຄວາມຮັບຜິດຊອບໃນໜ້າທີ່ການເມືອງ ຍັງບໍ່ທັນສູງ ແລະ ບໍ່ທັນຕັດສິນໃຈເພື່ອສ້າງການຫັນປ່ຽນໃນວຽກງານຕົວຈິງຂອງຕົນເອງ. ນັ້ນຄືບັນຫາທີ່ໜ້າເປັນຫ່ວງທີ່ສຸດຂອງພັກ ແລະ ສັງຄົມ ກໍ່ຄືປະຊາຊົນບັນດາເຜົ່າ, ຍ້ອນວ່າບັນຫາການເສື່ອມຖອຍດ້ານຄຸນທາດການເມືອງ, ຄຸນສົມບັດ ແລະ ມານະຈິດປະຕິວັດ ຂອງຖັນແຖວສະມາຊິກພັກ-ພະນັກງານ ພວມເປັນໄພອັນຕະລາຍຕໍ່ບົດບາດການນຳພາຂອງພັກ ແລະ ຕໍ່ລະບອບໃໝ່ ເຊິ່ງກາຍເປັນສິ່ງທ້າທາຍຕໍ່ຄວາມສາມາດຂອງພັກເຮົາ ໃນການນຳພາແກ້ໄຂບັນຫາຫຍໍ້ທໍ້ຢູ່ພາຍໃນພັກ ແລະ ໃນສັງຄົມ. ເພື່ອປັບປຸງການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ ຂອງພະນັກງານ-ສະມາຊິກພັກ ກໍ່ຄືຄະນະນຳແຕ່ລະຂັ້ນ ໂດຍຕິດພັນກັບການຕ້ານ ແລະ ສະກັດກັ້ນແກ້ໄຂບັນຫາຫຍໍ້ທໍ້ຢູ່ພາຍໃນພັກ ແລະ ໃນສັງຄົມ, ແນໃສ່ເຮັດໃຫ້ພະນັກງານ-ສະມາຊິກພັກ ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ກ້າວໄປເຖິງການສ້າງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ. ສະນັ້ນ, ເພື່ອຮັບປະກັນໃຫ້ແກ່ການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດຂອງພະນັກງານ-ສະມາຊິກພັກໃນເງື່ອນໄຂໃໝ່, ທັດສະນະຂອງຜູ້ຂຽນຄວນເອົາໃຈໃສ່ບັນຫາຕົ້ນຕໍ ດັ່ງນີ້:

ໜຶ່ງ, ພະນັກງານ-ສະມາຊິກພັກເອົາໃຈໃສ່ໃນການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດດ້ວຍຕົນເອງ ກໍ່ຄືຄວາມເປັນເຈົ້າການ ຍົກສູງຄວາມຮັບຜິດຊອບການເມືອງ ແລະ ຍົກສູງສະຕິຕື່ນຕົວ ເປັນເຈົ້າຕົນເອງ ໃນການພັດທະນາ, ຕັ້ງໃຈຄົ້ນຄວ້າຮໍ່າຮຽນແນວທາງ, ແຜນນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ, ເອົາໃຈໃສ່ຮໍ່າຮຽນຍົກລະດັບຄວາມຮູ້ດ້ານຕ່າງໆ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ, ອັນເປັນການສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ຕົນເອງ, ຮຽນຮູ້ວຽກງານຕົວຈິງຈາກພຶດຕິກຳ, ເກັບກຳຂໍ້ມູນຂ່າວສານ, ສະຫຼຸບສັງລວມ, ຖອດຖອນບົດຮຽນ ແລະ ໝູນໃຊ້ບົດຮຽນນັ້ນ ເຂົ້າໃນການຍົກສູງຄຸນນະພາບ ວຽກງານໃຫ້ດີຂຶ້ນເປັນກ້າວໆ.

ສອງ, ພະນັກງານ-ສະມາຊິກພັກຕ້ອງປັບປຸງທັດສະນະມະຫາຊົນໃຫ້ໜັກແໜ້ນ ແລະ ຕັ້ງໜ້າເຂົ້າຮ່ວມຂະບວນການຂອງມະຫາຊົນ ໂດຍຖືເອົາຂະບວນການຂອງມະຫາຊົນເປັນບ່ອນສ້າງຕົນເອງໃຫ້ເປັນຜູ້ທີ່ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກມະຫາຊົນ, ສ້າງຕົນເອງກາຍເປັນສະມາຊິກພັກທີ່ດີ, ມີທັດສະນະມະຫາຊົນ, ມີຄວາມອົດທົນ, ຊື່ສັດ, ປະຢັດ ແລະ ປອດໃສ ກໍ່ຄືມີຈັນຍາບັນ-ຈັນຍາທຳຢ່າງແທ້ຈິງ, ເປັນແບບຢ່າງນຳໜ້າໃນການດຳລົງຊີວິດທີ່ຂາວສະອາດ, ສາມາດສຶກສາອົບຮົມຄອບຄົວ-ລູກຫຼານ ເຊິ່ງເປັນການປະກອບສ່ວນສຳຄັນໃນການປັບປຸງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ກໍ່ຄືການກໍ່ສ້າງອຳນາດການປົກຄອງໃຫ້ເຂັ້ມແຂງ.

ສາມ, ເພີ່ມທະວີການສໍາຫຼວດກວດກາຕົນເອງ ແລະ ປັບປຸງປ່ຽນແປງດ້ວຍຕົນເອງ, ເຊິ່ງບັນຫາພື້ນຖານກວ່າໝູ່ນັ້ນ, ໂດຍເລີ່ມຈາກການຍົກສູງຄວາມຮັບຜິດຊອບຕໍ່ວຽກງານ ແລະ ຄວາມກ້າຫານໃນການຫັນປ່ຽນດ້ວຍຕົນເອງ, ທັງສໍາຫຼວດກວດກາຕົນເອງ ເປັນປະຈໍາ, ຍິນດີຮັບເອົາຄໍາຕິຊົມຈາກຄົນອື່ນ ກໍ່ຄືມິດສະຫາຍດ້ວຍຄວາມຈິງໃຈ; ພ້ອມນັ້ນ ກໍ່ເອົາໃຈໃສ່ຕ້ານແນວຄິດຂີ້ຄ້ານມັກງ່າຍ, ແນວຄິດຄັບແຄບ, ແນວຄິດເຫັນແກ່ຈຸ້ມເຈື້ອເຊື້ອສາຍ ແລະ ແນວຄິດອວດອົ່ງທະນົງຕົວ; ຕ້ອງມີຄວາມເຂັ້ມງວດຕໍ່ຕົນເອງ, ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ມີຈິດບຸກບືນ-ຫ້າວຫັນ ແລະ ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ ກໍ່ຄືມີຄຸນສົມບັດສິນທໍາປະຕິວັດ-ມານະຈິດປະຕິວັດ, ມີການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ; ພ້ອມນັ້ນກໍ່ກໍາແໜ້ນບັນດາບັນຫາຕົ້ນຕໍ ທີ່ຕ້ອງແກ້ໄຂຕົວຈິງ ແລະ ຈິງໃຈ ທຸ່ມເທ, ເສຍສະຫຼະ ເພື່ອຊາດ ເພື່ອປະຊາຊົນຢ່າງບໍ່ລັງເລໃຈ.

ສີ່, ຄະນະນໍາ ກໍ່ຄືການຈັດຕັ້ງແຕ່ລະຂັ້ນ ຕ້ອງເພີ່ມທະວີການນໍາພາຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທໍາປະຕິວັດ ຂອງພະນັກງານ-ສະມາຊິກພັກ ໃຫ້ເລິກເຊິ່ງ, ແທດເຖິງຕົວຈິງ, ຖືກຕ້ອງ ແລະ ສອດຄ່ອງກັບແຕ່ລະເປົ້າໝາຍ ກໍ່ຄືສອດຄ່ອງກັບໜ້າທີ່ວຽກງານຕົວຈິງ ຂອງແຕ່ລະແໜງການ, ໂດຍເລີ່ມຈາກການອົບຮົມດ້ານທິດສະດີ ແລະ ກ້າວເຂົ້າສູ່ພຶດຕິກໍາຕົວຈິງ ກໍ່ຄືມອບໝາຍໃຫ້ປະຕິບັດວຽກງານຕົວຈິງ ແລະ ຕິດຕາມ-ກວດກາ, ຕີລາຄາ-ປະເມີນຜົນຂອງການຈັດຕັ້ງປະຕິບັດວຽກງານ. ເພີ່ມທະວີການນໍາພາ-ຊີ້ນໍາຂອງຄະນະພັກ-ຄະນະນໍາ ກໍ່ຄືການຈັດຕັ້ງແຕ່ລະຂັ້ນ ໃນການຕິດຕາມ-ກວດກາ ແລະ ຕີລາຄາ-ປະເມີນຜົນຂອງການຈັດຕັ້ງປະຕິບັດວຽກງານ ໃນແຕ່ລະໄລຍະ ໃຫ້ເປັນປົກກະຕິ ແລະ ເປັນລະບົບຕໍ່ເນື່ອງ, ພ້ອມທັງສະເໜີແນະວິທີການປັບປຸງແກ້ໄຂບັນຫາຕ່າງໆ ເພື່ອຊ່ວຍເສີມຂະຫຍາຍດ້ານດີ ແລະ ແກ້ໄຂດ້ານອ່ອນ-ຂໍ້ຄົງຄ້າງ, ແນໃສ່ສ້າງໃຫ້ໄດ້ພະນັກງານ-ສະມາຊິກພັກທີ່ດີ, ມີຄຸນສົມບັດສິນທໍາປະຕິວັດ ແລະ ມີຄວາມຮູ້-ຄວາມສາມາດຢ່າງແທ້ຈິງ.

ສະຫຼຸບລວມແລ້ວ, ໃນການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທໍາປະຕິວັດ ຂອງພະນັກງານ-ສະມາຊິກພັກ ແມ່ນຄວາມຈໍາເປັນພາວະວິໄສ ໃນເງື່ອນໄຂປະຈຸບັນ, ແມ່ນຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ມີຄວາມຈໍາເປັນສໍາຄັນໃນການສ້າງພະນັກງານ-ສະມາຊິກພັກ ໃຫ້ມີຄຸນສົມບັດສິນທໍາປະຕິວັດ ພຽບພ້ອມໄປດ້ວຍຄວາມຮູ້-ຄວາມສາມາດ, ເປັນມາດຕະຖານກົກໃນການວັດແທກທັດສະນະໜັກແໜ້ນຊຶ້ນ, ທັດສະນະຫຼັກໝັ້ນມິດສັດຕູ, ນໍ້າໃຈຮັກຊາດ, ເສຍສະຫຼະເພື່ອສ່ວນລວມ, ບໍ່ມີແນວຄິດຄອນແຄນ, ເດັດດ່ຽວໜຽວແໜ້ນຕໍ່ອຸດົມການສັງຄົມນິຍົມ. ຖ້າຫາກການຈັດຕັ້ງພັກ-ລັດ ສ້າງໄດ້ພະນັກງານທີ່ມີຄຸນສົມບັດສິນທໍາປະຕິວັດ, ມີຄວາມຮູ້, ຄວາມສາມາດ ປະກອບໃນຕໍາແໜ່ງສໍາຄັນຕ່າງໆ ກໍ່ຈະເຮັດໃຫ້ລະບົບກົງຈັກການຈັດຕັ້ງມີຄວາມເຂັ້ມແຂງ, ໜັກແໜ້ນໃນການປະຕິບັດໜ້າທີ່ການເມືອງທີ່ພັກ-ລັດມອບໝາຍໃຫ້ຢ່າງມີຜົນສໍາເລັດ..ຯ.

ກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ

ໂດຍ: ວິໄລສິດ ພິມພັກດີ

ພັກປະຊາຊົນປະຕິວັດລາວ ແມ່ນກອງນໍາໜ້າທີ່ມີການຈັດຕັ້ງໜາແໜ້ນ ແມ່ນການຈັດຕັ້ງການເມືອງສູງສຸດ ຂອງຊົນຊັ້ນກໍາມະກອນ ແລະ ຂອງລະບອບປະຊາທິປະໄຕປະຊາຊົນລາວ ເປັນຕົວແທນທີ່ຈິງຮັກພັກດີຢ່າງສະເໝີຕົ້ນສະເໝີປາຍຕໍ່ສິດຜົນປະໂຫຍດ ຂອງຊົນຊັ້ນກໍາມະກອນຊາວຜູ້ອອກແຮງງານ ແລະ ຂອງຊາດລາວທັງໝົດ ເຊິ່ງປະກອບດ້ວຍບຸກຄົນທີ່ຕື່ນຕົວ, ຫ້າວຫັນໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານທັງໄດ້ຮັບຄວາມໄວ້ວາງໃຈຫຼາຍກວ່າໝູ່ ໃນຊົນຊັ້ນກໍາມະກອນ, ຊາວກະສິກອນ, ຊັ້ນຄົນປັນຍາຊົນ ແລະ ຊາວຜູ້ອອກແຮງງານ ເຊິ່ງໄດ້ຜ່ານການທົດສອບ ໃນຂະບວນການຕ່າງໆ ສະໝັກໃຈເຂົ້າໃນການຈັດຕັ້ງ ຂອງພັກ, ສູ້ຊົນປະຕິບັດຈຸດປະສົງ ແລະ ອຸດົມການຂອງພັກຢ່າງສຸດກົກສຸດປາຍ; ພັກເຮົາຢຶດໝັ້ນລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ ແລະ ມູນເຊື້ອອັນດີງາມ ຂອງພັກເປັນພື້ນຖານທາງດ້ານແນວຄິດ, ທິດສະດີ, ເປັນເຂັມຊີ້ທິດໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພັກ.

ພັກປະຊາຊົນປະຕິວັດລາວ ເປັນພັກກໍາອໍານາດ, ເປັນແກນນໍາໃນລະບົບການເມືອງ ຂອງລະບອບປະຊາທິປະໄຕ ປະຊາຊົນ ນໍາພາປະຊາຊົນລາວບັນດາເຜົ່າປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງລະບອບປະຊາທິປະໄຕ ປະຊາຊົນ ຕາມຈຸດໝາຍສັງຄົມນິຍົມ. ພັກມີພາລະກໍາປະຫວັດສາດອັນໃຫຍ່ຫຼວງ, ຮອບດ້ານ, ໜັກໜ່ວງ ແລະ ຍາວນານຄື: ສືບຕໍ່ຢຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການ ຂອງພັກ, ນໍາພາປວງຊົນລາວທັງຊາດ ປະຕິບັດໜ້າທີ່ປົກປັກຮັກສາປະເທດຊາດ ແລະ ໝາກຜົນ ຂອງການປະຕິວັດໃຫ້ໝັ້ນຄົງ; ສ້າງບາດລ້ຽວໃໝ່ໃຫ້ແກ່ການສ້າງ ແລະ ເສີມຂະຫຍາຍລະບອບປະຊາທິປະໄຕປະຊາຊົນ ຕາມຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ, ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທໍາ ແລະ ສີວິໄລ.

ໃນກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກໄດ້ຢໍ້າວ່າ: "ຕ້ອງສືບຕໍ່ປັບປຸງການຈັດຕັ້ງພັກແຕ່ລະຂັ້ນໃຫ້ມີຄວາມເຂັ້ມແຂງ, ເດັດດ່ຽວແກ້ໄຂບັນຫາທີ່ຄົງຄ້າງຢູ່ພາຍໃນພັກ ແລະ ເຮັດໃຫ້ການຈັດຕັ້ງຮາກຖານພັກ ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ເປັນແກນນໍາໃນລະບົບການເມືອງ. ປັບປຸງຄຸນນະພາບການດໍາເນີນຊີວິດຂອງໜ່ວຍພັກ ແລະ ຄະນະພັກແຕ່ລະຂັ້ນໂດຍສຸມໃສ່ກວດກາ, ປະເມີນຄວາມຄືບໜ້າໃນການປະຕິບັດບັນດາໜ້າທີ່ການເມືອງຕົວຈິງ, ລົງເລິກວິເຄາະ, ໄຈ້ແຍກຈຸດທີ່ຍັງບໍ່ທັນປະຕິບັດໄດ້, ພິຈາລະນາຕໍ່ຄວາມຮັບຜິດຊອບ ຂອງແຕ່ລະບຸກຄົນສະມາຊິກພັກ ຕິດພັນກັບການຕິຊົມຕົນເອງ ແລະ ຕິຊົມກັນຢ່າງແຂງແຮງ ແລະ ແບບສ້າງສັນ, ທັງເຊີດຊູສະຕິຮັບ

ຜິດຊອບ ແລະ ຮ່ວມກັນປຶກສາຫາລືຈິງຈັງ ເພື່ອໃຫ້ມີຄວາມເປັນເອກະພາບ ແລະ ສາມາດກຳນົດແຜນເຄື່ອນໄຫວ ແກ້ໄຂບັນຫາເກົ່າທີ່ຍັງຄົງຄ້າງ ແລະ ຮັບມືກັບບັນຫາທີ່ເກີດຂຶ້ນໃໝ່ ຢ່າງເປັນເຈົ້າການ.

ເພື່ອຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດຄຳສັ່ງ ຂອງກົມການເມືອງສູນກາງພັກ ແລະ ຄຳແນະນຳ ຂອງຄະນະຈັດຕັ້ງສູນກາງພັກ, ຄະນະພັກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ຈັດຕັ້ງເຊື່ອມຊຶມຄຳສັ່ງ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ສະບັບເລກທີ 01/ກມສພ, ລົງວັນທີ 03 ມັງກອນ 2018 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ສະບັບເລກທີ 291/ຄຈສພ, ລົງວັນທີ 26 ເມສາ 2018, ຄະນະພັກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ກໍ່ໄດ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມກ່ຽວກັບວິທີການ, ຂັ້ນຕອນໃນການສ້າງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ແລະ ວາງທິດທາງແຜນການປະຈຳປີຕໍ່ໄປ, ນອກຈາກນັ້ນ ຄະນະພັກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຍັງໄດ້ຜັນຂະຫຍາຍມາເປັນຄຳແນະນຳ ສະບັບເລກທີ 448/ອຄພ-ສມປຊ, ລົງວັນທີ 17 ກັນຍາ 2021 ເພື່ອໃຫ້ແທດເໝາະກັບສະພາບ ແລະ ຈຸດພິເສດ ຂອງອົງຄະນະພັກ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເຊິ່ງຜ່ານການຈັດຕັ້ງປະຕິບັດ ສາມາດຍາດໄດ້ຜົນສຳເລັດໃນແຕ່ລະດ້ານສະແດງອອກດັ່ງນີ້:

ໜຶ່ງ, ດ້ານການເມືອງ, ຄະນະພັກ, ສະມາຊິກພັກ, ແຕ່ລະໜ່ວຍພັກໄດ້ເອົາໃຈໃສ່ເປັນເຈົ້າການໃນການຄົ້ນຄວ້າຮ່ຳຮຽນ, ເຊື່ອມຊຶມເອົາແນວທາງຂອງພັກ, ແຜນນະໂຍບາຍ ຂອງລັດ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດຢ່າງທົ່ວເຖິງ, ໄດ້ນຳພາສະມາຊິກພັກເຂົ້າຮ່ວມກອງປະຊຸມເຜີຍແຜ່ເຊື່ອມຊຶມບັນດາເອກະສານຕ່າງໆ ທີ່ສຳຄັນຂອງພັກ-ລັດ, ເພື່ອເປັນການຍົກລະດັບຄວາມຮູ້ໃຫ້ແກ່ພະນັກງານສະມາຊິກພັກໃຫ້ມີທັດສະນະຫຼັກໝັ້ນທາງດ້ານການເມືອງໜັກແໜ້ນ, ຫັນເອົາແນວທາງແຜນນະໂຍບາຍຂອງພັກ ແລະ ມະຕິຂອງຄະນະພັກຂັ້ນເທິງມາເປັນແຜນການ ຂອງໜ່ວຍພັກ ເພື່ອໃຫ້ຖືກຕ້ອງສອດຄ່ອງກັບຄວາມຮັບຜິດຊອບ ແລະ ໜ້າທີ່ການເມືອງ, ພ້ອມທັງນຳພາ-ຊີ້ນຳການຈັດຕັ້ງປະຕິບັດຕົວຈິງໃຫ້ມີຜົນສຳເລັດ ແລະ ມີປະສິດທິຜົນສູງ.

ສອງ, ຄະນະພັກ,ສະມາຊິກພັກແຕ່ລະໜ່ວຍໄດ້ຖືສຳຄັນການສຶກສາອົບຮົມແນວຄິດດ້ວຍການເຊື່ອມຊຶມບັນດາເອກະສານທີ່ສຳຄັນຂອງພັກ ເຊິ່ງເຮັດໃຫ້ຄະນະພັກ, ສະມາຊິກພັກມີຄວາມເອກະພາບສູງຕໍ່ກັບແນວທາງການປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ, ຍຶດໝັ້ນຈຸດໝາຍສັງຄົມນິຍົມຢ່າງສະເໝີຕົ້ນສະເໝີປາຍ, ຈຳແນກມິດ-ສັດຕູໄດ້ຢ່າງຈະແຈ້ງ, ເດັດດ່ຽວຕໍ່ສູ້ຕ້ານທຸກກົນອຸບາຍມ້າງເພທຳລາຍຂອງສັດຕູ ແລະ ກຸ່ມຄົນທີ່ບໍ່ຫວັງດີ ທັງເປັນເຈົ້າການປົກປ້ອງແນວທາງ, ອຸດົມການຂອງພັກ, ຕອບຕ້ານສິ່ງຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນພາຍໃນໜ່ວຍພັກ, ຕ້ານແນວຄິດສວຍໂອກາດ, ສວຍໃຊ້ໜ້າທີ່ຕຳແໜ່ງ, ພະຍາດອາຍາສິດ, ເອກະຊົນ, ສໍ້ລາດບັງຫຼວງ, ຫຼິ້ນກິນຟູມເຟືອຍ ແລະ ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ, ຄະນະໜ່ວຍພັກ, ສະມາຊິກພັກຮັກສາໄດ້ຄວາມສາມັກຄີເປັນເອກະພາບພາຍໃນການຈັດຕັ້ງພັກຢ່າງແໜ້ນແຟ້ນ, ຕ້ານແນວຄິດຫຼາຍພັກ, ຫຼາຍເຄົ້າ, ຈຸ້ມເຈື້ອພັກພວກ ແລະ ກຸ່ມກ້ອນຢູ່ໃນການຈັດຕັ້ງພັກ.

ສາມ, ດ້ານການຈັດຕັ້ງ, ຍຶດໝັ້ນ ແລະ ປະຕິບັດຕາມ 5 ຫຼັກການ 3 ທິດນຳ ໃນການກໍ່ສ້າງ ແລະ ປັບປຸງພັກ, ການດຳເນີນຊີວິດການເມືອງ ຂອງໜ່ວຍພັກຮັບປະກັນ ແລະ ເສີມຂະຫຍາຍໄດ້ລັກສະນະນຳພາ, ລັກສະນະສຶກສາອົບຮົມ ແລະ ລັກສະນະຕໍ່ສູ້ພາຍໃນໜ່ວຍພັກ, ຄະນະໜ່ວຍພັກ, ສະມາຊິກພັກ ໄດ້ມີສະຕິເຄົ້າ

ລົບ ແລະ ປະຕິບັດກົດລະບຽບ ຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ, ເປັນແບບຢ່າງທີ່ດີໃນການເຄື່ອນໄຫວ, ດຳລົງຊີວິດດ້ວຍຄວາມປອດໃສ, ປະກົດການຫຍໍ້ທໍ້ພາຍໃນໜ່ວຍພັກໃຫ້ຫຼຸດໜ້ອຍລົງ, ການຄຸ້ມຄອງ, ການຕີລາຄາຄຸນນະພາບ ຂອງສະມາຊິກພັກ ແລະ ໜ່ວຍພັກໄດ້ປະຕິບັດຢ່າງເປັນປົກກະຕິ, ປະຕິບັດການຍ້ອງຍໍສະມາຊິກພັກຜູ້ທີ່ດີເດັ່ນ, ດຳເນີນມາດຕະການວິໄນຕໍ່ຜູ້ລະເມີດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດຢ່າງເຂັ້ມງວດ; ການຂະຫຍາຍມະຫາຊົນກ້າວໜ້າເຂົ້າພັກໄດ້ຖືຄຸນນະພາບເປັນກົກບົນພື້ນຖານປະຕິບັດຖືກຕ້ອງຕາມມາດຖານ, ເງື່ອນໄຂ, ບາດກ້າວ, ຂັ້ນຕອນ ຂອງການຂະຫຍາຍພັກ, ການປະກອບບຸກຄະລາກອນເຂົ້າໃນຄະນະໜ່ວຍພັກ, ແຕ່ລະໜ່ວຍຮັບປະກັນປະຕິບັດຖືກຕ້ອງຕາມມາດຖານເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນກົດລະບຽບ ຂອງພັກຢ່າງຄົບຖ້ວນ. ປະຈຸບັນມີໜ່ວຍພັກທີ່ຂຶ້ນກັບອົງຄະນະພັກສະຖາບັນການເມືອງ-ການປົກຄອງແຫ່ງຊາດ ມີທັງໝົດ 16 ໜ່ວຍພັກຮາກຖານ, ມີສະມາຊິກພັກທັງໝົດ 684 ສະຫາຍ, ຍິງ 197 ສະຫາຍ, ໃນນັ້ນມີສະມາຊິກພັກສົມບູນ 664 ສະຫາຍ, ຍິງ 184 ສະຫາຍ.

ສີ່, ດ້ານແບບແຜນວິທີນຳພາ, ຄະນະໜ່ວຍພັກສະມາຊິກພັກໄດ້ຍຶດໝັ້ນປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ຂັ້ນລຸ່ມປະຕິບັດຕາມຂັ້ນເທິງ, ບຸກຄົນຂຶ້ນກັບການຈັດຕັ້ງ; ການຄົ້ນຄວ້າຕົກລົງບັນຫາສຳຄັນທີ່ເປັນຍຸດທະສາດແມ່ນໄດ້ຕົກລົງເປັນໝູ່ຄະນະ, ເວົ້າ ແລະ ປະຕິບັດຕາມມະຕິ, ກົດລະບຽບຂອງພັກ, ກົດໝາຍຂອງລັດ, ເຮັດວຽກຢ່າງມີແຜນການ, ມີໂຄງການ, ມີການຊຸກຍູ້, ຕິດຕາມ, ກວດກາ ແລະ ສະຫຼຸບປະເມີນຜົນຕາມແຜນການທີ່ວາງໄວ້, ດ້ວຍການປະຕິບັດລະບອບປະຊຸມສ່ອງແສງລາຍງານເປັນປົກກະຕິ, ປະສານສົມທົບຢ່າງກົມກຽວລະຫວ່າງການນຳພາ ຂອງພັກກັບການເສີມຂະຫຍາຍບົດບາດ, ສິດ, ໜ້າທີ່, ການຄຸ້ມຄອງ ຂອງອົງການປົກຄອງ ແລະ ຄວາມເປັນເຈົ້າການຂອງອົງການຈັດຕັ້ງມະຫາຊົນ, ບັນດາໜ່ວຍພັກໄດ້ຍຶດໝັ້ນ ແລະ ເສີມຂະຫຍາຍແບບແຜນວິທີນຳພາທີ່ເປັນມູນເຊື້ອອັນດີງາມ ຂອງພັກ, ແບບແຜນນຳພາຕິດແທດກັບຮາກຖານ, ຕິດແທດກັບຕົວຈິງ, ເປັນເຈົ້າການຕ້ານພະຍາດອາຍາສິດ, ເອກະຊົນ, ສໍ້ລາດບັງຫຼວງ ແລະ ເຮັດແບບຜິວເຜີນ.

ຫ້າ, ດ້ານການປະຕິບັດໜ້າທີ່ການເມືອງ, ບັນດາໜ່ວຍພັກ, ສະມາຊິກພັກ ໄດ້ພ້ອມກັນປະຕິບັດໜ້າທີ່ການເມືອງ ຂອງຕົນໄດ້ມີປະສິດທິພາບສູງໃນການນຳພາດ້ານການເມືອງ, ແນວຄິດ, ການຈັດຕັ້ງ, ວິຊາສະເພາະ, ການພັດທະນາເສດຖະກິດ-ສັງຄົມ, ປະຕິບັດນະໂຍບາຍເຜົ່າ ແລະ ນະໂຍບາຍຕ່າງໆ ໃນຂອບເຂດຄວາມຮັບຜິດຊອບ ຂອງແຕ່ລະໜ່ວຍພັກ. ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ກໍ່ໄດ້ປະຕິບັດໜ້າທີ່ການເມືອງຂອງຕົນ ດ້ວຍການສຸມໃສ່ກໍ່ສ້າງ ແລະ ບຳລຸງພະນັກງານນຳພາ-ຄຸ້ມຄອງ, ຍົກລະດັບທິດສະດີການເມືອງຂັ້ນກາງ, ຂັ້ນສູງ, ກໍ່ສ້າງພະນັກງານຄົ້ນຄວ້າວິທະຍາສາດທິດສະດີການເມືອງ-ການປົກຄອງ, ຄົ້ນຄວ້າທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ມູນເຊື້ອປະຫວັດສາດ ຂອງພັກ, ຂອງຊາດ ເຂົ້າໃນການວາງແນວທາງການເມືອງຂອງພັກ, ວິທະຍາສາດການນຳພາ-ຄຸ້ມຄອງ, ສະຫຼຸບບົດຮຽນ ແລະ ພຶດຕິກຳ ໃນການນຳພາຂອງພັກ, ຄົ້ນຄວ້າລົງເລິກຫົວຂໍ້ສະເພາະ, ຝຶກອົບຮົມແນວທາງ, ນະໂຍບາຍ, ບັນຫາໃໝ່ກ່ຽວກັບການໝູນໃຊ້ທິດສະດີມາກ-ເລນິນ, ຫົວຂໍ້ສະເພາະໃຫ້ພະນັກງານການນຳຂັ້ນຍຸດທະສາດ, ຂັ້ນສູນກາງ, ພະນັກງານນຳພາຄຸ້ມຄອງໃນແຕ່ລະໄລຍະ, ຖືເອົາການຄົ້ນຄວ້າທິດສະດີ ແລະ ພຶດຕິກຳ ຕິດພັນກັບການຮຽນ-ການສອນ ເພື່ອລະກ້າວ, ການກໍ່ສ້າງພັກ-ພະນັກງານ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງ

ການໜ້າທີ່ການເມືອງຂອງພັກ ແລະ ສອດຄ່ອງກັບມາດຕະຖານການສຶກສາແຫ່ງຊາດ ເພື່ອເຂົ້າສູ່ຊີວິດຕົວຈິງ. ຈາກຄວາມເອົາໃຈໃສ່ຢ່າງຕັ້ງໜ້າ ໃນການປັບປຸງການຈັດຕັ້ງຮາກຖານພັກ ໃນການເພີ່ມທະວີການກໍ່ສ້າງໜ່ວຍພັກ, ປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນປີ 2022 ທົ່ວອົງຄະນະພັກ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ສາມາດສັງລວມໄດ້ວ່າ: ໄດ້ຮັບຮອງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ມີ 11 ໜ່ວຍພັກແລະບໍ່ໄດ້ສ້າງແຜນມີ 3 ໜ່ວຍພັກ (ໜ່ວຍພັກພະນັກງານບຳນານ, ໜ່ວຍພັກນັກສຶກສາຊັ້ນສູງເລັ່ງລັດ 5 ເດືອນ ຮຸ່ນທີ XXXI ແລະ ໜ່ວຍພັກນັກສຶກສາລະບົບຂັ້ນສູງ 9 ເດືອນ ຮຸ່ນທີ I, ເນື່ອງຈາກວ່າລະບົບຮຽນມີໄລຍະສັ້ນຈຶ່ງບໍ່ສະດວກໃນການເຄື່ອນໄຫວ), ບໍ່ທັນໄດ້ຮັບຮອງແຜນມີ 2 ໜ່ວຍພັກ (ໜ່ວຍພັກນັກສຶກສາປະລິນຍາໂທ ຮຸ່ນທີ XVIII (ຫ້ອງ ກ-ຂ) ແລະ ບໍ່ທັນຮອດເວລາປະເມີນ ມີ 2 ໜ່ວຍພັກ (ໜ່ວຍພັກນັກສຶກສາປະລິນຍາໂທ ຮຸ່ນທີ XVII (ຫ້ອງ ກ-ຂ), ໜ່ວຍພັກທີ່ໄດ້ຮັບການຕີລາຄາຈັດແບ່ງປະເພດມີ ຈຳນວນ 9 ໜ່ວຍພັກ ໃນນັ້ນມີໜ່ວຍພັກປະເພດແຂງ ມີ 3 ໜ່ວຍພັກ ແລະໜ່ວຍພັກປະເພດກາງ ມີ 6 ໜ່ວຍພັກ; ສະມາຊິກທີ່ໄດ້ຮັບການຕີລາຄາຈັດແບ່ງປະເພດທັງໝົດມີ ຈຳນວນ 245 ສະຫາຍ, ຍິງ 82 ສະຫາຍ, ໃນນັ້ນ ມີສະມາຊິກພັກປະເພດແຂງ 235 ສະຫາຍ, ຍິງ 78 ສະຫາຍ ແລະສະມາຊິກພັກປະເພດກາງມີ 10 ສະຫາຍ, ຍິງ 4 ສະຫາຍ.

ຄຽງຄູ່ກັບຜົນງານ ແລະ ຜົນສຳເລັດທີ່ກ່າວມານັ້ນກໍ່ຍັງມີບາງຂໍ້ຄົງຄ້າງຈຳນວນໜຶ່ງທີ່ຄະນະໜ່ວຍພັກ, ຄະນະຮັບຜິດຊອບໃນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃນຕໍ່ໜ້າເປັນຕົ້ນແມ່ນ:

1). ດ້ານການເມືອງ ເຖິງແມ່ນວ່າຄະນະພັກ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ຄະນະໜ່ວຍພັກຮາກຖານ ຕ້ອງໄດ້ເອົາໃຈໃສ່ໃນການສຶກສາອົບຮົມ, ເຊື່ອມຊຶມແນວທາງ ຂອງພັກ, ລະບຽບ, ກົດໝາຍ ຂອງລັດໃຫ້ແກ່ພະນັກງານ, ສະມາຊິກພັກແລ້ວແຕ່ຍັງເຫັນວ່າການເຊື່ອມຊຶມ, ການກຳແໜ້ນແນວທາງການເມືອງ ຂອງພັກ, ລະບຽບ, ກົດໝາຍຂອງລັດຍັງບໍ່ທັນເລິກເຊິ່ງເທົ່າທີ່ຄວນ, ມັນສະແດງອອກໃນການປະຕິບັດໜ້າທີ່ການເມືອງ ຂອງພະນັກງານ, ສະມາຊິກພັກບາງສະຫາຍເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ຍັງບໍ່ທັນເອົາໃຈໃສ່ຢ່າງຕັ້ງໜ້າ ເປັນຕົ້ນແມ່ນການຜັນຂະຫຍາຍບັນດາມະຕິ, ຄຳສັ່ງ, ຄຳແນະນຳ ຂອງຂັ້ນເທິງບໍ່ທັນເລິກເຊິ່ງ ຍັງເຮັດແບບລວມໆ.

2). ດ້ານແນວຄິດພະນັກງານ, ສະມາຊິກພັກຈຳນວນໜຶ່ງຍັງບໍ່ທັນຮັກສາໄດ້ຄວາມເປັນແບບຢ່າງນຳໜ້າ, ຍັງມີແນວຄິດປຽບທຽບຊົ່ງຊາ, ຈິ່ງຈຽມໃນການຕຳນິຕິຊົມຕົນເອງ, ຕຳນິຕິຊົມເຊິ່ງກັນ ແລະ ກັນ ບໍ່ທັນສະແດງອອກຢ່າງຈະແຈ້ງ ເກີດມີຄວາມລະເລີ່ຍຕໍ່ການຈັດຕັ້ງ ເຮັດໃຫ້ການປະຕິບັດລະບຽບວິໄນບໍ່ເຂັ້ມງວດ, ຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານຍັງບໍ່ທັນສູງ, ຄວາມເສຍສະຫຼະ ເພື່ອສ່ວນລວມຍັງມີໜ້ອຍ, ຄວາມຕື່ນຕົວເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຍັງບໍ່ທັນສົມຄູ່ກັບຄວາມເປັນແບບຢ່າງນຳໜ້າ, ເປັນແກນນຳໃນລະບົບການເມືອງ ຂອງລະບອບປະຊາທິປະໄຕ ປະຊາຊົນຢ່າງແທ້ຈິງ.

3). ຜ່ານມາເຫັນວ່າຫຼາຍໜ່ວຍພັກໄດ້ເປັນເຈົ້າການໃນການສ້າງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ແຕ່ການຈັດຕັ້ງປະຕິບັດຍັງມີລັກສະນະແບບຮ້ອນຮົນ, ຟ້າວຟັ່ງ, ບໍ່ທັນຕິດແທດກັບສະພາບຈຸດພິເສດຂອງໜ່ວຍພັກ, ຂາດການທາບທາມ, ເປີດກວ້າງປະຊາທິປະໄຕ ຂອງສະມາຊິກພັກ, ການຈັດຕັ້ງຕິດຕາມກວດກາເປັນແຕ່ລະໄລຍະ ຍັງເຮັດໄດ້ໜ້ອຍຈຶ່ງເຮັດໃຫ້ການນຳພາ-ຊີ້ນຳ ປະຕິບັດແຜນການບໍ່ທັນແທດເຖິງ, ການປະເມີນເຮັດແບບລວມໆ, ບໍ່ເຄັ່ງຄັດ, ພິເສດແມ່ນຕີລາຄາແບ່ງປະເພດ, ສະມາຊິກພັກສ່ວນຫຼາຍກາຍເປັນ ສະມາຊິກພັກແຂງ, ແຕ່ຂະບວນການລວມຂອງໜ່ວຍພັກບໍ່ຟົດຟື້ນ, ການດຳເນີນຊີວິດການ

ເມືອງໄດ້ຮັບການຈັດຕັ້ງປະຕິບັດຫຼາຍລະດັບ, ຫຼາຍຮູບການ (ລວມຈຸ, ລວມໜ່ວຍ), ແຕ່ການຫັນປ່ຽນຕົວຈິງຍັງຊັກຊ້າ.

4). ການຊຸກຍູ້ຂະບວນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຍັງບໍ່ທັນເປັນຂະບວນການຟົດຟື້ນ, ກວ້າງຂວາງ ແລະ ເລິກເຊິ່ງ ບາງໜ່ວຍພັກສ້າງແຜນການແລ້ວພັດບໍ່ເອົາໃຈໃສ່ໃນການຕິດຕາມກວດກາ, ສະຫຼຸບປະເມີນຜົນການຈັດຕັ້ງປະຕິບັດແຜນການປະຈໍາ 6 ເດືອນ ແລະ ປະຈໍາປີ ຂອງຕົນ, ພະນັກງານສະມາຊິກພັກຈໍານວນໜຶ່ງຍັງເຂົ້າໃຈວ່າ: ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແມ່ນໜ້າທີ່ຂອງຄະນະໜ່ວຍພັກເທົ່ານັ້ນ ຈຶ່ງເຮັດໃຫ້ຂະບວນການດັ່ງກ່າວຍັງບໍ່ທັນເປັນຂະບວນຟົດຟື້ນເທົ່າທີ່ຄວນ.

5). ຄະນະໜ່ວຍພັກ, ສະມາຊິກພັກຈໍານວນໜຶ່ງຍັງຂາດການຄົ້ນຄວ້າ-ກໍາແໜ້ນແນວທາງຂອງພັກ, ການກໍາແໜ້ນບັນດານິຕິກໍາ ກ່ຽວກັບວຽກພັກ-ພະນັກງານຍັງບໍ່ທັນໄດ້ດີ, ຍັງຖືເບົາຕໍ່ວຽກງານຈັດຕັ້ງກໍ່ສ້າງພັກ-ພະນັກງານ; ການນໍາພາ-ຊີ້ນໍາຈັດຕັ້ງປະຕິບັດບໍ່ແທດເຖິງ, ຄະນະໜ່ວຍພັກບາງໜ່ວຍບໍ່ໄດ້ເຮັດວຽກງານພັກ-ພະນັກງານຢ່າງຈິງຈັງ, ບໍ່ຄ່ອຍເອົາໃຈໃສ່ໃນວຽກງານການສຶກສາອົບຮົມ ການເມືອງ, ການນໍາພາດ້ານແນວຄິດຍັງເຮັດແບບຮູບການ, ບໍ່ໄດ້ເຮັດຢ່າງເລິກເຊິ່ງເຖິງຖອງ ຈຶ່ງພາໃຫ້ເກີດມີການຈັດຕັ້ງປະຕິບັດໜ້າທີ່ການເມືອງມີລັກສະນະຊັກຊ້າ, ບໍ່ສໍາເລັດຕາມແຜນການທີ່ວາງໄວ້.

ການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແມ່ນເປັນວຽກງານໜຶ່ງທີ່ມີຄວາມໝາຍຄວາມສໍາຄັນ, ພັກ ເວລາໃດກໍ່ປັບປຸງປົວແປງຕົນເອງໃນທຸກດ້ານຢູ່ເລື້ອຍໆ ເພື່ອເຊີດຊູບົດບາດການນໍາພາໃນລະບົບການເມືອງ ເພື່ອແກ້ໄຂບັນຫາທີ່ຕັ້ງຂຶ້ນນັ້ນ ຕາມທັດສະນະຂອງຜູ້ຂຽນມີບາງທັດສະນະດັ່ງນີ້:

ໜຶ່ງ; ເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນດ້ານການເມືອງ ກ່ອນອື່ນໝົດຄະນະບໍລິຫານງານພັກ, ຄະນະໜ່ວຍພັກຮາກຖານ, ສະມາຊິກພັກ ຕ້ອງໄດ້ຮໍ່າຮຽນເຊື່ອມຊຶມແນວທາງ, ແຜນນະໂຍບາຍ, ມະຕິຄໍາສັ່ງ, ກົດລະບຽບຂອງພັກ, ກົດໝາຍ, ລະບຽບການຕ່າງໆ ຂອງລັດຢ່າງທົ່ວເຖິງ ແລະ ຄົບຖ້ວນ, ຕ້ອງກໍາແໜ້ນສະພາບຄວາມເປັນຈິງຂອງຮາກຖານຕົນ ເພື່ອຫັນແນວທາງ, ແຜນນະໂຍບາຍຂອງພັກ ແລະ ມະຕິຂອງຄະນະພັກຂັ້ນເທິງ ຫັນເອົາແຜນການຂອງໜ່ວຍພັກໃຫ້ສອດຄ່ອງກັບຄວາມຮັບຜິດຊອບ ແລະ ໜ້າທີ່ການເມືອງຂອງຕົນ ພ້ອມທັງນໍາພາ-ຊີ້ນໍາຈັດຕັ້ງປະຕິບັດຕົວຈິງໃຫ້ສໍາເລັດ ແລະ ມີປະສິດທິຜົນສູງ; ສ້າງສະມາຊິກພັກໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທໍາປະຕິວັດທີ່ຖືກຕ້ອງ, ມີຄວາມຈົ່ງຮັກພັກດີຕໍ່ອຸດົມການຂອງພັກ, ມີນໍ້າໃຈເສຍສະຫຼະຮັບໃຊ້ຊາດ, ຮັບໃຊ້ປະຊາຊົນຢ່າງສຸດໃຈ, ສະແດງອອກໃນການເຄື່ອນໄຫວ ແລະ ການກະທໍາ ຂອງສະມາຊິກພັກ.

ສອງ; ຄະນະບໍລິຫານງານພັກ, ຄະນະໜ່ວຍພັກຄວນເພີ່ມທະວີໃນການສຶກສາອົບຮົມທາງດ້ານແນວຄິດໃຫ້ໜັກແໜ້ນ, ຢຶດໝັ້ນລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ, ປະຕິບັດແນວທາງແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມີຄຸນທາດການເມືອງ, ມີຄຸນສົມບັດສິນທໍາປະຕິວັດ, ຕ້ານໄດ້ທຸກເລ່ຫຼ່ຽມ, ແນວຄິດບໍ່ສອດຄ່ອງຢູ່ໃນຖັນແຖວສະມາຊິກພັກ, ການຈັດຕັ້ງພັກ ເປັນຕົ້ນແມ່ນຄະນະໜ່ວຍພັກ ເນັ້ນໃສ່ເຮັດໃຫ້ການຈັດຕັ້ງຮາກຖານພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນແບບຢ່າງ ແລະເປັນແວ່ນແຍງທາງດ້ານແນວຄິດ ແລະ ການກະທໍາ, ຕ້ານແນວຄິດສວຍໂອກາດ, ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອສໍ້ລາດບັງຫຼວງ, ແນວຄິດກຸ່ມກ້ອນພັກພວກ, ແນວຄິດປຽບທຽບຊັ້ນຊາ, ແນວຄິດຈົ່ງຈຽມບໍ່ກ້າຕໍານິຕິຊົມຕົນເອງ, ຕໍານິຕິຊົມເຊິ່ງກັນ ແລະ ກັນ, ແນວຄິດຫຼິ້ນກິນຟຸມເຟືອຍ, ແລ່ນນໍາເສດຖະກິດ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງໂດຍບໍ່ຄິດເຫັນຜົນປະໂຫຍດລວມຂອງປະເທດຊາດ

ບ້ານເມືອງ.

ສາມ; ເພີ່ມທະວີບົດບາດການນໍາພາຂອງພັກໃຫ້ສອດຄ່ອງກັບສະພາບຈຸດພິເສດຕົວຈິງ ຂອງແຕ່ລະໜ່ວຍພັກ ເພື່ອແນໃສ່ການປະຕິບັດບົດນໍາພາວຽກງານໃຫ້ມີປະສິດທິຜົນສູງ, ຄະນະໜ່ວຍພັກ, ສະມາຊິກພັກທຸກສະຫາຍຕ້ອງຍົກສູງສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງເຂັ້ມງວດ, ຍົກສູງຄວາມເປັນແບບຢ່າງນໍາໜ້າທີ່ດີໃນການເຄື່ອນໄຫວ, ດໍາລົງຊີວິດຢ່າງປອດໃສຂາວສະອາດ, ຕ້ານທຸກປະກົດການຫຍໍ້ທໍ້ທີ່ຈະເກີດຂຶ້ນພາຍໃນໜ່ວຍພັກຢ່າງທັນການ, ເພີ່ມທະວີຄຸນນະພາບການດໍາເນີນຊີວິດການເມືອງພາຍໃນພັກ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກໍານົດເວລາ, ມີເນື້ອໃນແທດເໝາະກັບໜ້າທີ່ການເມືອງ ຂອງແຕ່ລະໜ່ວຍພັກ, ຮັບປະກັນໄດ້ 3 ລັກສະນະ ຕ້ອງດໍາເນີນການຕໍານິຕິຊົມຕົນເອງ ແລະ ຕິຊົມກັນພາຍໃນພັກຢ່າງເຂັ້ມງວດ; ການຂະຫຍາຍມະຫາຊົນເຂົ້າເປັນສະມາຊິກພັກ ຕ້ອງປະຕິບັດຕາມກົດລະບຽບຂອງພັກຢ່າງເຂັ້ມງວດ, ຕ້ອງຮັບປະກັນຜູ້ດີເດັ່ນຫ້າວຫັນ ໂດຍຜ່ານຂະບວນການເຄື່ອນໄຫວຂອງອົງການຈັດຕັ້ງຕ່າງໆ, ມີນໍ້າໃຈຮັກຊາດ, ຮັກລະບອບສັງຄົມນິຍົມຢ່າງແຮງກ້າ, ຕ້ອງຕິດຕາມກວດກາຄືນການຂະຫຍາຍສະມາຊິກພັກ ຕ້ອງຖືເອົາຄຸນນະພາບເປັນຫຼັກ, ເອົາໃຈໃສ່ຍົກສູງວຽກງານຄຸ້ມຄອງ-ປ້ອງກັນພັກ, ຕິດຕາມກວດກາ, ຕີລາຄາຈັດປະເພດໜ່ວຍພັກ, ສະມາຊິກພັກໃຫ້ເຂັ້ມງວດກວ່າເກົ່າ ທັງໝົດນັ້ນ ເພື່ອແນໃສ່ການຈັດຕັ້ງຮາກຖານພັກ ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ.

ສີ່; ເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ທາງດ້ານແບບແຜນວິທີນໍາພາແມ່ນການກໍານົດແຈ້ງຕາມວິທີການ, ຫຼັກການ, ຮູບການ, ມາດຕະການ ແລະ ແບບແຜນວິທີເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕພາຍໃນພັກ, ຕາມສິດຂອບເຂດ, ໜ້າທີ່ຮັບຜິດຊອບຂອງໜ່ວຍພັກເພື່ອໃຫ້ສອດຄ່ອງກັບກົດລະບຽບຂອງພັກ, ຄະນະພັກໜ່ວຍພັກຕ້ອງເສີມຂະຫຍາຍແບບແຜນວິທີນໍາພາ ທີ່ເປັນມູນເຊື້ອຂອງພັກ ເປັນຕົ້ນແມ່ນການເຄື່ອນໄຫວນໍາພາໂດຍຜ່ານແນວທາງ ແລະ ການຈັດຕັ້ງຂອງພັກ, ນໍາພາຕາມທິດທາງ, ປະຕິບັດລະບອບປະຊຸມດ້ວຍການເສີມຂະຫຍາຍປະຊາທິປະໄຕໃນໝູ່ຄະນະ, ຕົກລົງເປັນມະຕິສຽງສ່ວນຫຼາຍ, ປະຕິບັດດ້ວຍມະຕິດ້ວຍຄວາມຮັບຜິດຊອບສູງ, ມີການຕິດຕາມກວດກາຊຸກຍູ້ຢ່າງໃກ້ຊິດ, ພ້ອມກັນນັ້ນກໍ່ຕ້ອງມີການສະຫຼຸບຖອດຖອນບົດຮຽນໃນແຕ່ລະໄລຍະ, ມີການສ່ອງແສງລາຍງານລະຫວ່າງຂັ້ນລຸ່ມ-ຂັ້ນເທິງ, ສາຍຕັ້ງ-ສາຍຂວາງ ບັນດາອົງການຈັດຕັ້ງຕ່າງໆ ຫຼີກເວັ້ນແບບແຜນວິທີເຮັດວຽກບໍ່ໄປຕາມຫຼັກການຂອງພັກ, ບໍ່ໃກ້ຊິດຕິດແທດຕົວຈິງ, ເປັນເຈົ້າການຕ້ານພະຍາດອາຍາສິດ, ເອກະຊົນ ແລະ ເຮັດແບບຜິວເຜີນ.

ສັງລວມແລ້ວ ການກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແມ່ນມີຄວາມຈໍາເປັນພາວະວິໃສ ໃນເງື່ອນໄຂປະຈຸບັນ ເພື່ອກະຕຸກຊຸກຍູ້ໃຫ້ຂະບວນການລວມ ໃນການປະຕິບັດໜ້າທີ່ ຂອງສະຖາບັນໃຫ້ມີຜົນສໍາເລັດ, ຖ້າພະນັກງານ, ສະມາຊິກພັກ ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ເຖິງໜ້າທີ່ການເມືອງຈະມີຄວາມຫຍຸ້ງຍາກປານໃດມັນກໍ່ມີຜົນສໍາເລັດ, ມີແຕ່ຈະເຮັດແນວໃດໃຫ້ພະນັກງານ, ສະມາຊິກພັກພວກເຮົາຮັບຮູ້, ເຊື່ອມຊຶມ, ກໍາແໜ້ນພາລະບົດບາດ, ໜ້າທີ່, ທີ່ການຈັດຕັ້ງມອບໝາຍໃຫ້, ຮັບຮູ້ເຂົ້າໃຈຕໍ່ໜ້າທີ່, ຄວາມຮັບຜິດຊອບຂອງຕົນຕ້ອງເປັນຜູ້ປະກອບສ່ວນຢ່າງຫ້າວຫັນມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍຈຶ່ງເຮັດໃຫ້ວຽກງານມີຜົນສໍາເລັດສູງ...ຯ

ຍົກສູງວຽກງານກໍ່ສ້າງ ແລະ ບຳລຸງພະນັກງານ ນຳພາ~ຄຸ້ມຄອງ ຢູ່ສູນກາງສະຫະພັນແມ່ຍິງລາວ

ໂດຍ: ພູວຽງ ແກ້ວບຸນພັນ

ພະນັກງານເປັນປັດໄຈຕັດສິນທຸກໄຊຊະນະ ຂອງການປະຕິວັດ ສຸມໃສ່ວຽກງານສຶກສາອົບຮົມ, ກໍ່ສ້າງ ແລະບຳລຸງຖັນແຖວພະນັກງານໃຫ້ມີແນວຄິດ, ທັດສະນະຫຼັກໝັ້ນ, ມີຄຸນສົມບັດສິນທຳປະຕິວັດ, ຈົງຮັກພັກດີຕໍ່ອຸດົມການຂອງພັກ, ບໍລິສຸດສັດຊື່ຕໍ່ພັກ-ລັດ ແລະ ປະຊາຊົນບັນດາເຜົ່າ, ພັກເຮົາຍາມໃດກໍ່ຖືວ່າພະນັກງານເປັນທຶນຮອນອັນປະເສີດຂອງພັກ, ເປັນແວ່ນແຍ່ງອັນໃສແຈ້ງ ຂອງປະຊາຊົນລາວບັນດາເຜົ່າເປັນຜູ້ນຳພາປະຊາຊົນ ແລະ ຮັບໃຊ້ປະຊາຊົນ, ເປັນຂົວຕໍ່ລະຫວ່າງພັກກັບປະຊາຊົນ, ທຸກວຽກງານຂອງພັກຈະດີ ຫຼື ຮ້າຍ, ຈະມີໄຊ ຫຼື ປະລາໄຊ ກໍ່ລ້ວນແຕ່ແມ່ນພະນັກງານເປັນຜູ້ຕັດສິນ. ສະນັ້ນ; ພັກປະຊາຊົນປະຕິວັດລາວ ຍາມໄດ້ກໍ່ເອົາໃຈໃສ່ກໍ່ສ້າງ ແລະ ບຳລຸງພະນັກງານ, ຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານ, ເຮັດໃຫ້ພະນັກງານມີຄວາມໝັກແໜ້ນທາງດ້ານການເມືອງ-ແນວຄິດ, ມີຄວາມເຂັ້ມແຂງທາງດ້ານວິຊາການ, ການຈັດຕັ້ງ ແລະ ແບບແຜນວິທີການນຳພາ, ມີຄຸນສົມບັດສິນທຳປະຕິວັດ ກຳແໜ້ນບັນດາທິດສະດີມາກ-ເລນິນ, ແນວຄິດຂອງ ປະທານ ໄກສອນ ພົມວິຫານ ແລະ ແນວທາງນະໂຍບາຍ ຂອງພັກຢ່າງເປັນລະບົບ ເພື່ອຍົກສູງປະສິດທິພາບ, ປະສິດທິຜົນຂອງໜ້າທີ່ວຽກງານ, ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນແຕ່ລະໄລຍະ ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: "ແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຂອງພັກຈະຖືກຕ້ອງປານໃດກໍ່ຕາມຖ້າພະນັກງານ-ສະມາຊິກພັກ ຫາກຂາດຄວາມຮູ້, ຄວາມສາມາດ, ຂາດປະສົບການໃນດ້ານຕ່າງໆ ເພື່ອນຳພາ ແລະ ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກດັ່ງກ່າວກໍຈະດີພຽງແຕ່ຢູ່ໜ້າເຈ້ຍເທົ່ານັ້ນ ". ຈາກບັນຫານີ້, ຈຶ່ງເຫັນວ່າ: ຂອດພະນັກງານເປັນຂອດຕັດສິນກວ່າໝູ່.

ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໄດ້ລະບຸໄວ້ວ່າ: "ເພື່ອສ້າງເປັນພະນັກງານຫຼັກແຫຼ່ງສືບທອດທີ່ມີເພດຍິງ, ເຜົ່າ ແລະ ຂົງເຂດເຄື່ອນໄຫວທີ່ຫຼາກຫຼາຍບົນພື້ນຖານແຜນກຳນົດອັນຖືກຕ້ອງ, ການຈັດຕັ້ງທີ່ກ່ຽວຂ້ອງແຕ່ລະຂັ້ນ ຕ້ອງຮັບປະກັນການດຳເນີນການບຳລຸງ, ກໍ່ສ້າງໃຫ້ພະນັກງານທີ່ນອນໃນເປົ້າໝາຍຢ່າງເປັນລະບົບ, ຜ່ານໂຮງຮຽນ ແລະ ຂວນການຕົວຈິງ; ຕ້ອງສົມທົບລະຫວ່າງການບຳລຸງ, ສ້າງຍົກລະດັບຄວາມສາມາດ ກັບການຊຸກຍູ້ ແລະ ປຸກລະດົມການຝຶກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນການປະພຶດປະຕິບັດຂອງພະນັກງານສະມາຊິກພັກທີ່ນອນໃນແຜນກຳນົດ, ບັນລຸຕາມມາດຕະຖານ ແລະ ເງື່ອນໄຂ ສະນັ້ນ, ການປ່ຽນແປງໃໝ່ວຽກງານພະນັກງານ ຕ້ອງເລີ່ມຈາກການຂຶ້ນແຜນກຳນົດພະນັກງານ ແລະ ແຜນການກໍ່ສ້າງ-ບຳລຸງຍົກລະດັບພະນັກງານ; ການວາງແຜນສັບຊ້ອນພະນັກງານ, ການເຄື່ອນຍ້າຍ ແລະ ການຄຸ້ມຄອງນຳໃຊ້ພະນັກງານ; ການຕິດຕາມກວດກາຕີລາຄາພະນັກງານ ແລະ ການປະຕິບັດນະໂຍບາຍຕໍ່ພະນັກ

ງານ". ສູນກາງສະຫະພັນແມ່ຍິງລາວ ແມ່ນອົງການຈັດຕັ້ງມະຫາຊົນໜຶ່ງໃນລະບົບການເມືອງ ຂອງລະບອບປະຊາທິປະໄຕ ປະຊາຊົນ ທີ່ມີພັກປະຊາຊົນ ປະຕິວັດລາວເປັນແກນນຳ, ມີຖານະບົດບາດທຽບເທົ່າກັບອົງການຈັດຕັ້ງ ຂອງລັດ ແລະ ອົງການຈັດຕັ້ງມະຫາຊົນອື່ນ ທີ່ເປັນຕົວແທນໃນການການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ທີ່ຍາມໃດກໍ່ໄດ້ໃຫ້ຄວາມສຳຄັນໃນວຽກງານພະນັກງານ ໂດຍສະເພາະແມ່ນການກໍ່ສ້າງ-ບຳລຸງພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍໄດ້ຫັນເອົາທິດທາງລວມດັ່ງກ່າວ ມາຈັດຕັ້ງຜັນຂະຫຍາຍເປັນທິດທາງ, ແຜນການ ຂອງຕົນໂດຍໄດ້ກຳນົດອອກໃນມະຕິກອງປະຊຸມໃຫຍ່ ຜູ້ແທນອົງຄະນະພັກ ສູນກາງສະຫະພັນແມ່ຍິງ IV ທີ່ວ່າ: ຊຸກຍູ້ສົ່ງເສີມໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນຂອງສູນກາງສະຫະພັນແມ່ຍິງລາວ ໄດ້ຮັບການພັດທະນາຮອບດ້ານ, ຍົກລະດັບຄວາມຮູ້ທາງດ້ານທິດສະດີ, ວິຊາສະເພາະ, ພາສາຕ່າງປະເທດ ແລະ ສາມາດນຳໃຊ້ເຕັກນິກ-ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງຕົນ ໃຫ້ໄດ້ດີ, ໄດ້ໄວ, ໄດ້ຫຼາຍ ແລະ ຖືກຕ້ອງຕາມກົດໝາຍ, ເປັນເສນາທິການ ໃຫ້ແກ່ຄະນະພັກ-ຄະນະນຳ ສູນກາງສະຫະພັນແມ່ຍິງລາວໃນການປະຕິບັດໜ້າທີ່ການເມືອງຕາມພາລະບົດບາດຂອງຕົນ; ພ້ອມດຽວກັນນັ້ນ ກໍ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາທີ່ກ່ຽວຂ້ອງ ໂດຍການຈັດຕັ້ງເຊື່ອມຊຶມໃຫ້ແກ່ຄະນະພັກແຕ່ລະຂັ້ນຮັບຮູ້ເຂົ້າໃຈເປັນຕົ້ນແມ່ນ ມະຕິ ສະບັບ ເລກທີ 030, 031, 032/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍມາດຕະຖານພະນັກງານນຳພາ-ຄຸ້ມຄອງ, ວຽກງານຄຸ້ມຄອງພະນັກງານ ແລະ ວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ຄຳແນະນຳ ສະບັບເລກທີ 292/ຄຈສພ, ລົງວັນທີ 26 ເມສາ 2018 ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍມາດຕະຖານພະນັກງານນຳພາ-ຄຸ້ມຄອງ, ວຽກງານຄຸ້ມຄອງພະນັກງານ ແລະ ວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ພ້ອມດຽວກັນນັ້ນກໍ່ໄດ້ເອົາໃຈໃສ່ໃນການເລືອກເຟັ້ນພະນັກງານຢ່າງມີເປົ້າໝາຍ, ມີແຜນການຂອງການຈັດຕັ້ງບົນພື້ນຖານກວດກາດ້ານຄວາມຮູ້ວິຊາສະເພາະ ແລະ ໜ້າທີ່ວຽກງານຂອງພະນັກງານຜູ້ນັ້ນທີ່ພວມຮັບຜິດຊອບຢູ່ ແລະ ນອນໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແຕ່ລະຂັ້ນ ທີ່ຄົບມາດຕະຖານເງື່ອນໄຂເປັນຕົ້ນແມ່ນພະນັກງານທີ່ດີເດັ່ນ, ມີຄວາມຕັ້ງໃຈຕໍ່ການປະຕິບັດໜ້າທີ່ວຽກງານ, ເຮັດແທ້ທຳຈິງ, ມີຄຸນສົມບັດດີ, ຊື່ສັດຕໍ່ການຈັດຕັ້ງ, ມີຄວາມກະຕືລືລົ້ນໃນການພັດທະນາຕົນເອງ ແລະ ຖືຜົນປະໂຫຍດ ສ່ວນລວມສູງກວ່າຜົນປະໂຫຍດສ່ວນຕົວ ເພື່ອໄປຍົກລະດັບຄວາມຮູ້ສະແດງອອກຄື: ໄດ້ສົ່ງໄປບຳລຸງທິດສະດີການເມືອງ ຂັ້ນສູງລະບົບ 05 ເດືອນ ຢູ່ ສສ ຫວຽດນາມ 01 ທ່ານ (ເປັນຍິງ) ແລະ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ 01 ທ່ານ (ເປັນຍິງ); ຍົກລະດັບປະລິນຍາໂທ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ 03 ທ່ານ (ເປັນຍິງ); ໄປຍົກລະດັບປະລິນຍາໂທ ຢູ່ປະເທດ ສ.ເກົາຫຼີ 02 ທ່ານ (ຍິງ 01, ຊາຍ 01); ຍົກລະດັບວິຊາສະເພາະຂັ້ນປະລິນຍາໂທ ນອກໂມງການດ້ວຍທຶນຕົນເອງ ຢູ່ມະຫາວິທະຍາໄລແຫ່ງຊາດລາວ 08 ທ່ານ; ນຳສົ່ງພະນັກງານນຳພາ-ຄຸ້ມຄອງ ຂອງສະຫະພັນແມ່ຍິງແຕ່ລະຂັ້ນໄປຝຶກອົບຮົມວຽກງານແມ່ຍິງ ໄລຍະ 02 ເດືອນ ຢູ່ ສສ ຫວຽດນາມ 15 ທ່ານ (ເປັນຍິງ) ແລະ ໄປຝຶກອົບຮົມພາສາອັງກິດ 05 ທ່ານ; ທັນລົງຮາກຖານໄລຍະຍາວ 01 ທ່ານ (ເປັນຍິງ); ມາຮອດປະຈຸບັນ, ມີພະນັກງານ-ລັດຖະກອນທັງໝົດ 187 ຄົນ (ຍິງ 159, ຊາຍ 28).

ຜ່ານການກໍ່ສ້າງ ແລະ ບຳລຸງພະນັກງານຄື

ດັ່ງກ່າວ ສາມາດເຫັນໄດ້ວ່າ: ພະນັກງານນຳພາ-ຄຸ້ມຄອງຢູ່ສູນກາງສະຫະພັນແມ່ຍິງລາວ ໄດ້ເຕີບໃຫຍ່ຂະຫຍາຍຕົວດ້ານປະລິມານ ແລະ ຄຸນນະພາບນັບມື້ສູງຂຶ້ນ, ສາມາດເປັນຫຼັກແຫຼ່ງແກ່ນສານຂອງພັກ-ລັດຢູ່ແຕ່ລະກົມກອງ ໃນການນຳພາ-ຊີ້ນຳ, ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຜົນສຳເລັດ, ເຮັດໃຫ້ກົມກອງ, ຂະແໜງການໄດ້ຮັບການພັດທະນາໃຫ້ນັບມື້ດີຂຶ້ນເປັນກ້າວໆ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວນັ້ນ, ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງ ເຫັນວ່າ ຍັງມີບາງດ້ານທີ່ເປັນຂໍ້ຄົງຄ້າງທີ່ຈະຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂໃນຕໍ່ໜ້າມີດັ່ງນີ້:

ໜຶ່ງ, ການຂຶ້ນແຜນການກໍ່ສ້າງ-ບຳລຸງພະນັກງານຢູ່ສູນກາງສະຫະພັນແມ່ຍິງລາວ ເຖິງວ່າຈະໄດ້ມີການປະເມີນເປັນປົກກະຕິກໍ່ຕາມ, ແຕ່ການສ້າງແຜນກໍ່ສ້າງ-ບຳລຸງ ບາງດ້ານຍັງບໍ່ທັນເປັນແຜນລະອຽດ ແລະ ທົ່ວເຖິງ ເປັນຕົ້ນວ່າ: ພະນັກງານຄວນກໍ່ສ້າງແນວໃດ, ຈຳນວນເທົ່າໃດຄື: ທາງດ້ານວິຊາສະເພາະ, ດ້ານທິດສະດີການເມືອງ-ການປົກຄອງ, ລະບົບບຳລຸງອື່ນໆ, ສ່ວນຫຼາຍຍັງອີງໃສ່ແຕ່ແຜນການຂອງຂັ້ນເທິງສົ່ງໃຫ້ ຈຶ່ງຈັດພະນັກງານໄປຕາມນັ້ນ, ບໍ່ທັນຂຶ້ນເປັນເປົ້າໝາຍຂອງພະນັກງານໃນແຕ່ລະປີ ເພື່ອໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວຂອງວຽກງານ.

ສອງ, ຄວາມບຸກບືນຫ້າວຫັນພັດທະນາຕົນເອງຂອງພະນັກງານຈຳນວນໜຶ່ງບໍ່ທ່ວງທັນກັບການເລັ່ງທວງຂອງໜ້າທີ່ການເມືອງ ແລະ ໜ້າທີ່ວິຊາສະເພາະໃນໄລຍະໃໝ່, ພະນັກງານຈຳນວນໜຶ່ງມີແນວຄິດທໍ້ຖອຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບຂອງໜ້າທີ່ວຽກງານບໍ່ສູງ ເຖິງແມ່ນວ່າຄະນະພັກ, ບັນດາໜ່ວຍພັກກົມຈະເອົາໃຈໃສ່ສຶກສາອົບຮົມທາງດ້ານການເມືອງ-ແນວຄິດເປັນປະຈຳ, ແຕ່ການຫັນປ່ຽນຂອງເຂົາເຈົ້າບໍ່ທັນສະແດງອອກຢ່າງຈະແຈ້ງ, ດ້ານໜຶ່ງກໍ່ຍ້ອນການສຶກສາອົບຮົມຍັງບໍ່ທັນແທດເຖິງ, ເລິກເຊິ່ງເຖິງຖອງ, ທິດສະດີ ແລະ ພຶດຕິກຳຍັງບໍ່ທັນສົມຄູ່ກັນ, ການເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດໃຫ້ພະນັກງານ-ລັດຖະກອນຍັງຊັກຊ້າ ແລະ ເຮັດແບບລວມ.

ສາມ, ເຖິງວ່າມີແຜນການ ກ່ຽວກັບການກໍ່ສ້າງ ແລະ ບຳລຸງພະນັກງານແລ້ວກໍ່ຕາມ ແຕ່ການຈັດຕັ້ງປະຕິບັດຕົວຈິງຍັງບໍ່ທັນໄດ້ດີ, ບໍ່ທັນເປັນລະບົບ, ຄົບຊຸດ, ບໍ່ທັນແທດເໝາະກັບສະພາບຄວາມເປັນຈິງຂອງອົງການ, ການເລືອກເຟັ້ນພະນັກງານໄປຮຽນຢູ່ພາຍໃນ ແລະ ຕ່າງປະເທດ ບາງຄັ້ງຍັງບໍ່ທັນກຳນົດຢ່າງຊັດເຈນ, ການລົງທຶນໃສ່ການກໍ່ສ້າງພະນັກງານຍັງຈຳກັດ, ໃນເວລາສົ່ງພະນັກງານໄປຮຽນແລ້ວການຕິດຕາມກວດກາ, ເບິ່ງແຍງຊຸກຍູ້ຊ່ວຍເຫຼືອຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ອັນເຮັດໃຫ້ພະນັກງານຈຳນວນໜຶ່ງຂາດຄວາມບຸກບືນສູ້ຊົນໃນການພັດທະນາຄວາມຮູ້, ຄວາມສາມາດຂອງຕົນເອງ.

ເພື່ອຮັບປະກັນໃຫ້ວຽກງານກໍ່ສ້າງ ແລະ ບຳລຸງພະນັກງານຂອງສູນກາງສະຫະພັນກຳມະບານລາວໃນຕໍ່ໜ້າໃຫ້ມີຄຸນນະພາບ ແລະ ແທດເໝາະກັບສະພາບຄວາມເປັນຈິງຜູ້ຂຽນມີບາງທັດສະນະຄື:

ໜຶ່ງ, ການກໍ່ສ້າງພະນັກງານ ຕ້ອງເລີ່ມຈາກຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໜ້າທີ່ການເມືອງ, ໜ້າທີ່ວຽກງານວິຊາສະເພາະ ແລະ ອີງໃສ່ການເຕີບໃຫຍ່ຂະຫຍາຍຕົວຂອງສູນກາງສະຫະພັນແມ່ຍິງລາວ ເວົ້າລວມ, ເວົ້າສະເພາະແມ່ນການກໍ່ສ້າງ-ບຳລຸງພະນັກງານແຕ່ລະໄລຍະ, ຕ້ອງມີແຜນກຳນົດພະນັກງານລະອຽດ, ຕ້ອງອີງໃສ່ມາດຕະຖານ, ເງື່ອນໄຂ ແລະ ອີງຕາມມະຕິວ່າດ້ວຍການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງກົມການເມືອງສູນກາງພັກ ສະ

ບັບ ເລກທີ 032/ກມສພ, ຕ້ອງມີເປົ້າໝາຍວ່າຈະເລັ່ງໃສ່ພະນັກງານຂັ້ນໃດ, ມີຂະແໜງການຫຍັງທີ່ຈຳເປັນ ແລະ ຂາດເຂີນ ບໍ່ຄວນສ້າງແບບລວມໆ ຫຼື ແລ້ວແຕ່ຂັ້ນເທິງຈະແບ່ງໃຫ້, ການກໍ່ສ້າງພະນັກງານນຳພາ-ຄຸ້ມຄອງ ຕ້ອງຖືເອົາຄຸນນະພາບເປັນກົກ.

ສອງ, ການກໍ່ສ້າງ ແລະ ບຳລຸງ ຕ້ອງດຳເນີນເປັນລະບົບ ແລະ ຄົບຊຸດຕໍ່ເນື່ອງ ບົນພື້ນຖານແຜນກຳນົດພະນັກງານ, ມາດຕະຖານທີ່ຂາດ ແລະ ມີຄວາມຈຳເປັນໃນການກໍ່ສ້າງ-ບຳລຸງ ໃຫ້ມີ 3 ດ້ານໄປພ້ອມໆກັນຄື: ດ້ານຄຸນທາດການເມືອງ, ຄວາມຮູ້ທາງດ້ານທິດສະດີ, ວິຊາສະເພາະ ແລະ ພາສາຕ່າງປະເທດ, ຄວາມສາມາດໃນການຈັດຕັ້ງປະຕິບັດວຽກງານຕົວຈິງ. ໃນນັ້ນຖືເອົາຄຸນທາດການເມືອງເປັນກົກ ແລະ ວິຊາສະເພາະເປັນສຳຄັນ ທັງນີ້ກໍເຮັດໃຫ້ຖັນແຖວພະນັກງານສູນກາງສະຫະພັນແມ່ຍິງສາມາດປະຕິບັດໜ້າທີ່ວຽກງານໃຫ້ມີປະສິດທິຜົນດີກວ່າເກົ່າ, ພ້ອມກັນນັ້ນ, ການເລືອກເຟັ້ນ ແລະ ບຳລຸງສ້າງພະນັກງານຕ້ອງຮັບປະກັນລັກສະນະຊົນຊັ້ນຂອງພັກ ແລະ ຕ້ອງຮັບປະກັນການຕັດສິນບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ແລະ ເປັນເອກະພາບພາຍໃນພັກ.

ສາມ, ບັນດາອົງການເສນາທິການທີ່ເຮັດວຽກງານພະນັກງານ ຕ້ອງເສີມຂະຫຍາຍບົດບາດເປັນເສນາທິການໃຫ້ແກ່ຄະນະພັກສູນກາງສະຫະພັນແມ່ຍິງລາວ ໃນການຈັດວາງສັບຊ້ອນ, ເລືອກເຟັ້ນ, ສ້າງແຜນກຳນົດ ແລະ ສັງລວມປະເມີນຄວາມຕ້ອງການໃນສະເພາະໜ້າ ແລະ ຍາວນານ ໃນແຕ່ລະປະເພດພະນັກງານ, ແຕ່ລະຂະແໜງການໃຫ້ລະອຽດຈະແຈ້ງ, ຕ້ອງຄາດຄະເນຄວາມອາດສາມາດມີການປ່ຽນແປງ ແລະ ປັບປຸງລະບົບການຈັດຕັ້ງ, ຄົ້ນຄວ້າປະກອບຄົນໃສ່ວຽກໃຫ້ຖືກຕ້ອງຕາມໜ້າທີ່ວຽກງານວິຊາສະເພາະ ແລະ ຄວາມຊຳນິຊຳນານງານໃນປະສົບການຕົວຈິງ ເພື່ອຮັບປະກັນຄຸນນະພາບ ແລະ ປະສິດທິຜົນຂອງວຽກງານ ໃນສະເພາະໜ້າ ແລະ ຍາວນານ.

ສີ່, ອັນຮີບດ່ວນໃນຕໍ່ໜ້ານີ້ແມ່ນຕ້ອງເອົາໃຈໃສ່ຕິດຕາມ ຊຸກຍູ້, ກວດກາ, ປະເມີນຜົນການປະຕິບັດທິດທາງວຽກງານຈຸດສຸມ 2023-2025 ໃນການສ້າງພະນັກງານນຳພາ-ຄຸ້ມຄອງ ເພດຍິງ ຄວນໄດ້ເຮັດຢ່າງຄົບຊຸດ ຫຼາຍລະດັບ ຫຼາຍວິທີ, ຫຼາຍຮູບການເຊັ່ນ: ກໍ່ສ້າງ, ບຳລຸງກັບທີ່, ກໍ່ສ້າງ ແລະ ບຳລຸງຜ່ານຂະບວນການມະຫາຊົນ, ຂະບວນວຽກງານວິຊາສະເພາະ, ສ້າງຢູ່ຕາມສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ, ລົງສ້າງຢູ່ຮາກຖານ ຕ້ອງຖືວຽກນີ້ເປັນວຽກທີ່ຕ້ອງເຮັດເປັນປົກກະຕິຕໍ່ເນື່ອງ ໃຫ້ສຳເລັດຕາມຄາດໝາຍທີ່ກຳນົດໄວ້.

ສັງລວມແລ້ວ, ການກໍ່ສ້າງ-ບຳລຸງພະນັກງານແມ່ນມີຄວາມສຳຄັນ ແລະ ຈຳເປັນຕໍ່ກັບການພັດທະນາວຽກງານ ໃນເງື່ອນໄຂໃໝ່ ເພາະວ່າຍົກລະດັບພະນັກງານນຳພາ-ຄຸ້ມຄອງ ໃຫ້ມີຄຸນນະພາບຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງນັ້ນ, ກ່ອນອື່ນຄະນະພັກ, ຄະນະນຳຂອງສູນກາງສະຫະພັນແມ່ຍິງລາວ ຕ້ອງກຳແໜ້ນບັນດາແນວທາງຕ່າງໆຂອງພັກທີ່ວາງໄວ້ ໂດຍສະເພາະແນວທາງກ່ຽວກັບວຽກງານພະນັກງານ, ພ້ອມດຽວກັນນັ້ນ, ອົງການເສນາທິການທີ່ເຮັດວຽກງານພະນັກງານໃຫ້ແກ່ຄະນະພັກ ຕ້ອງເປັນເຈົ້າການ ແລະ ຍົກສູງຄວາມຮັບຜິດຊອບ ນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ຖືກຈຸດ, ຖືກເປົ້າໝາຍ ແລະ ຖືກຕາມສະພາບຄວາມເປັນຈິງຂອງແຕ່ລະຂົງເຂດ, ເຮັດໃຫ້ພະນັກງານນຳພາ-ຄຸ້ມຄອງຂອງຕົນ ໄດ້ຮັບການບຳລຸງຍົກລະດັບໃຫ້ດີຂຶ້ນ ແລະ ເປັນກຳລັງແຮງຫຼັກແຫຼ່ງທີ່ເຂັ້ມແຂງ ແລະ ມີຄວາມຮູ້ຄວາມສາມາດພຽບພ້ອມ ເພື່ອນຳພາການຈັດຕັ້ງປະຕິບັດວຽກງານທີ່ພັກ ແລະ ການຈັດຕັ້ງຂອງຕົນມອບໝາຍໃຫ້ມີຜົນສຳເລັດ ແລະ ມີຄຸນນະພາບ...ຯ

ຍົກສູງຄຸນທາດການເມືອງ ໃຫ້ຄູ່ນແຖວ ພະນັກງານ-ສະມາຊິກພັກ ຢູ່ແຂວງຫົວພັນ

ໂດຍ: ແກ້ວຕາ ພັນດານຸວົງ

ໃນກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກ ໄດ້ຕີລາຄາຄືນກ່ຽວກັບການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງຜ່ານມາ ໂດຍຍົກໃຫ້ເຫັນຜົນງານ, ຜົນສຳເລັດ ທີ່ພ້ອມທັງຕີລາຄາໃຫ້ເຫັນບັນດາຈຸດອ່ອນ ແລະ ຂໍ້ຄົງຄ້າງ ທີ່ສະແດງເຖິງສະພາບແນວຄິດ ແລະ ປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຖັນແຖວສະມາຊິກພັກ-ພະນັກງານ ໃນການຈັດຕັ້ງພັກ-ລັດແຕ່ລະຂັ້ນໄລຍະຜ່ານມາວ່າ: ການເສື່ອມຖອຍຄຸນທາດການເມືອງ, ຄຸນສົມບັດ ແລະ ມານະຈິດປະຕິວັດຂອງຖັນແຖວສະມາຊິກພັກ-ພະນັກງານ ຍັງເປັນບັນຫາທີ່ໜ້າເປັນຫ່ວງຂອງພັກ ແລະ ສັງຄົມ, ສືບຕໍ່ສົ່ງຜົນກະທົບຕໍ່ບົດບາດການນຳພາຂອງພັກ ແລະ ລະບອບໃໝ່; ສະມາຊິກພັກ-ພະນັກງານຈຳນວນບໍ່ໜ້ອຍຂາດຄວາມເປັນເຈົ້າໃນການຈັດຕັ້ງປະຕິບັດໜ້າທີ່ ທີ່ຖືກມອບໝາຍ, ນໍ້າໃຈເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມບໍ່ທັນສູງ ແລະ ບໍ່ກ້າຕໍ່ສູ້ຕ້ານກັບທ່າອ່ຽງ ແລະ ປະກົດການຜິດຂອງ; ປະກົດການເລືອກວຽກທີ່ມີຄວາມແອບແຝງດ້ານຜົນປະໂຫຍດກໍ່ຄືປະກົດການສວຍໃຊ້ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ ຍັງມີລັກສະນະແຜ່ລາມທົ່ວໄປ ແລະ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງເຂັ້ມງວດເດັດຂາດ, ສິ່ງເຫຼົ່ານີ້ ພວມເປັນບັນຫາທ້າທາຍຕໍ່ບົດບາດອິດທິພົນຂອງພັກເຮົາ.

ສະນັ້ນ, ບັນຫາຄຸນທາດການເມືອງຂອງພະນັກງານ-ສະມາຊິກພັກແມ່ນປັດໃຈໜຶ່ງທີ່ສຳຄັນ ທັງແມ່ນມາດຕະຖານໜຶ່ງຂອງພະນັກງານສະມາຊິກພັກ ທີ່ຄະນະພັກແຕ່ລະຂັ້ນ ຈະຕ້ອງໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການຍົກສູງຄຸນທາດການເມືອງໃຫ້ພະນັກງານ-ສະມາຊິກພັກຂອງຕົນ ເພາະວ່າຄຸນທາດການເມືອງ ຂອງພະນັກງານໃນໄລຍະໃໝ່ຂອງການປະຕິວັດນີ້, ນອກຈາກມີທັດສະນະຫຼັກໝັ້ນຊົນຊັ້ນ, ການຮູ້ຈຳແນກມິດ-ສັດຕູ ແລະ ມີຄວາມເດັດດ່ຽວໜຽວແໜ້ນຕໍ່ອຸດົມການປະຕິວັດ ແລ້ວຍັງບໍ່ທັນພຽງພໍມັນຍັງຮຽກຮ້ອງໃຫ້ມີຄຸນສົມບັດສິນທຳປະຕິວັດ, ຕ້ອງມີຄວາມຮູ້, ຄວາມສາມາດ, ມີແບບແຜນດຳລົງຊີວິດທີ່ໂປ່ງໃສ, ມີແບບແຜນວິທີເຮັດວຽກ ທີ່ມີວິທະຍາສາດສູງຕິດແທດກັບຕົວຈິງ ແລະ ຕິດພັນຢ່າງຊະໜິດແໜ້ນກັບມະຫາຊົນ. ຫາກຍັງສະແດງເຖິງຄວາມດຸໝັ່ນພາກພຽນ ໃນການຄົ້ນຄວ້າຊອກຮູ້ຮໍ່າຮຽນ, ການຝຶກຝົນຫຼໍ່ຫຼອມຕົນເອງ ເພື່ອຍົກລະດັບຄວາມຮູ້ຄວາມສາມາດ ໃນທຸກດ້ານໃຫ້ສູງຂຶ້ນເລື້ອຍໆ. ພ້ອມນີ້, ກໍ່ຍັງສະແດງອອກໃນການຍົກສູງສະຕິຕໍ່ການຈັດຕັ້ງ, ການປະຕິບັດລະບຽບວິໄນ, ການເຄົາລົບກົດໝາຍຢ່າງເຂັ້ມງວດ, ມີຄວາມຈົງຮັກພັກດີ, ມີຄວາມສາມັກຄີເປັນເອກະພາບພາຍໃນສູງ.

ຕໍ່ກັບຄວາມໝາຍສຳຄັນດັ່ງກ່າວ ຄະນະພັກແຕ່ລະຂັ້ນ ກໍ່ຄືອົງຄະນະພັກແຂວງຫົວພັນ ເວລາໃດກໍ່ເອົາໃຈຍົກສູງຄຸນທາດການເມືອງໃຫ້ແກ່ສະມາຊິກພັກ-ພະນັກງານ ເພາະແມ່ນໜຶ່ງຂອງວຽກງານແນວຄິດຂອງພັກທີ່ຈະຕ້ອງໄດ້ດຳເນີນຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິດ້ວຍຫຼາຍຮູບ, ຫຼາຍແບບ ດ້ວຍການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ຄະນະພັກ, ຖັນແຖວພະນັກງານ-ສະມາຊິກພັກໃຫ້ມີຄວາມຮັບຮູ້, ເຂົ້າໃຈ ແລະ ເຊື່ອມຊຶມຕໍ່ແນວທາງນະໂຍບາຍຂອງພັກ, ກົດລະບຽບພັກ, ລະບຽບການ, ກົດໝາຍຂອງລັດ, ຄົ້ນຄ້ວາ, ຮໍ່າຮຽນບັນດາເອກະສານນິຕິກຳຕ່າງໆ ເປັນຕົ້ນແມ່ນ: ບັນດາຄາດໝາຍສູ້ຊົນຕ່າງໆທີ່ກຳນົດໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກແຂວງຫົວພັນ ແລະ ມະຕິກອງປະຊຸມໃຫຍ່ຂອງຄະນະພັກແຕ່ລະຂັ້ນວາງອອກ. ພ້ອມດຽວກັນນັ້ນ, ກໍ່ໄດ້ເອົາໃຈໃສ່ຄົ້ນຄວ້າພະນັກງານໃນແຜນກຳນົດພະນັກງານຜູ້ທີ່ມີມາດຕະຖານເງື່ອນໄຂຄົບຖ້ວນ ໄດ້ຮັບການຍົກລະດັບຄວາມຮູ້ທາງດ້ານທິດສະດີ ແລະ ວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດທັງໝົດ 947 ສະຫາຍ, ຍິງ 246 ສະຫາຍ ໃນນີ້ ຂັ້ນຕົ້ນ 783 ສະຫາຍ, ຍິງ 209 ສະຫາຍ; ຂັ້ນກາງ 150 ສະຫາຍ, ຍິງ 35 ສະຫາຍ; ຂັ້ນສູງ 14 ສະຫາຍ, ຍິງ 8 ສະຫາຍ ແລະ ຍົກລະດັບວິຊາສະເພາະທັງພາຍໃນ ແລະ ຕ່າງປະເທດ ຈຳນວນ 198 ສະຫາຍ, ຍິງ 48 ສະຫາຍ, ອີກຈຳນວນໜຶ່ງກໍ່ຫັນລົງກໍ່ສ້າງຮາກຖານຕົວຈິງ ເພື່ອເຮັດໃຫ້ເຂົາເຈົ້າຮັບຮູ້ເຂົ້າໃຈວຽກງານຮາກຖານ ແລະ ຕິດພັນກັບຂະບວນການມະຫາຊົນຕົວຈິງ. ຄຽງຄູ່ກັນນັ້ນ,ອົງການທີ່ເຮັດໜ້າທີ່ວຽກງານພັກ-ພະນັກງານແຕ່ລະຂັ້ນກໍ່ໄດ້ເອົາໃຈໃສ່ຕິດຕາມ, ກຳແໜ້ນສະພາບແນວຄວາມຄິດ ແລະ ການເຄື່ອນໄຫວຂອງພະນັກງານ-ສະມາຊິກພັກ ພ້ອມທັງກວດກາ, ຕີລາຄາທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງທີ່ໄດ້ຮັບການມອບໝາຍຢ່າງເປັນປົກກະຕິ ເພື່ອຮັບປະກັນໃຫ້ພະນັກງານ-ສະມາຊິກພັກ ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນບັນດາເຜົ່າ ທັງໄດ້ຮັບຄວາມໄວ້ວາງໃຈຈາກມະຫາຊົນຢ່າງແທ້ຈິງ. ດັ່ງປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: "ຄຸນທາດການເມືອງ, ຄຸນສົມບັດຂອງພະນັກງານທຸກພາກສ່ວນໃນພາລະກິດປ່ຽນແປງໃໝ່ ແມ່ນປະກອບດ້ວຍຫຼັກໝັ້ນການເມືອງໜັກແໜ້ນ ຢຶດໝັ້ນຈຸດໝາຍສັງຄົມນິຍົມຈຳແນກມິດ-ສັດຕູຈະແຈ້ງ ແລະ ເດັດຂາດ, ມີຄວາມຕັ້ງໜ້າຮັບໃຊ້ປະເທດຊາດ, ຮັບໃຊ້ປະຊາຊົນ ມີຄວາມດຸໝັ່ນປະຢັດມັດທະຍັດ, ສັດຊື່ບໍລິສຸດ ແລະ ຄຳເວົ້າຕ້ອງໄປຄຽງຄູ່ກັບການກະທຳ".

ຈາກຄວາມເອົາໃຈໃສ່ຢ່າງຕັ້ງໜ້າຂອງຄະນະພັກແຕ່ລະຂັ້ນ ເຫັນວ່າຫຼາຍໜ່ວຍພັກກໍ່ມີຜົນງານ ແລະ ຜົນສຳເລັດໃນການປະຕິບັດໜ້າທີ່ການເມືອງຂອງຕົນ ສະແດງອອກການປະເມີນເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີ 2023 ຈາກທັງໝົດ 1.090 ໜ່ວຍພັກ, ມີໜ່ວຍພັກທີ່ມີມາດຖານເງື່ອນໄຂຄົບຖ້ວນ ສະເໜີຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ມີ 891 ໜ່ວຍພັກ, ໜ່ວຍພັກກາງ 188 ໜ່ວຍພັກ; ໜ່ວຍພັກອ່ອນ 11 ໜ່ວຍພັກ ກວມ 1%, ໜ່ວຍພັກທີ່ບໍ່ໄດ້ປະເມີນມີ 124 ໜ່ວຍພັກ (ສ່ວນຫຼາຍແມ່ນໜ່ວຍພັກຢູ່ຫ່າງໄກສອກຫຼີກ), ສະມາຊິກພັກທັງໝົດມີ 18.231 ສະຫາຍ, ຍິງ 4.531 ສະຫາຍ; ໃນນັ້ນສະມາຊິກພັກຖືກຕີລາຄາແບ່ງປະເພດໄດ້ ສະມາຊິກພັກປະເພດແຂງ 16.462 ສະຫາຍ, ຍິງ 4.210 ສະຫາຍ; ສະມາຊິກພັກກາງ 1.752

ສະຫາຍ, ຍິງ 321 ສະຫາຍ; ສະມາຊິກພັກອ່ອນ 17 ສະຫາຍ ແລະ ສະມາຊິກພັກບໍ່ໄດ້ປະເມີນ 3.172 ສະຫາຍ, ຍິງ 645 ສະຫາຍ.

ເຖິງຢ່າງໃດກໍ່ຕາມການຍົກສູງຄຸນທາດການເມືອງໃຫ້ພະນັກງານ-ສະມາຊິກພັກຢູ່ແຂວງຫົວພັນ ໄດ້ມີຜົນສຳເລັດຫຼາຍດ້ານກໍ່ຕາມ, ແຕ່ກໍ່ຍັງມີບາງດ້ານທີ່ຈະຕ້ອງສືບຕໍ່ປັບປຸງແກ້ໄຂ ເພື່ອໃຫ້ຕອບສະໜອງກັບໜ້າທີ່ການເມືອງໃນປະຈຸບັນ ເປັນຕົ້ນ:

1. ຄະນະພັກ ຈຳນວນໜຶ່ງ ຍັງຖືເບົາຕໍ່ການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ສະມາຊິກພັກ ເຮັດແບບລວມໆ, ເຮັດຕາມຂະບວນການໃດໜຶ່ງ, ບໍ່ທັນມີຈຸດສຸມລົງເຂົ້າໃສ່ແຕ່ລະເປົ້າໝາຍຢ່າງແທ້ຈິງ; ການສຶກສາອົບຮົມຍັງເນັ້ນໃສ່ແຕ່ທິດສະດີດ້ານດຽວ ຍັງບໍ່ຮູ້ສົມທຽບຢ່າງກົມກຽວ. ຍ້ອນແນວນັ້ນຈຶ່ງເຮັດໃຫ້ພະນັກງານ-ສະມາຊິກພັກຈຳນວນໜຶ່ງເກີດມີການຫັນປ່ຽນແນວຄິດ, ທັດສະນະຫຼັກໝັ້ນການເມືອງບໍ່ສູງ ແລະ ຍັງບໍ່ທັນມີທັດສະນະຕອບຕ້ານຕໍ່ກົນອຸບາຍຂອງກຸ່ມຄົນບໍ່ດີ ທີ່ຫວັງທຳລາຍມ້າງເພລະບອບໃໝ່ຂອງພັກເຮົາ.

2. ຍ້ອນຜົນກະທົບທາງດ້ານກົນໄກເສດຖະກິດຕະຫຼາດພະນັກງານ-ສະມາຊິກພັກຈຳນວນໜຶ່ງຖືເບົາຕໍ່ການຝຶກຝົນຫຼໍ່ຫຼອມຕົນເອງທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມເສຍສະຫຼະເພື່ອຊາດ ແລະ ເພື່ອປະຊາຊົນຫຼຸດໜ້ອຍຖອຍລົງ, ຂາດຄວາມເປັນແບບຢ່າງ, ບໍ່ໜັກແໜ້ນຕໍ່ອຸດົມການຂອງພັກ. ໜັກໄປກວ່ານັ້ນ, ຍັງມີພະນັກງານ-ສະມາຊິກພັກຈຳນວນໜຶ່ງເສື່ອມຄຸນປ່ຽນທາດ, ມານະຈິດປະຕິວັດໄດ້ຫຼຸດລົງ, ສວຍໃຊ້ໜ້າທີ່ຕຳແໜ່ງ, ຖືຜົນປະໂຫຍດສ່ວນຕົວ ເໜືອກວ່າຜົນປະໂຫຍດສ່ວນລວມ, ມີແນວຄິດຈຸ້ມເຈື້ອເຊື້ອສາຍພາໃຫ້ເສຍຄວາມສາມັກຄີພາຍໃນ.

ຄຽງຄູ່ກັບຜົນສຳເລັດ ແລະ ຄວາມເອົາໃຈໃສ່ຂອງຄະນະພັກແຕ່ລະຂັ້ນຢູ່ແຂວງຫົວພັນໃນການຍົກສູງຄຸນທາດການເມືອງໃຫ້ຖັນແຖວສະມາຊິກພັກ-ພະນັກງານ ແລະ ບັນຫາຂໍ້ຄົງຄ້າງທີ່ຕັ້ງຂຶ້ນ ອີງຄະນະພັກແຂວງຫົວພັນຕ້ອງເປັນເຈົ້າການສືບຕໍ່ເອົາໃຈໃສ່ປັບປຸງແກ້ໄຂບາງເນື້ອໃນ ແລະ ວິທີການດັ່ງນີ້:

ໜຶ່ງ, ສ້າງກົນໄກອັນແນ່ນອນ ເພື່ອເປັນການກະຕຸກຊຸກຍູ້, ສົ່ງເສີມໃນຄວາມເປັນແບບຢ່າງນຳໜ້າພາທາງປະພຶດຕົວໄປໃນທາງທີ່ດີຂອງພະນັກງານແຕ່ລະຂັ້ນ ໂດຍສະເພາະແມ່ນຄວາມເປັນແບບຢ່າງຂອງພະນັກງານນຳພາຫຼັກແຫຼ່ງ ເຊິ່ງສະແດງອອກຄື: ມີຄຸນສົມບັດເຫຼື້ອມໃສ, ແບບຢ່າງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເປັນແບບຢ່າງໃນການດຳລົງຊີວິດທີ່ປອດໃສຂາວສະອາດ, ເວົ້າແທ້ທຳຈິງ, ຄຳເວົ້າຕ້ອງໄປຄຽງຄູ່ກັບການກະທຳຕົວຈິງ ໝາຍຄວາມວ່າເວົ້າຖືກຕ້ອງກັບແນວທາງ, ມະຕິຂອງພັກ, ປະຕິບັດຖືກກັບແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດ ປັດໄຈສຳຄັນທີ່ສຸດແມ່ນຕ້ອງເປັນແບບຢ່າງໃນການເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ຂໍ້ກຳນົດ, ກົດໝາຍຂອງລັດວາງອອກຢ່າງເຂັ້ມງວດ ເປັນຕົວແບບໃນການຝຶກຝົນຫຼໍ່ຫຼອມຕົນເອງຢູ່ເລື້ອຍໆ.

ສອງ, ເພີ່ມທະວີການເຄື່ອນໄຫວໂຄສະນາສຶກສາອົບຮົມການເມືອງ-ແນວຄິດ, ທິດສະດີ, ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ທັດສະນະຕ່າງໆຂອງພັກ ໃນແຕ່ລະໄລຍະ, ມະຕິຕ່າງໆ ຂອງສູນກາງພັກ, ໃຫ້ພະນັກງານແຕ່ລະຂັ້ນ ແລະ ກຸ່ມເປົ້າໝາຍຕ່າງໆກຳແໜ້ນ, ເຊື່ອມຊຶມຢ່າງເປັນລະບົບຄົບຊຸດ, ຮັບຮູ້ເຂົ້າໃຈຖືກຕ້ອງເລິກເຊິ່ງ. ການສຶກສາອົບຮົມການເມືອງແນວຄິດ ຄວນເຮັດຫຼາຍຮູບ ຫຼາຍສີ, ຫຼາຍວິທີ

ການ ເພື່ອເຂົ້າໃຫ້ເຖິງແຕ່ລະກຸ່ມເປົ້າໝາຍ ທີ່ແນໃສ່ສຶກສາອົບຮົມແນວຄິດ; ຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານການເມືອງ-ແນວຄິດທິດສະດີ ໃຫ້ມີຄຸນນະພາບກວ່າເກົ່າ, ປັບປຸງເນື້ອໃນ, ຮູບການ ແລະ ວິທີການຂອງການເຄື່ອນໄຫວວຽກງານການເມືອງ-ແນວຄິດ ທິດສະດີ, ເນື້ອໃນໃຫ້ກະຈ່າງແຈ້ງ ແລະ ການແກ້ໄຂບັນຫາທີ່ເກີດຂຶ້ນ ໃນຂະບວນວິວັດແຫ່ງການເຄື່ອນໄຫວນຳພາຂອງພັກແຕ່ລະໄລຍະ, ຄວນສະໜອງຂໍ້ມູນ-ຂ່າວສານ, ເອກະສານຕ່າງໆ ໃຫ້ພຽງພໍ ເພື່ອເປັນທ່າແຮງບ່ອນອີງອັນພື້ນຖານ ໃຫ້ແກ່ການເຄື່ອນໄຫວວຽກງານການເມືອງ-ແນວຄິດ, ທິດສະດີມີປະສິດທິຜົນສູງກວ່າເກົ່າ.

ສາມ, ຄະນະພັກ, ຄະນະນຳ ແຂວງຫົວພັນ ຕ້ອງເພີ່ມທະວີຄວາມໃກ້ຊິດຕິດແທດ ແລະ ຊີ້ນຳບັນດາອົງການທີ່ເປັນເສນາທິການທາງດ້ານການເມືອງ-ແນວຄິດ ແລະ ຂະແໜງການຕ່າງໆທົ່ວແຂວງ ເພື່ອຍົກສູງປະສິດທິຜົນຂອງວຽກງານກໍ່ສ້າງພັກ-ພະນັກງານ, ເອົາໃຈໃສ່ຍົກສູງຄຸນນະພາບວຽກງານສ້າງແຜນກຳນົດ, ຕິດພັນກັບແຜນສ້າງພະນັກງານ. ກ່ອນອື່ນໝົດຕ້ອງບຳລຸງພະນັກງານໃຫ້ມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ, ມີຄວາມຮູ້, ຄວາມສາມາດ ໃຫ້ສົມຄູ່ກັບໜ້າທີ່ການເມືອງໃນແຕ່ລະໄລຍະ ເພື່ອແນໃສ່ກຳແໜ້ນທິດສະດີມາກ-ເລນິນ, ເຂົ້າໃຈແຈ້ງຕໍ່ແນວທາງນະໂຍບາຍຂອງພັກ-ກົດໝາຍຂອງລັດ; ສ້າງທຸກເງື່ອນໄຂໃຫ້ເຂົາເຈົ້າຮູ້ເຮັດວຽກງານ, ຮູ້ຈັກວິທີນຳພາ-ຄຸ້ມຄອງ ທີ່ມີວິທະຍາດສາດ, ຮູ້ວິທີຄົ້ນຄວ້າ, ໄຈ້ແຍກບັນຫາ, ຮູ້ຕີລາຄາສະຫຼຸບສັງລວມບັນຫາ-ແກ້ໄຂບັນຫາໃຫ້ສອດຄ່ອງຖືກຕ້ອງ, ທັນກຳນົດເວລາ. ພ້ອມກັນນັ້ນ, ກໍ່ຕ້ອງເອົາໃຈໃສ່ວຽກງານຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້, ປ້ອງກັນພະນັກງານ-ສະມາຊິກພັກ.

ສີ່, ຕ້ອງມອບຄວາມຮັບຜິດຊອບໃຫ້ແກ່ບັນດາອົງການຈັດຕັ້ງມະຫາຊົນ ແລະ ຊັ້ນຄົນທົ່ວສັງຄົມ, ສະຖາບັນ ແລະ ໂຮງຮຽນ ໄດ້ມີສ່ວນຮ່ວມໃນການສຶກສາອົບຮົມ, ຕິດຕາມ, ກໍ່ສ້າງພະນັກງານ-ສະມາຊິກພັກ ເພື່ອກຳສະພາບການເຄື່ອນໄຫວ ແລະ ສະພາບແນວຄິດພະນັກງານ ເພື່ອຕ້ານ ແລະ ສະກັດກັ້ນແນວຄິດທີ່ຜິດເຂວ, ປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນພາຍໃນການຈັດຕັ້ງ ກໍ່ຄືສັງຄົມ.

ສັງລວມແລ້ວ, ຄຸນທາດການເມືອງຖັນແຖວພະນັກງານ-ສະມາຊິກພັກບໍ່ແມ່ນໄດ້ມາຈາກເງິນ ຫຼື ຍົດຖາບັນດາສັກ, ແຕ່ມັນຕ້ອງຜ່ານການສຶກສາອົບຮົມ, ຜ່ານການຝຶກຝົນຫຼໍ່ຫຼອມຈາກແປວໄຟປະຕິວັດຢ່າງອົດທົນ,ໜຽວແໜ້ນ ຍາວນານສົມຄວນ ທັງມີລັກສະນະຮອບດ້ານຂອງພະນັກງານຜູ້ໜຶ່ງ ແລະ ສຳຄັນແມ່ນຕ້ອງຜ່ານການບຳລຸງ-ກໍ່ສ້າງຢ່າງເປັນລະບົບທາງດ້ານທິດສະດີມາກ-ເລນິນ, ແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ ເພື່ອແນໃສ່ປູກຈິດສຳນຶກ, ຈິດຕະສາດຂອງຖັນແຖວພະນັກງານ-ສະມາຊິກພັກໃຫ້ເກີດມີແນວຄິດຈິດໃຈທີ່ຮັກຊາດ-ຮັກບ້ານເກີດເມືອງນອນພ້ອມເດີມຕາມອຸດົມການສັງຄົມນິຍົມຢ່າງແທ້ຈິງ, ມີຈຸດຢືນທີ່ຖືກຕ້ອງ, ແບບແຜນດຳລົງຊີວິດທີ່ປອດໃສ, ເປັນແບບຢ່າງນຳໜ້າໃຫ້ແກ່ມະຫາຊົນ ທັງມີຄວາມເປັນເອກະພາບຕໍ່ແນວທາງຂອງພັກ, ລະບຽບກົດໝາຍຂອງລັດ ແລະ ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກຢ່າງແທ້ຈິງ...ຯ

ແຂວງໄຊສົມບູນ ສົ່ງເສີມການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ນັບມື້ນັບຫຼາຍຂຶ້ນ

ໂດຍ: ພິດສະໄໝ

ພັກເຮົາໄດ້ຍຶດໝັ້ນການພັດທະນາເສດຖະກິດເປັນໃຈກາງຕິດພັນກັບການພັດທະນາສັງຄົມ ແລະ ປົກຮັກກຮັກສາສິ່ງແວດລ້ອມໄປຕາມທິດພັດທະນາແບບຍືນຍົງ, ດໍາເນີນນະໂຍບາຍສົ່ງເສີມຢ່າງແຂງແຮງກໍາລັງແຮງຂອງທຸກພາກສ່ວນເສດຖະກິດພາຍໃນ ແລະ ຕ່າງປະເທດ, ສ້າງເງື່ອນໄຂທີ່ຈໍາເປັນເພື່ອກະຕຸ້ນການຂະຫຍາຍຕົວຂອງເສດຖະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່ໄປພ້ອມໆກັນ ດ້ວຍການຂຸດຄົ້ນ, ສຸມແຫຼ່ງທຶນຕ່າງໆພ້ອມທັງສຸມພະນັກງານເຂົ້າເຮັດຕົວຈິງ, ດ້ວຍນະໂຍບາຍສົ່ງເສີມເປັນພິເສດ ໂດຍສະເພາະແມ່ນນະໂຍບາຍສົ່ງເສີມການລົງທຶນເປັນຕົ້ນແມ່ນ ❶ນະໂຍບາຍສົ່ງເສີມກິດຈະການຕາມຂະແໜງການ; ❷ນະໂຍບາຍສົ່ງເສີມຕາມເຂດ; ❸ນະໂຍບາຍສົ່ງເສີມດ້ານພາສີ, ສ່ວນເສຍອາກອນ, ດ້ານການນໍາໃຊ້ທີ່ດິນ ແລະ ນະໂຍບາຍອື່ນໆ [1]. ພ້ອມກັນນັ້ນ, ກໍ່ຕ້ອງຮີບຮ້ອນດໍາເນີນການສໍາຫຼວດ, ຈັດສັນ, ວາງແຜນພັດທະນາເຂດການຜະລິດ ແລະ ການບໍລິການແບບມີຈຸດສຸມຕາມບໍລິເວນເຂດແຄ້ວນຕ່າງໆ ໂດຍສະເພາະໃນບໍລິເວນທີ່ມີພື້ນຖານໂຄງລ່າງສະດວກ ແລະ ເຂົ້າເຖິງຕະຫຼາດງ່າຍ ຕາມແລວເສດຖະກິດຕົ້ນຕໍ ເໜືອ-ໃຕ້ ແລະ ຕາເວັນອອກ-ຕາເວັນຕົກ, ພ້ອມທັງສູ້ຊົນບັນລຸການຕົກລົງທະວີພາຄີ ທີ່ຮັບປະກັນໃຫ້ບັນດາສິນຄ້າຫຼັກໆຂອງປະເທດເຮົາມີຕະຫຼາດທີ່ໝັ້ນຄົງ ເວົ້າລວມແລ້ວ ແມ່ນການເປີດກວ້າງການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນອັນສໍາຄັນ ແລະ ຈໍາເປັນເຂົ້າໃນການສ້າງ ແລະ ພັດທະນາປະເທດຊາດຕາມທິດສີຂຽວ ແລະ ຍືນຍົງ.

ການລົງທຶນພາຍໃນ ແລະ ຕ່າງປະເທດ ມີບົດບາດ ແລະ ຄວາມສໍາຄັນຕໍ່ການພັດທະນາເສດຖະກິດ-ສັງຄົມເປັນຢ່າງຍິ່ງ ໂດຍສຸມໃສ່ແກ້ໄຂຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າທີ່ຕິດພັນກັບແນວທາງນະໂຍບາຍຂອງພັກ ແລະ ມາດຕະການສົ່ງເສີມເປັນພິເສດໃນການລົງທຶນຂອງພາກສ່ວນຕ່າງໆ ເວົ້າລວມເວົ້າສະເພາະ ເປີດກວ້າງຮ່ວມມືກັບຕ່າງປະເທດ ແລະ ເຊື່ອມໂຍງທາງດ້ານເສດຖະກິດໃນຂອບເຂດທົ່ວໂລກ ເຊິ່ງພັກ-ລັດເຮົາມີນະໂຍບາຍວ່າ: "ສ້າງການຫັນປ່ຽນອັນເປັນພື້ນຖານ ແລະ ແຂງແຮງ ໃນການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ໃຫ້ມີຄວາມໂປ່ງໃສ, ວ່ອງໄວ, ໂລ່ງລ່ຽນ ແລະ ເປັນລະບົບຮັດກຸມ"[2] ແມ່ນທ່າອ່ຽງພາວະວິໄສທີ່ເຮັດໃຫ້ເສດຖະກິດປະເທດເຮົາມີຄວາມເຂັ້ມແຂງ ແລະ ນໍາພາປະເທດຊາດຫຼຸດພົ້ນອອກຈາກຄວາມທຸກຍາກຕາມແນວທາງນະໂຍບາຍທີ່ວາງໄວ້, ເຊິ່ງລັດເຮົາມີນະໂຍບາຍທີ່ວ່າ: "ລັດສົ່ງເສີມການລົງທຶນທຸກພາກສ່ວນເສດຖະກິດທັງພາຍໃນ ແລະ

---

[1] ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ປັບປຸງໃໝ່), ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016, ມາດຕາ 8 ໜ້າ 5.

[2] ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ປີ 2021, ໜ້າ 61-62.

ຕ່າງປະເທດ ດ້ວຍການວາງນະໂຍບາຍ ເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂອໍານວຍຄວາມສະດວກຕ່າງໆ ເປັນຕົ້ນແມ່ນການສ້າງພື້ນຖານໂຄງລ່າງ, ການສະໜອງຂໍ້ມູນຂ່າວສານທີ່ຈໍາເປັນ, ການໃຫ້ນະໂຍບາຍດ້ານພາສີ, ສ່ວຍສາອາກອນ, ດ້ານແຮງງານ, ການໃຫ້ທິດນໍາໃຊ້ທີ່ດິນ, ການເຂົ້າເຖິງແຫຼ່ງທຶນ, ການປະຕິບັດຄວາມສະເໝີພາບລວມທັງການຮັບຮູ້, ການປົກປ້ອງກໍາມະສິດກ່ຽວກັບສິດນໍາໃຊ້, ສິດໄດ້ຮັບໝາກຜົນ, ສິດສືບທອດ, ສິດໂອນ ແລະ ສິດອື່ນໆທີ່ກົດໝາຍກໍານົດໄວ້"(3).

ໃນການພັດທະນາ ແລະ ມີການລົງທຶນພາຍໃນ ແລະ ຕ່າງປະເທດຫຼາຍສົມຄວນ, ຈາກສະພາບເງື່ອນໄຂ, ທ່າແຮງດັ່ງກ່າວນັ້ນ. ອົງຄະນະພັກແຂວງໄຊສົມບູນ ກາຍເປັນສິນຄ້າ ຕິດພັນກັບການປຸງແຕ່ງ, ນໍາໃຊ້ທຸກພາກສ່ວນເສດຖະກິດເຂົ້າຮ່ວມໃນການແກ້ໄຂຄວາມທຸກຍາກ ດ້ວຍການປຸກລະດົມຂົນຂວາຍດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນພັດທະນາໃຫ້ເພີ່ມຂຶ້ນ ຕາມດໍາລັດ 414/ລບ ວ່າດ້ວຍນະໂຍບາຍການພັດທະນາເສດຖະກິດແຂວງໄຊສົມບູນ ໂດຍສຸມໃສ່ 5 ທ່າແຮງ ຕາມທິດຫັນເປັນອຸດສາຫະກໍາ ແລະ ທັນສະໄໝ, ສີຂຽວ, ສະອາດ ແລະ ຍືນຍົງເປັນມິດກັບສິ່ງແວດລ້ອມ.

ແຂວງໄຊສົມບູນ ເປັນແຂວງໜຶ່ງໃນ 18 ແຂວງ ຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເຊິ່ງມີທີ່ຕັ້ງຢູ່ພາກກາງຂອງປະເທດ ຫ່າງຈາກນະຄອນ

ໄດ້ວາງທິດທາງຄາດໝາຍກ່ຽວກັບການສົ່ງເສີມການລົງທຶນ ໂດຍກໍານົດໃນມະຕິ ຄັ້ງທີ I ຂອງອົງຄະນະພັກແຂວງໄຊສົມບູນ ໄວ້ວ່າ: ຖືເອົາການພັດທະນາເສດຖະກິດເປັນໃຈກາງ, ຍູ້ແຮງການຜະລິດໃຫ້ຂະຫຍາຍຕົວ ຫຼວງວຽງຈັນໄປທາງທິດຕາເວັນອອກສ່ຽງເໜືອປະມານ 250 ກິໂລແມັດ ແລະ ເປັນແຂວງດຽວໃນປະເທດທີ່ບໍ່ມີຂອບເຂດຊາຍແດນເຊື່ອມຈອດກັບຕ່າງປະເທດ, ມີເນື້ອທີ່ທັງໝົດ 8.500 ກິໂລຕາແມັດ, ມີພົນລະເມືອງ

(3) ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ປັບປຸງໃໝ່), ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016, ມາດຕາ 2 ໜ້າ 1

ທັງໝົດ 102.454 ຄົນ, ຍິງ 50.127 ຄົນ, ມີ 89 ບ້ານ, ມີ 18.371 ຄອບຄົວ ແລະ ມີ 11 ຊົນເຜົ່າ.

ໄລຍະຜ່ານມາຄະນະພັກ, ຄະນະນໍາ ແລະ ອົງການປົກຄອງຂັ້ນຕ່າງໆຂອງແຂວງໄຊສົມບູນ ໄດ້ເອົາໃຈໃສ່ນໍາພາ-ຊີ້ນໍາ ແລະ ຈັດຕັ້ງຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ-ລັດ ໃນແຕ່ລະໄລຍະ ໂດຍສະເພາະແມ່ນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ I ຂອງອົງຄະນະພັກແຂວງໄຊສົມບູນ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ເຂົ້າສູ່ລວງເລິກ, ແທດຕົວຈິງ ເພື່ອສ້າງການຫັນປ່ຽນອັນເປັນພື້ນຖານຢ່າງແຂງແຮງໃນການສົ່ງເສີມ ແລະ ດຶງດູດນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນພັດທະນາຢູ່ແຂວງນັບມື້ນັບຫຼາຍຂຶ້ນ ໂດຍສະເພາະການລົງທຶນໃສ່ຂະແໜງທີ່ເປັນທ່າແຮງ ເປັນຕົ້ນ: ຂະແໜງໄຟຟ້າ, ບໍ່ແຮ່, ກະສິກໍາ, ການທ່ອງທ່ຽວ ເຮັດໃຫ້ເສດຖະກິດຂອງແຂວງ ໂດຍລວມຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ດ້ວຍອັດຕາສະເລ່ຍ 6,99% ຕໍ່ປີ, ລວມຍອດຜະລິດຕະພັນພາຍໃນ (GDP) ສະເລ່ຍໃສ່ຫົວຄົນບັນລຸໄດ້ 11.108.816 ກີບ ຫຼື ເທົ່າກັບ 1.377 ໂດລາສະຫະລັດ ຕໍ່ຄົນຕໍ່ປີ. ການລົງທຶນຂອງແຂວງໄຊສົມບູນ ເຫັນວ່າ ເສດຖະກິດຂອງແຂວງໂດຍລວມຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ເຊິ່ງສະແດງອອກໃນບາງຂົງເຂດວຽກງານດັ່ງນີ້:

1. ວຽກງານລົງທຶນ: ໄດ້ຮັບໂຄງການລົງທຶນຂອງລັດທັງໝົດ 202 ໂຄງການ, ມູນຄ່າ 3.542,66 ຕື້ກີບ ເຊິ່ງບັນດາໂຄງການລົງທຶນດັ່ງກ່າວ ຫຼາຍໂຄງການໄດ້ຮັບການຈັດຕັ້ງປະຕິບັດສໍາເລັດຕາມແຜນການ; ການລົງທຶນ ຂອງເອກະຊົນພາຍໃນ ແລະ ຕ່າງປະເທດມີທັງໝົດ 52 ໂຄງການ, ມູນຄ່າ 3.411,68 ຕື້ກີບ (ຂັ້ນແຂວງຄຸ້ມຄອງ 31 ໂຄງການ, ຂັ້ນສູນກາງຄຸ້ມຄອງ 21 ໂຄງການ). ໃນນັ້ນ, ແຂວງໄດ້ອະນຸຍາດເຊັນ MOU ສຶກສາສໍາຫຼວດ 12 ໂຄງການ (ຂະແໜງກະສິກໍາ 3 ໂຄງການ, ພະລັງງານ-ບໍ່ແຮ່ 6 ໂຄງການ, ບໍລິການ-ທ່ອງທ່ຽວ 3 ໂຄງການ). ນອກຈາກນັ້ນ ຍັງໄດ້ຂົນຂວາຍ ແລະ ຍາດແຍ່ງການຊ່ວຍເຫຼືອ ເພື່ອການພັດທະນາ 14 ໂຄງການ, ມູນຄ່າ 2.105.413 ໂດລາສະຫະລັດ.

2. ວຽກງານກະສິກໍາ-ປ່າໄມ້: ຕະຫຼອດຊຸມປີຜ່ານມາວຽກງານກະສິກໍາ-ປ່າໄມ້ ໄດ້ມີບາດກ້າວຂະຫຍາຍຕົວຢ່າງຕໍ່ເນື່ອງ, ອັນສໍາຄັນແມ່ນໄດ້ຄ່ອຍໆຫັນຮູບແບບການຜະລິດກະສິກໍາແບບທໍາມະຊາດ ກ້າວສູ່ການຜະລິດ ແບບເຕັກນິກວິຊາການເທື່ອລະກ້າວ, ໂຄງລ່າງພື້ນຖານທາງດ້ານກະສິກໍາ ໄດ້ຮັບການປັບປຸງ, ພັດທະນາດີຂຶ້ນ. ເປັນຕົ້ນ: ລະບົບຊົນລະປະທານ, ອ່າງເກັບນໍ້າ, ສູນບໍລິການດ້ານເຕັກນິກ-ແນວພັນ ສາມາດຕອບສະໜອງການຜະລິດກະສິກໍາຂອງປະຊາຊົນໄດ້ດີຂຶ້ນເປັນລໍາດັບ, ເຮັດໃຫ້ແຂວງໄຊສົມບູນ ສາມາດຜະລິດສະບຽງອາຫານ ສະໜອງພາຍໃນ ແລະ ຕ່າງແຂວງໄດ້ຈໍານວນໜຶ່ງ. ປະຈຸບັນ ທົ່ວແຂວງມີເນື້ອທີ່ປູກເຂົ້າທັງໝົດ 11.783,6 ເຮັກຕາ, ສະເລ່ຍສະມັດຕະພາບໄດ້ 2,48 ໂຕນ/ເຮັກຕາ, ສະເລ່ຍເຂົ້າກິນໃສ່ຫົວຄົນ ໄດ້ 364 ກິໂລຕໍ່ຄົນຕໍ່ປີ; ມີສັດລ້ຽງທັງໝົດ 340.529 ໂຕ, ທຽບໃສ່ແຜນການ 5 ປີ ປະຕິບັດໄດ້ 71,15%. ນອກນັ້ນ ຍັງໄດ້ຊຸກຍູ້, ສົ່ງເສີມການຜະລິດກະສິກໍາເປັນສິນຄ້າ, ອັນພົ້ນເດັ່ນແມ່ນການປູກຢາງພາລາສ້າງລາຍຮັບໄດ້ 180 ຕື້ກວ່າກີບ, ມັນຕົ້ນ 22,36 ຕື້ກີບ, ໝາກກ້ຽງ ສ້າງລາຍຮັບໄດ້ 7,09 ຕື້ກີບ, ສາລີແຂງປ້ອນໂຮງງານ 3,87 ຕື້ກີບ; ໄດ້ສົ່ງເສີມຄອບຄົວຕົວແບບດ້ານການລ້ຽງສັດ ແລະ ປູກພືດອາຫານສັດ ມີ 19 ຄອບຄົວ ແລະ 3 ກຸ່ມລ້ຽງສັດ. ໃນນີ້: ຄອບຄົວຕົວແບບລ້ຽງສັດໃຫຍ່ (ງົວ, ຄວາຍ) ມີ 6 ຄອບຄົວ, ລ້ຽງໄກ່ພັນໄຂ່ 4 ຄອບຄົວ, ລ້ຽງປາ 5 ຄອບຄົວ, ປູກຫຍ້າພັນລູຊີ່ 4 ຄອບຄົວ, ກຸ່ມລ້ຽງໝູພັນ ມີ 1

ກຸ່ມ ຈໍານວນ 5 ຄອບຄົວ ຢູ່ຈຸດສຸມ 516, ກຸ່ມລ້ຽງງົວ ມີ 2 ກຸ່ມ (ບ້ານອອມ 72 ຄອບຄົວ, ບ້ານກໍາໄຮ 33 ຄອບຄົວ). ສົ່ງເສີມການຟື້ນຟູປ່າ ຕິດພັນກັບການສົ່ງເສີມການປູກຕົ້ນໄມ້ທີ່ເປັນເສດຖະກິດໃຫ້ເພີ່ມຂຶ້ນ.

3. ວຽກງານອຸດສາຫະກໍາ ແລະ ການຄ້າ: ໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ສົ່ງເສີມວຽກງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາຢ່າງຕັ້ງໜ້າ. ປະຈຸບັນ ມີໂຮງງານປຸງແຕ່ງທັງໝົດ 241 ໂຮງງານ, ລວມຍອດມູນຄ່າຜະລິດຕະພັນອຸດສາຫະກໍາປຸງແຕ່ງບັນລຸໄດ້ 54,72 ຕື້ກີບ, ທຽບໃສ່ແຜນການ 5 ປີ ປະຕິບັດໄດ້ 78,3%. ທົ່ວແຂວງມີ 7 ກຸ່ມຫັດຖະກໍາ (ຫັດຖະກໍາຈັກສານ 2 ກຸ່ມ, ຕໍ່າຫູກ-ທໍ່ໄໝ 5 ກຸ່ມ), ລວມຍອດມູນຄ່າຜະລິດຕະພັນບັນລຸໄດ້ 25,17 ຕື້ກີບ, ທຽບໃສ່ແຜນການ 5 ປີ ລື່ນແຜນການ 1,3%. ໄດ້ເອົາໃຈໃສ່ຊຸກຍູ້ພັດທະນາຕະຫຼາດເພື່ອຮອງຮັບການຊື້-ຂາຍ, ການຜະລິດ ແລະ ການຈໍລະຈອນສິນຄ້າຂອງປະຊາຊົນ, ເຊິ່ງທົ່ວແຂວງມີຕະຫຼາດໃຫຍ່-ນ້ອຍທັງໝົດ 14 ແຫ່ງ. ມູນຄ່າການນໍາເຂົ້າສິນຄ້າແຕ່ປີ 2016-2019 ມີຈໍານວນ 12.501.175 ໂດລາສະຫະລັດ, ມູນຄ່າສົ່ງອອກ 1.571.493,24 ໂດລາສະຫະລັດ, ຂາດດຸນ 10.292.681,76 ໂດລາສະຫະລັດ ເທົ່າກັບ 87,42% (ຂາດດຸນຍ້ອນບໍ່ລວມມູນຄ່າສົ່ງອອກແຮ່ທາດ ໃນປີ 2016-2017 ຈຶ່ງເຮັດໃຫ້ມູນຄ່າສົ່ງອອກຫຼຸດລົງ). ບັນດາວິສາຫະກິດຂະໜາດນ້ອຍ, ຂະໜາດກາງນັບມື້ເພີ່ມຂຶ້ນ, ທົ່ວແຂວງມີຫົວໜ່ວຍວິສາຫະກິດທັງໝົດ 1.257 ຫົວໜ່ວຍ. ນອກຈາກນັ້ນ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ໃນການຄຸ້ມຄອງການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ຕາມຄໍາສັ່ງເລກທີ 15/ນຍ ຢ່າງເຂັ້ມງວດ ໄປພ້ອມກັບການດັດສົມ-ປັບປຸງໂຮງເລື່ອຍ, ໂຮງງານປຸງແຕ່ງໄມ້ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

4. ວຽກງານການເງິນ: ໄດ້ເອົາໃຈໃສ່ພັດທະນາວຽກງານການເງິນ ໃຫ້ເຕີບໃຫຍ່, ເຂັ້ມແຂງ ສາມາດຈັດຕັ້ງປະຕິບັດການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍງົບປະມານໃນແຕ່ລະປີຢ່າງມີປະສິດທິພາບ, ເຮັດໃຫ້ສະພາບການເງິນງົບປະມານຂອງແຂວງມີສະຖຽນລະພາບ, ມີຄວາມໝັ້ນຄົງ, ສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການ ໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງໃນລະດັບໃດໜຶ່ງທີ່ແນ່ນອນ, ການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ເຖິງວ່າເສດຖະກິດ-ການເງິນມີຄວາມຫຍຸ້ງຍາກ ແຕ່ສາມາດຈັດເກັບລາຍຮັບໄດ້ 411,79 ຕື້ກີບ, ເທົ່າກັບ 91,19% ຕາມແຜນການທີ່ກະຊວງການເງິນແຈ້ງໃຫ້, ລື່ນຄາດໝາຍ 4 ປີຊ້ອນ, ທຽບໃສ່ມະຕິກອງປະຊຸມຕົວແທນສະມາຊິກພັກແຂວງ ເທົ່າກັບ 184%. ການຄຸ້ມຄອງດ້ານລາຍຈ່າຍງົບປະມານ ປະຕິບັດຕາມແຜນການສະພາປະຊາຊົນແຂວງຮັບຮອງ ຈໍານວນ 1.192,66 ຕື້ກີບ ເທົ່າກັບ 88,85 ຕື້ກີບ ຂອງແຜນການ 5 ປີ; ໄດ້ຮັບການດຸ່ນດ່ຽງຈາກສູນກາງ 885,84 ຕື້ກີບ, ເທົ່າກັບ 109,50% ຂອງແຜນການ 5 ປີ.

5. ວຽກງານພະລັງງານ-ບໍ່ແຮ່: ເປັນຂະແໜງການໜຶ່ງທີ່ສໍາຄັນ ຕໍ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ ເຊິ່ງໄດ້ສ້າງລາຍຮັບໃຫ້ແກ່ແຂວງ ແລະ ສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນບັນດາເຜົ່າ ເປັນຈໍານວນບໍ່ໜ້ອຍ, ໃນ 5 ປີ ຜ່ານມາ ລັດຖະບານໄດ້ອະນຸຍາດໃຫ້ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ມາລົງທຶນພັດທະນາເຂື່ອນໄຟຟ້າຂະໜາດໜ້ອຍ, ຂະໜາດກາງ, ຂະໜາດໃຫຍ່ລວມທັງໝົດມີ 28 ໂຄງການ. ໃນນີ້: ເຂື່ອນທີ່ກໍ່ສ້າງສໍາເລັດ ແລະ ຜະລິດໄຟແລ້ວ 10 ເຂື່ອນ, ກໍາລັງກໍ່ສ້າງ 3 ເຂື່ອນ, ເຊັນສັນຍາພັດທະນາ 5 ເຂື່ອນ, ກໍາລັງສຶກສາສໍາຫຼວດເບື້ອງຕົ້ນ 10 ເຂື່ອນ; ໄດ້ຂະຫຍາຍຕາໜ່າງໄຟຟ້າລົງສູ່ຊົນນະບົດ ເພື່ອເຮັດໃຫ້ປະຊາຊົນໄດ້ຊົມໃຊ້ໄຟຟ້າບັນລຸໄດ້ 94% ຂອງຄົວເຮືອນ. ມີຫົວໜ່ວຍກິດຈະການທີ່ໄດ້ຮັບການອະນຸຍາດຂຸດຄົ້ນ-ສໍາຫຼວດ, ປຸງແຕ່ງແຮ່ທາດທັງໝົດ 17

ບໍລິສັດ, ມີ 23 ກິດຈະການ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ ກໍ່ຍັງມີບາງບັນຫາທີ່ຕັ້ງຂຶ້ນ ແລະ ຄວນປັບປຸງແກ້ໄຂບາງບັນຫາດັ່ງນີ້:

1. ບົດບາດຄຸ້ມຄອງລັດຕໍ່ວຽກງານສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ຍັງບໍ່ທັນໄດ້ຮັບການຍົກສູງ ແລະ ເສີມຂະຫຍາຍຢ່າງກວ້າງຂວາງເທົ່າທີ່ຄວນ, ການເພີ່ມທະວີການໂຄສະນາ-ສຶກສາອົບຮົມການເມືອງ-ແນວຄິດໃຫ້ຖັນແຖວພະນັກງານ ແລະ ນັກລົງທຶນ ເຖິງແມ່ນວ່າໄດ້ຈັດຕັ້ງປະຕິບັດ ແຕ່ຖ້າທຽບໃສ່ໃນໄລຍະໃໝ່ ແມ່ນຍັງບໍ່ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການ ສ່ວນຫຼາຍຍັງເອື່ອຍອີງໃສ່ແຕ່ການຈັດຕັ້ງຂັ້ນເທິງ.

2. ການຄຸ້ມຄອງມະຫາພາກໃນແຕ່ລະຂັ້ນ, ຂະແໜງການຍັງບໍ່ທັນເປັນເອກະພາບ, ເຮັດໃຫ້ນັກລົງທຶນ ເກີດມີຄວາມສັບສົນ ເກີດມີຊ່ອງຫວ່າງໃນການສວຍໂອກາດໃນທາງທີ່ຜິດຕໍ່ລະບຽບກົດໝາຍ ແລະ ຍັງມີຫຼາຍໂຄງການ ທີ່ສະແຫວງຫາແຕ່ຜົນປະໂຫຍດບໍ່ຄຳນຶງເຖິງຜົນກະທົບໄລຍະຍາວ ກໍ່ຄືຜົນກະທົບຕໍ່ປະຊາຊົນ ແລະ ສິ່ງແວດລ້ອມ ໂດຍສະເພາະແມ່ນການນຳໃຊ້ສານເຄມີຕ່າງໆ ເຊິ່ງເຮັດໃຫ້ສົ່ງຜົນກະທົບຕໍ່ປະຊາຊົນ ແລະ ຕໍ່ສິ່ງແວດລ້ອມອ້ອມຂ້າງ.

3. ຕ້ອງເພີ່ມທະວີການຄຸ້ມຄອງການລົງທຶນໂດຍຜ່ານປະຕູດຽວ ເພື່ອເຮັດໃຫ້ຂັ້ນຕອນອະນຸມັດລົງທຶນມີຄວາມສະດວກ, ວ່ອງໄວ. ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍການລົງທຶນ ໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະ ເທດ, ໃຫ້ບັນດາໂຄງການຂອງຕ່າງປະເທດ ແລະ ບັນດາບໍລິສັດຕ່າງປະເທດຢ່າງທົ່ວເຖິງ, ກວ້າງຂວາງ ໂດຍຜ່ານສື່ສັງຄົມອອນລາຍ.

4. ສ້າງກົດໝາຍວ່າດ້ວຍການລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມເພື່ອສະດວກໃຫ້ແກ່ການຄຸ້ມຄອງການລົງທຶນ, ຄວນມີກົນໄກຄຸ້ມຄອງປະສານງານໃນການປະຕິບັດການສົ່ງເສີມການລົງທຶນ ແລະ ການປະຕິບັດຕາມສັນຍາຢ່າງເຂັ້ມງວດ ເພື່ອບໍ່ໃຫ້ນັກລົງທຶນສວຍໂອກາດ, ສວຍໃຊ້ເປັນເຄື່ອງມືກະທຳຜິດທາງທຸລະກິດ, ເພີ່ມທະວີການຕິດຕາມ, ກວດກາ, ປະເມີນຜົນຢ່າງເຂັ້ມງວດ ແລະ ມີຄວາມສັກສິດ.

ເພື່ອເຮັດໃຫ້ການສົ່ງເສີມລົງທຶນທັງພາຍໃນ ແລະ ຕ່າງປະເທດ ຢູ່ແຂວງໄຊສົມບູນ ໄດ້ຮັບໝາກຜົນ, ມີຄຸນນະພາບ ແລະ ຮັບປະກັນການພັດທະນາ ໂດຍສຸມໃສ່ 5 ທ່າແຮງຂອງແຂວງ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ສີຂຽວ, ສະອາດ ແລະ ຍືນຍົງ ເປັນມິດກັບສິ່ງແວດລ້ອມ, ໄປພ້ອມກັບການເພີ່ມທະວີປັບປຸງກົນໄກການ ຄຸ້ມຄອງ ແລະ ສົ່ງເສີມການລົງທຶນ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ໂປ່ງໃສນັ້ນ ຕາມທັດສະນະຂອງຜູ້ຂຽນ ແມ່ນຄວນເອົາໃຈໃສ່ພັດທະນາບາງຂະແໜງການດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ, ຊຸກຍູ້ໂຄງການລົງທຶນພັດທະນາຂອງລັດທີ່ໄດ້ຮັບອະນຸຍາດແລ້ວ, ໂຄງການລົງທຶນ ຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດ, ໂຄງການກູ້ຢືມ, ໂຄງການຊ່ວຍເຫຼືອລ້າໃຫ້ຈັດຕັ້ງປະຕິບັດຖືກຕ້ອງ, ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ສຳເລັດຕາມແຜນການທີ່ວາງໄວ້.

2. ສືບຕໍ່ພັດທະນາຂະແໜງກະສິກຳ-ປ່າໄມ້ໃຫ້ເຕີບໃຫຍ່ຂະຫຍາຍຕົວ ໂດຍສຸມໃສ່ຊຸກຍູ້, ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານພາຍໃນແຂວງໃຫ້ພຽງພໍ ຕາມທິດພັດທະນາກະສິກຳສະອາດ, ປອດໄພ ແລະ ຍືນຍົງ ບົນພື້ນຖານຫັນເປັນອຸດສາຫະກຳ-ທັນສະໄໝເທື່ອລະກ້າວ ໂດຍສະເພາະແມ່ນການປູກ, ການລ້ຽງ ເປັນຕົ້ນ: ການປູກພືດຜັກ, ລ້ຽງສັດໃຫຍ່ທີ່ເປັນມູນເຊື້ອ, ທ່າແຮງຂອງປະຊາຊົນ ດ້ວຍການນຳໃຊ້ເຕັກນິກ, ວິທີການໃໝ່ໆເຂົ້າໃສ່ ເພື່ອສ້າງມູນຄ່າ

ເພີ່ມໃຫ້ຜົນຜະລິດ ແລະ ຫັນປ່ຽນວິທີການຜະລິດແບບເກົ່າຂອງປະຊາຊົນ ໄປສູ່ອັນໃໝ່ ຕິດພັນກັບການຊຸກຍູ້ສົ່ງເສີມຕະຫຼາດຈຳໜ່າຍສິນຄ້າ, ໄປພ້ອມກັບການກຳນົດເຂດການຜະລິດ, ຈັດສັນພູມລຳເນົາ-ອາຊີບຄົງທີ່ໃຫ້ແກ່ປະຊາຊົນ, ສົ່ງເສີມການສ້າງສູນຄົ້ນຄວ້າ ແລະ ພັດທະນາກະສິກຳໃຫ້ເປັນລະບົບ, ເຂັ້ມແຂງ ແລະ ຍືນຍົງ.

3. ສືບຕໍ່ຄຸ້ມຄອງ ແລະ ສົ່ງເສີມພັດທະນາວຽກງານອຸດສາຫະກຳ ແລະ ການຄ້າໃຫ້ເຕີບໃຫຍ່ຂະຫຍາຍຕົວ ເຂັ້ມແຂງທາງດ້ານປະລິມານ ແລະ ຄຸນນະພາບ ໂດຍການສົ່ງເສີມການຄ້າ, ການລົງທຶນໃຫ້ຫຼາຍຂຶ້ນ ຕາມທິດຫັນເປັນອຸດສາຫະກຳ-ທັນສະໄໝ, ສີຂຽວ ແລະ ຍືນຍົງ ໄປພ້ອມກັບການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ການຄ້າ-ການບໍລິການ.

4. ສືບຕໍ່ຈັດຕັ້ງປະຕິບັດການຈັດເກັບລາຍຮັບເຂົ້າງົບປະມານໃຫ້ເພີ່ມຂຶ້ນແຕ່ລະປີ ສາມາດກຸ້ມຕົນເອງທາງດ້ານເງິນເດືອນ ແລະ ເງິນບໍລິຫານ ໂດຍການຊອກຄົ້ນທຸກທ່າແຮງບົ່ມຊ້ອນ ແລະ ການສ້າງຖານລາຍຮັບທີ່ໝັ້ນຄົງ ແລະ ຍືນຍົງ; ເອົາໃຈໃສ່ຄຸ້ມຄອງລາຍຈ່າຍງົບປະມານ ໃຫ້ມີປະສິດທິພາບ, ປະຢັດ ແລະ ຖືກຕ້ອງຕາມກົດໝາຍ ຢ່າງເຂັ້ມງວດ.

5. ສຸມໃສ່ຊຸກຍູ້ພັດທະນາກໍ່ສ້າງໂຄງລ່າງພື້ນຖານທາງດ້ານເສັ້ນທາງຄົມມະນາຄົມ ເພື່ອເຊື່ອມຈອດແລວເສດຖະກິດເໜືອ-ໃຕ້, ຕາເວັນອອກ-ຕາເວັນຕົກຜ່ານແຂວງໄຊສົມບູນ, ຕິດພັນກັບການເຊື່ອມໂຍງເສດຖະກິດ ກັບບັນດາແຂວງໃກ້ຄຽງ.

6. ເພີ່ມທະວີການຄຸ້ມຄອງ ແລະ ຊຸກຍູ້ການພັດທະນາໄຟຟ້າພະລັງງານນໍ້າ ແລະ ພະລັງງານທົດແທນອື່ນໆ ເຊັ່ນ: ພະລັງງານແສງຕາເວັນ, ພະລັງງານຈາກຊີວະພາບ, ຊີວະມວນ ແລະ ພະລັງງານທາງເລືອກອື່ນໆ; ສືບຕໍ່ກໍ່ສ້າງ ແລະ ຂະຫຍາຍສາຍສົ່ງໄຟຟ້າ ເພື່ອສະໜອງກະແສໄຟຟ້າ ແກ່ປະຊາຊົນໄດ້ຊົມໃຊ້ໃຫ້ໄດ້ 100% ຂອງຄົວເຮືອນ ຊົມໃຊ້ໄຟຟ້າ; ຊຸກຍູ້ການກໍ່ສ້າງເຂື່ອນໄຟຟ້ານໍ້າຕົກຈຳນວນ 7 ແຫ່ງ ແລະ ໂຄງການພະລັງງານໄຟຟ້າແສງຕາເວັນ ຢູ່ຈຸດສຸມໂພນສະຫວາດໃຫ້ສຳເລັດ.

7. ຈັດຕັ້ງຜັນຂະຫຍາຍແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບ ຮອບດ້ານຂອງແຂວງ ເພື່ອສະດວກໃນການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີປະສິດທິພາບດີຂຶ້ນກວ່າເກົ່າ ແລະ ຖືກຕ້ອງຕາມກົດໝາຍ, ລະບຽບການ ເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງໃນໄລຍະໃໝ່ເປັນຕົ້ນ: ການກຳນົດເຂດທີ່ຢູ່ອາໄສ, ເຂດກະສິກຳ, ເຂດອຸດສາຫະກຳ ແລະ ເຂດ ອື່ນໆ.

ເວົ້າລວມແລ້ວ, ການສົ່ງເສີມການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ຢູ່ແຂວງໄຊສົມບູນ ແມ່ນການຫັນແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ລະບຽບກົດໝາຍຂອງພັກ-ລັດ ຕາມທິດ 3 ສ້າງຄື: ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາໃຫ້ປາກົດຜົນເປັນຈິງ ເພື່ອຮັບປະກັນການພັດທະນາອຸດສາຫະກຳ ແລະ ທັນສະໄໝ, ສີຂຽວ, ສະອາດ ແລະ ຍືນຍົງ ເປັນມິດກັບສິ່ງແວດລ້ອມ ໂດຍສະເພາະການບຸກທະລຸແກ້ໄຂຄວາມທຸກຍາກ ຂອງປະຊາຊົນດ້ວຍການຂຸດຄົ້ນ ແລະ ສຸມແຫຼ່ງທຶນຕ່າງໆ ທັງສຸມໃສ່ພະນັກງານເຂົ້າເຮັດວຽກງານຕົວຈິງ ແລະ ດ້ວຍນະໂຍບາຍສົ່ງເສີມເປັນພິເສດ ພ້ອມກັນນັ້ນ, ກໍ່ສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມຢ່າງມີຈຸດສຸມ ເພື່ອເປັນກຳລັງແຮງຊຸກດັນ ໃຫ້ການພັດທະນາຂົງເຂດອື່ນໆຢ່າງແຂງແຮງ ດ້ວຍຫຼາຍວິທີ, ຫຼາຍຮູບແບບ ແລະ ຫຼາຍມາດຕະການທີ່ສອດຄ່ອງກັບສະພາບຈຸດພິເສດ ຂອງແຂວງໄຊສົມບູນ...ຯ

ອົງຄະນະພັກເມືອງຜົ້ງສາລີ ເອົາໃຈໃສ່ປັບປຸງການຈັດຕັ້ງພັກ ຕິດພັນກັບການຊຸກຍູ້ພັດທະນາເສດຖະກິດ-ສັງຄົມ

ໂດຍ: ຂວັນສະໜິງ ສີຊະນະ

ເພື່ອປະຕິບັດ 2 ໜ້າທີ່ຍຸດທະສາດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ກໍ່ສ້າງລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສັງຄົມນິຍົມຢ່າງໜັກແໜ້ນເທື່ອລະກ້າວນັ້ນ ເພື່ອບັນລຸຈຸດປະສົງດັ່ງກ່າວ ປັດໄຈພື້ນຖານສຳຄັນກວ່າໝູ່ແມ່ນຕ້ອງກໍ່ສ້າງ, ປັບປຸງການຈັດຕັ້ງຮາກຖານພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ສາມາດເປັນແກນນຳໃນລະບົບການເມືອງຢູ່ຂັ້ນຮາກຖານ ດ້ວຍເຫດຜົນດັ່ງກ່າວນັ້ນ, ໄລຍະຜ່ານມາ ພັກ-ລັດ ໄດ້ຖືສຳຄັນວຽກງານກໍ່ສ້າງພັກ, ປັບປຸງການຈັດຕັ້ງຮາກຖານພັກ ເປັນວຽກໜຶ່ງສຳຄັນ ແລະ ທັງຈຳເປັນອັນຮີບດ່ວນ ເພາະຮາກຖານພັກເປັນບ່ອນຈັດຕັ້ງຜັນຂະຫຍາຍແນວທາງ, ແຜນນະໂຍບາຍ, ນະໂຍບາຍ, ກົດລະບຽບພັກ, ກົດໝາຍ, ມະຕິ, ຄຳສັ່ງ, ລະບຽບການຕ່າງໆ. ຄຽງຄູ່ກັນນັ້ນ ຍັງແມ່ນບ່ອນທີ່ຕິດພັນກັບມະຫາຊົນ, ນຳພາປະຊາຊົນພັດທະນາເສດຖະກິດ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ຕາມແນວທາງປ່ຽນແປງໃໝ່ຂອງພັກ-ລັດ. ດ້ວຍບົດບາດ ແລະ ຄວາມສຳຄັນຂອງວຽກງານດັ່ງກ່າວ ອົງຄະນະພັກເມືອງຜົ້ງສາລີ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການປັບປຸງ, ກໍ່ສ້າງການຈັດຕັ້ງຮາກຖານພັກຕິດພັນກັບການພັດທະນາເສດຖະກິດ ໂດຍເລີ່ມຈາກການກຳນົດອອກໃນມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກເມືອງຂອງຕົນໄວ້ວ່າ: ຄະນະພັກແຕ່ລະຂັ້ນຕ້ອງເພີ່ມທະວີການຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນບັນດາເນື້ອໃນມະຕິກອງປະຊຸມໃຫຍ່ ແຕ່ລະຂັ້ນ ແລະ ລະບຽບກົດໝາຍຂອງລັດເປັນຕົ້ນແມ່ນວຽກງານການແກ້ໄຂຄວາມທຸກຍາກຕາມ 4 ເນື້ອໃນ 4 ຄາດໝາຍ,ສືບຕໍ່ປັບປຸງການຈັດຕັ້ງຮາກຖານພັກໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ຍຶດໝັ້ນໃນການກໍ່ສ້າງພັກຕາມ 5 ຫຼັກການ 3 ທິດນຳ ແລະ ປະຕິບັດກົດລະບຽບພັກຢ່າງເຂັ້ມງວດ; ສືບຕໍ່ເອົາໃຈໃສ່ເຮັດໃຫ້ທົ່ວເມືອງຜົ້ງສາລີ ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ, ສຸມໃສ່ປັບປຸງລະບົບການເມືອງປະຊາທິປະໄຕຢູ່ຮາກຖານໃຫ້ມີຄວາມເຂັ້ມແຂງ ແລະ ສູ້ຊົນແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼຸດພົ້ນຈາກຄວາມທຸກຍາກເທື່ອລະກ້າວ; ສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ຮອດປີ 2024 ອັດຕາການຂະຫຍາຍຕົວສະເລ່ຍແຕ່ລະປີໃຫ້ຢູ່ໃນລະດັບ 7,69% ຕໍ່ປີ, ຂົງເຂດກະສິກຳ-ປ່າໄມ້ ໃຫ້ເພີ່ມຂຶ້ນ 4,05%, ຂົງເຂດອຸດສາຫະກຳ ແລະ ຫັດຖະກຳ ໃຫ້ເພີ່ມຂຶ້ນ 12,63% ຕໍ່ປີ, ຂົງເຂດການ

ບໍລິການ ໃຫ້ເພີ່ມຂຶ້ນ 3,93% ຕໍ່ປີ, ລວມຍອດມູນຄ່າຜະລິດຕະພັນໃຫ້ບັນລຸ 298,86 ຕື້ກີບ, ສະເລ່ຍໃສ່ຫົວຄົນໃຫ້ໄດ້ປະມານ 12,56 ລ້ານກີບ.

ພາຍຫຼັງທີ່ໄດ້ກຳນົດທິດທາງແຜນການອອກໃນມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກເມືອງຜົ້ງສາລີ ຄະນະພັກແຕ່ລະຂັ້ນຍົກສູງຄວາມຮັບຜິດຊອບຂອງຕົນ ໃນການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈດັ່ງກ່າວ ໄດ້ມີການສ້າງແຜນງານ, ໂຄງການລະອຽດ ເພື່ອຈັດຕັ້ງຜັນຂະຫຍາຍບົນພື້ນຖານຕິດພັນກັບນິຕິກຳຂອງຂັ້ນເທິງ, ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງການຈັດຕັ້ງຮາກຖານພັກ ໂດຍໄດ້ມີການມອບໝາຍໃຫ້ຂະແໜງກ່ຽວຂ້ອງຈັດຕັ້ງປະຕິບັດ, ມີການແຕ່ງຕັ້ງຄະນະຮັບຜິດຊອບລົງຕິດຕາມ, ເຄື່ອນໄຫວ ແລະ ຊຸກຍູ້ປັບປຸງການຈັດຕັ້ງຮາກຖານພັກ ຕິດພັນກັບການພັດທະນາເສດຖະກິດ ໂດຍສະເພາະແມ່ນການຈັດຕັ້ງຢູ່ຂັ້ນຮາກຖານບ້ານ ຕາມ 5 ຫຼັກການ, 3 ທິດນຳ, 4 ເນື້ອໃນ 4 ຄາດໝາຍ ແລະ ການກໍ່ສ້າງພັກຕາມ 5 ເນື້ອໃນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕາມຄຳສັ່ງ ເລກທີ 01/ກມສພ.

ການກໍ່ສ້າງພັກນຳພາທາງດ້ານການເມືອງ-ແນວຄິດ ຄະນະພັກ ໄດ້ຖືເອົາວຽກງານສຶກສາອົບຮົມການເມືອງ-ແນວຄິດ ເປັນບັນຫາກົກ ເຊິ່ງເປັນວຽກງານທີ່ຕັດສິນການຄົງຕົວ ແລະ ຂະຫຍາຍຕົວຂອງພັກ, ເປັນປັດໄຈພື້ນຖານ ໃນການເຄື່ອນໄຫວນຳພາຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ໃນແຕ່ລະໄລຍະ, ພ້ອມດຽວກັນນັ້ນ, ຄະນະພັກແຕ່ລະຂັ້ນໄດ້ເປັນເຈົ້າການສຶກສາອົບຮົມທາງດ້ານການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນດ້ວຍຫຼາຍຮູບແບບ, ຫຼາຍຮູບການ ແລະ ຫຼາຍວິທີການທີ່ແທດເໝາະກັບສະພາບຈຸດພິເສດຂອງເມືອງເປັນຕົ້ນແມ່ນ: ການໂຄສະນາເຜີຍແຜ່, ເຊື່ອມຊຶມ ມະຕິກອງປະຊຸມໃຫຍ່ ແລະ ຕົນິກຳສຳຄັນຕ່າງໆຢູ່ສຳນັກງານອ້ອມຂ້າງເມືອງ ກໍ່ໄດ້ມີການຈັດຕັ້ງເຊື່ອມຊຶມ ແລະ ປະຖະກະຖາ, ຢູ່ການຈັດຕັ້ງຮາກຖານພັກບ້ານ ມອບໃຫ້ຄະນະພັກແຕ່ລະບ່ອນເປັນເຈົ້າການຈັດຕັ້ງເຊື່ອມຊຶມ ໃຫ້ແກ່ພະນັກງານ, ສະມາຊິກພັກ ຕະຫຼອດຮອດປະຊາຊົນບັນດາເຜົ່າ. ຄຽງຄູ່ກັນນັ້ນ, ກໍ່ໄດ້ມີການໂຄສະນາຜ່ານໂທລະໂຄ່ງ ເຊິ່ງໄດ້ເຮັດໃຫ້ພະນັກງານ-ສະມາຊິກພັກ ແລະປະຊາຊົນບັນດາເຜົ່າມີຄວາມຮັບຮູ້ເຂົ້າໃຈແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ ແລະ ລະບຽບກົດໝາຍຂອງລັດ, ເປັນເຈົ້າການ ຕ້ານການສະກັດກັ້ນກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ ແລະ ພວກຄົນບໍ່ຫວັງດີ ເຮັດໃຫ້ພາຍໃນເມືອງມີຄວາມສະຫງົບໂດຍພື້ນຖານ, ປະຊາຊົນບັນດາເຜົ່າມີຄວາມສາມັກຄີກັນຢ່າງແໜ້ນແຟ້ນ ເພື່ອຕັ້ງໜ້າປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ຂອງເມືອງໃນແຕ່ລະໄລຍະ.

ດ້ານການຈັດຕັ້ງ: ໄດ້ຖືເອົາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນບັນຫາສຳຄັນບົນພື້ນຖານໃນການຕີລາຄາຄຸນນະພາບຂອງໜ່ວຍພັກ ແລະ ສະມາຊິກພັກ ໂດຍສຸມໃສ່ປັບປຸງການຈັດຕັ້ງ ແລະ ແບບແຜນນຳພາ, ແບບແຜນວິທີເຮັດວຽກຂອງຄະນະພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ໂດຍເລີ່ມຈາກການປັບປຸງ, ສັບຊ້ອນຈັດວາງບັນດາຄະນະພັກຮາກຖານ ແລະ ໜ່ວຍພັກໃຫ້ແທດເໝາະກັບສະພາບຕົວຈິງຂອງຂະແໜງການ, ກົມກອງ, ການຈັດຕັ້ງຮາກຖານແຕ່ລະບ້ານໃຫ້ຖືກຕ້ອງ, ສອດຄ່ອງກັບກົດລະບຽບພັກ, ພາລະບົດບາດການຈັດຕັ້ງຮາກຖານພັກໃຫ້ມີຄວາມສາມັກຄີເປັນເອກະພາບບົນພື້ນຖານແນວທາງ, ຫຼັກການນຳພາຂອງພັກ ເຫັນວ່າສ່ວນໃຫຍ່ແມ່ນປະຕິບັດຕາມຫຼັກການລວມສູນປະຊາທິປະ

ໄຕ, ຄະນະພັກ, ສະມາຊິກພັກສ່ວນຫຼາຍໄດ້ເຊີດຊູຄວາມເປັນແບບຢ່າງນຳໜ້າໃນການປະຕິບັດໜ້າທີ່ວຽກງານ, ຮັກສາໄດ້ຄຸນທາດການເມືອງ; ຄຸນສົມບັດສິນທຳປະຕິວັດ, ແບບແຜນວິທີເຮັດວຽກ, ວິທີນຳພາ ແລະ ແບບແຜນດຳລົງຊີວິດຂອງຕົນໄດ້ດີ. ປະຈຸບັນ ມີຄະນະບໍລິຫານງານພັກເມືອງ 25 ສະຫາຍ, ຍິງ 1 ສະຫາຍ, ເລຂາຄະນະພັກຮາກຖານກຸ່ມ 8 ສະຫາຍ, ຮອງເລຂາຄະນະພັກຮາກຖານກຸ່ມ 5 ສະຫາຍ ແລະ ກຳມະການຄະນະພັກຮາກຖານກຸ່ມ 4 ສະຫາຍ, ມີ 109 ໜ່ວຍພັກ, ໃນປີ 2022 ໄດ້ປະເມີນຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ມີທັງໝົດ 85 ໜ່ວຍພັກ, ໜ່ວຍພັກ ກາງ 23 ໜ່ວຍພັກ ແລະ ບໍ່ໄດ້ຕີລາຄາ 1 ໜ່ວຍພັກຍ້ອນບໍ່ຄົບມາດຕະຖານເງື່ອນໄຂ.

ດ້ານວຽກງານຂະຫຍາຍພັກ: ຄະນະພັກແຕ່ລະຂັ້ນໄດ້ເປັນເຈົ້າການຍົກສູງຄວາມຮັບຜິດຊອບ ຂອງຕົນ ບົນພື້ນຖານປະຕິບັດຕາມກົດລະບຽບພັກ ສະໄໝທີ XI, ນິຕິກຳ, ວິທີການບາດກ້າວ, ຂັ້ນຕອນການຂະຫຍາຍພັກເປັນຕົ້ນ: ຄຳສັ່ງກົມການເມືອງສູນກາງພັກ ສະບັບເລກທີ 064/ກມສພ; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກເລກທີ 201/ຄຈສພ ແລະ ຂັ້ນແຂວງກໍ່ໄດ້ສ້າງນິຕິກຳເພີ່ມເຕີມເປັນອັນລະອຽດ ເພື່ອໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງ ຂອງແຕ່ລະທ້ອງຖິ່ນຢ່າງເຂັ້ມງວດ ໂດຍຖືເອົາຄຸນນະພາບເປັນຫຼັກ ເຊິ່ງໄດ້ເລືອກເຟັ້ນເອົາຜູ້ທີ່ມີຜົນງານພົ້ນເດັ່ນ ໂດຍຜ່ານການທົດສອບໃນຂະບວນການວຽກງານຕົວຈິງ, ສາມາດເປັນກຳລັງແຮງນຳພາຢູ່ທຸກຂົງເຂດວຽກງານ ນັບແຕ່ຂັ້ນຮາກຖານຂຶ້ນມາ ແລະ ຕ້ອງມີມາດຕະຖານເງື່ອນໄຂຢ່າງຄົບຖ້ວນ, ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ. ມາຮອດປະຈຸບັນທົ່ວອົງຄະນະພັກເມືອງມີສະມາຊິກພັກທັງໝົດ 1.480 ສະຫາຍ, ຍິງ 641 ສະຫາຍ, ສະມາຊິກພັກສົມບູນ 1.445 ສະຫາຍ, ຍິງ 629 ສະຫາຍ; ສຳຮອງ 35 ສະຫາຍ, ຍິງ 12 ສະຫາຍ. ຜ່ານການຕີລາຄາແບ່ງປະເພດ ໃນປີ 2022 ມີສະມາຊິກພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະເພດແຂງມີ 1.145 ສະຫາຍ, ຍິງ 571 ສະຫາຍ, ສະມາຊິກພັກກາງ 203 ສະຫາຍ, ຍິງ 43 ສະຫາຍ, ສະມາຊິກພັກອ່ອນມີ 09 ສະຫາຍ, ບໍ່ໄດ້ຈັດປະເພດມີ 123 ສະຫາຍ, ຍິງ 27 ສະຫາຍ (ຍ້ອນບໍ່ຄົບມາດຕະຖານເງື່ອນໄຂ).

ໄປຄຽງຄູ່ກັນນັ້ນ ການພັດທະນາດ້ານເສດຖະກິດເປັນວຽກໜຶ່ງທີ່ສຳຄັນ ໂດຍພາຍໃຕ້ການນຳພາ-ຊີ້ນຳຢ່າງໃກ້ຊິດຕິດແທດຂອງອົງຄະນະພັກເມືອງ ບວກກັບຄວາມບຸກບືນ ແລະ ມີຄວາມຮັບຜິດຊອບສູງ ຂອງບັນດາຂະແໜງການ ແລະ ໄດ້ຮັບການສະໜັບສະໜູນຈາກບັນດາອົງການຈັດຕັ້ງຕ່າງໆ ໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ, ສັງຄົມມີຄວາມສະຫງົບ ແລະ ອັດຕາຄວາມທຸກຍາກມີທ່າອ່ຽງຫຼຸດລົງ ເຊິ່ງສະແດງອອກດັ່ງນີ້: ເສດຖະກິດພາຍໃນເມືອງ ຂະຫຍາຍຕົວມີຄຸນນະພາບ, ມີຄວາມໝັ້ນທ່ຽງ ແລະ ຍືນຍົງຢ່າງຕໍ່ເນື່ອງ, ຜະລິດຕະພັນພາຍໃນ ປີ 2023 ຂະຫຍາຍຕົວຢູ່ໃນລະດັບ 6,45% ໃນນັ້ນ, ກະສິກຳ-ປ່າໄມ້ຂະຫຍາຍຕົວສະເລ່ຍ 9,15%, ອຸດສາຫະກຳ-ຫັດຖະກຳຂະຫຍາຍຕົວສະເລ່ຍ 4,85%, ການບໍລິການພາຍໃນຂະຫຍາຍຕົວສະເລ່ຍ 4,91%. ປະຈຸບັນ ທົ່ວເມືອງ ມີພົນລະເມືອງທັງໝົດ 24.068 ຄົນ ລວມຍອດມູນຄ່າລາຍຮັບພາຍໃນເມືອງ 298,78 ຕື້ກີບ ສະເລ່ຍລາຍຮັບຕໍ່ຫົວຄົນ ປະມານ 12,41 ລ້ານກີບ.

ວຽກງານກະສິກຳ ກໍ່ໄດ້ຍົກລະດັບໃຫ້ມີຄວາມເຂັ້ມແຂງ ແລະ ໄດ້ຮັບການປັບປຸງດີຂຶ້ນ ເຊິ່ງປະຊາຊົນພາຍໃນເມືອງສ່ວນຫຼາຍແມ່ນມີອາຊີບປູກຝັງ-ລ້ຽງສັດເປັນຕົ້ນແມ່ນ: ປູກເຂົ້າ, ປູກພືດຕະກຸນຖົ່ວ ແລະ ປູກພືດ

ອຸດສາຫະກຳເປັນສິນຄ້າ ເພື່ອສົ່ງອອກເປັນຕົ້ນແມ່ນ: ປູກຊາ, ປູກຢາງພາລາ, ໝາກແໜ່ງກວາງຕຸ້ງ, ປູກສາລີອ່ອນ-ສາລີແຂງ, ປູກອ້ອຍ, ປູກໝາກເດືອຍ, ປູກໝາກຂ່າ ແລະ ປູກພືດລະດູແລ້ງອີກຈຳນວນໜຶ່ງ. ເຊິ່ງໃນໄລຍະຜ່ານມາ ມີສັດລ້ຽງປະເພດຕ່າງໆລວມທັງໝົດ 255.104 ໂຕ, ໃນນີ້: ຄວາຍ 9.939 ໂຕ, ງົວ 10.760 ໂຕ, ມ້າ 49 ໂຕ, ແບ້ 4.559 ໂຕ, ໝູ 34.363 ໂຕ, ສັດປີກ 195.425 ໂຕ ສາມາດຜະລິດຊີ້ນ-ປາ ສະໜອງໃຫ້ແກ່ການບໍລິໂພກໄດ້ 443,5 ໂຕນ, ໃນນັ້ນ: ຊີ້ນງົວ 12 ໂຕນ, ຄວາຍ 19 ໂຕນ, ໝູ 125 ໂຕນ, ແບ້ 6,5 ໂຕນ, ສັດປີກ 55 ໂຕນ, ໄຂ່ 40 ໂຕນ, ປາລ້ຽງ 90 ໂຕນ, ປາທຳມະຊາດ 70 ໂຕນ ແລະ ຊີ້ນສັດປະເພດອື່ນໆ 26 ໂຕນ, ສາມາດສະໜອງຊີ້ນເພື່ອບໍລິໂພກໄດ້ 18,67 ກິໂລ/ຄົນ/ປີ.

ວຽກງານອຸດສາຫະກຳ ໃນໄລຍະຜ່ານມາ ກໍ່ໄດ້ສຸມໃສ່ການປຸງແຕ່ງຜະລິດຕະພັນກະສິກຳ, ເຄື່ອງປ່າຂອງດົງ, ຕິດພັນກັບການຜະລິດເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ (ODOP) ທີ່ຫຼາກຫຼາຍຊະນິດ ເພື່ອສົ່ງເສີມການຊົມໃຊ້ພາຍໃນ ແລະ ສົ່ງອອກ ໃຫ້ນັບມື້ນັບເພີ່ມຂຶ້ນ. ມາຮອດປະຈຸບັນມີໂຮງງານຜະລິດນ້ຳດື່ມມີ 2 ຫົວໜ່ວຍ, ມີຜົນຜະລິດ 1,319 ລິດ; ໂຮງງານຜະລິດນ້ຳກ້ອນມີ 6 ຫົວໜ່ວຍ; ໂຮງປຸງແຕ່ງຊາ 47 ຫົວໜ່ວຍ; ປຸງແຕ່ງເສັ້ນເຝີ 2 ຫົວໜ່ວຍ, ນອກຈາກນັ້ນ, ກໍ່ຍັງມີໂຮງຕົ້ມເຫຼົ້າ 1 ຫົວໜ່ວຍ, ຮ້ານຕັດຫຍິບມີ 14 ຮ້ານ.

ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຄະນະພັກໄດ້ສຸມທຸກກຳລັງ ແລະ ທຶນຮອນເຂົ້າໃສ່ການພັດທະນາຊົນນະບົດຫ່າງໄກສອກຫຼີກ ເພື່ອເຮັດໃຫ້ປະຊາຊົນມີຊີວິດການເປັນຢູ່ດີຂຶ້ນ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ ເຊິ່ງທົ່ວເມືອງຍັງມີບ້ານທຸກຍາກຈຳນວນ 45 ບ້ານ, ຜ່ານການຈັດຕັ້ງປະຕິບັດສາມາດແກ້ໄຂຄວາມທຸກຍາກໄດ້ຈຳນວນ 3 ບ້ານ (ແຜນຮອດປີ 2024 ແມ່ນແກ້ໄຂໃຫ້ໄດ້ 7 ບ້ານ), ສ້າງບ້ານພັດທະນາໄດ້ 3 ບ້ານ ແລະ ມີຈຳນວນຄອບຄົວພັດທະນາ 404 ຄອບຄົວ.

ຕໍ່ກັບຜົນສຳເລັດທີ່ກ່າວມານັ້ນ, ຍັງມີບາງຂໍ້ຄົງຄ້າງທີ່ຈະຕ້ອງໄດ້ຮັບການປັບປຸງແກ້ໄຂເປັນຕົ້ນແມ່ນ:

1. ຄະນະພັກ - ຄະນະນຳຢູ່ແຕ່ລະຂັ້ນ ເຖິງວ່າໄດ້ມີການປັບປຸງສັບຊ້ອນ, ແຕ່ການຫັນປ່ຽນໃນທາງທີ່ຕັ້ງໜ້າຍັງບໍ່ທັນໄດ້ດີ, ແບບແຜນການນຳພາ, ແບບແຜນວິທີເຮັດວຽກ ຂອງຄະນະພັກແຕ່ລະຂັ້ນຍັງບໍ່ທັນເຂັ້ມແຂງ, ຄວາມກະຕືລືລົ້ນໃນການປະຕິບັດໜ້າທີ່ການເມືອງຍັງບໍ່ທັນສູງ, ການຫັນເປັນແຜນງານ, ໂຄງການອັນລະອຽດເຂົ້າໃນວຽກງານຕົວຈິງຍັງມີໜ້ອຍ.

2. ຄວາມຮັບຮູ້ເຂົ້າໃຈ ແລະ ກຳແໜ້ນຕໍ່ແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຂອງເມືອງບໍ່ທັນເລິກເຊິ່ງ, ຄະນະພັກບາງບ່ອນຍັງບໍ່ທັນເອົາໃຈໃສ່ການຈັດຕັ້ງຜັນຂະຫຍາຍແນວທາງ, ແຜນພັດທະນາເຮັດໃຫ້ຊັກຊ້າ ແລະ ແກ່ຍາວ, ການສຶກສາອົບຮົມການເມືອງ - ແນວຄິດເຖິງວ່າໄດ້ເອົາໃຈໃສ່ສຶກສາອົບຮົມດ້ວຍຫຼາຍຮູບການ ແລະ ຫຼາຍວິທີການ ແຕ່ຄວາມຮັບຮູ້ເຂົ້າໃຈ ຂອງພະນັກງານ-ສະມາຊິກພັກ, ແລະ ປະຊາຊົນບັນດາເຜົ່າຕໍ່ແນວທາງຂອງພັກ, ກົດໝາຍຂອງລັດຍັງບໍ່ທັນເລິກເຊິ່ງ.

3. ການພັດທະນາເສດຖະກິດ ແລະ ແກ້ໄຂຄວາມທຸກຍາກ ເຖິງວ່າໄດ້ເອົາໃຈໃສ່ຊີ້ນຳດ້ວຍຄວາມພະຍາຍາມແລ້ວກໍ່ຕາມ, ແຕ່ການແກ້ໄຂຄວາມທຸກຍາກກໍ່ຍັງບໍ່ໄປຕາມແຜນການ, ຄາດໝາຍ, ບໍ່ໄປຕາມການມອບໝາຍຄວາມຮັບຜິດຊອບຍັງເຮັດແບບລວມໆ ຄວາມທຸກຍາກ ຂອງປະຊາຊົນຍັງກວມອັດຕາສ່ວນສູງ, ປະຊາຊົນຫຼາຍບ້ານບໍ່ມີອາຊີບຄົງທີ່ ອາໄສທຳມະຊາດເຄິ່ງທຳມະຊາດເປັນສ່ວນໃຫຍ່.

4. ການເສີມຂະຫຍາຍລະບອບປະຊາທິປະໄຕ ຢູ່ຮາກຖານບາງບ່ອນບໍ່ທັນເຄື່ອນໄຫວຢ່າງແຂງແຮງ, ການລົງຊຸກຍູ້ວຽກງານຕາມພາລະບົດບາດຂອງຂະແໜງການ ຢູ່ຮາກຖານບໍ່ປົກກະຕິຕໍ່ເນື່ອງ ແລະ ແບບແຜນວິທີເຮັດວຽກຂອງອົງການຈັດຕັ້ງຂັ້ນບ້ານບໍ່ທັນໄປຕາມຫຼັກການ ແລະ ລະບຽບການ ເຮັດໃຫ້ປະສິດທິຜົນການເຮັດວຽກຂອງອົງການປົກຄອງບ້ານ ລວມທັງພະນັກງານຍັງບໍ່ທັນສູງເທົ່າທີ່ຄວນ.

ເພື່ອສືບຕໍ່ເສີມຂະຫຍາຍ, ປັບປຸງການການຈັດຕັ້ງຮາກຖານພັກໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ ເປັນແກນນຳໃນລະບົບການເມືອງຢູ່ຮາກຖານ ໃນການຊີ້ນຳ-ນຳພາພັດທະນາເສດຖະກິດ-ສັງຄົມການຂະຫຍາຍຕົວດີຂຶ້ນເທື່ອລະກ້າວນັ້ນ, ຄະນະພັກ, ການຈັດຕັ້ງຮາກຖານພັກ ຕ້ອງໄດ້ເອົາໃຈໃສ່ບາງດ້ານໃນຕໍ່ໜ້າດັ່ງນີ້.

ໜຶ່ງ. ຄະນະພັກ, ຄະນະໜ່ວຍພັກ ຕ້ອງເປັນເຈົ້າການເຊື່ອມຊຶມແນວທາງຂອງພັກ, ມະຕິ, ຄຳສັ່ງ, ກົດລະບຽບພັກ ແລະ ມະຕິກອງປະຊຸມໃຫຍ່ ຂອງອົງຄະນະພັກເມືອງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ ຫັນເປັນແຜນການລະອຽດ ໃຫ້ສອດຄ່ອງກັບຄວາມຮັບຜິດຊອບໜ້າທີ່ການເມືອງຂອງແຕ່ລະໜ່ວຍພັກ ຄຽງຄູ່ກັນນັ້ນ, ກໍ່ເອົາໃຈໃສ່ປັບປຸງຄຸນນະພາບຂອງສະມາຊິກພັກ, ການຈັດຕັ້ງຝຶກອົບຮົມຍົກລະດັບຄວາມຮູ້ ທາງດ້ານທິດສະດີການເມືອງ ແລະ ທວນຄືນບັນດາສິດ, ໜ້າທີ່ໃຫ້ການຈັດຕັ້ງຮາກຖານພັກ, ຄະນະພັກ, ສະມາຊິກພັກ ທຸກສະຫາຍ. ພ້ອມກັນນີ້ ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ນຳພາ-ຊີ້ນຳການປັບປຸງການຈັດຕັ້ງຮາກຖານພັກຕົນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ດ້ານການເມືອງ-ແນວຄິດ, ເຂັ້ມແຂງດ້ານການຈັດຕັ້ງ, ປະຕິບັດກົດລະບຽບພັກຢ່າງເຂັ້ມງວດ; ເອົາໃຈໃສ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນປັດໄຈສຳຄັນໃນການນຳພາທຸກຂົງເຂດວຽກງານ.

ສອງ. ອົງການເສນາທິການ ທີ່ເຮັດວຽກງານພັກປັບປຸງກົງຈັກການຈັດຕັ້ງ ແລະ ອົງການປົກຄອງໃຫ້ແກ່ຄະນະພັກ ຕ້ອງເປັນເຈົ້າການໄດ້ປັບປຸງອົງການບໍລິຫານລັດແຕ່ລະຂັ້ນໃຫ້ມີຄວາມເຂັ້ມແຂງ, ບັນດາຫ້ອງການອ້ອມຂ້າງ ໃນການປັບປຸງສັບຊ້ອນຕາມຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ ໄປພ້ອມກັບການປັບປຸງອົງການປົກຄອງບ້ານ-ບາງບ້ານ ປັບປຸງເລຂາຄະນະພັກຮາກຖານກຸ່ມບາງກຸ່ມ ຈາກນັ້ນກໍ່ໄດ້ຈັດຝຶກອົບຮົມແນະນຳແບບແຜນວິທີແບບແຜນເຮັດວຽກ ວິທີການຊີ້ນຳ - ນຳພາ ແລະ ໃຫ້ຮູ້ລະບົບວິທີການບໍລິຫານຄຸ້ມຄອງຂັ້ນບ້ານ ເພື່ອນຳພາປະຊາຊົນໃຫ້ມີການຫັນປ່ຽນດ້ານແນວຄິດຈາກທັດສະນະດັ່ງເດີມຫັນປ່ຽນໄປສູ່ແບບວິທີການທີ່ກ້າວໜ້າ ຕາມທິດ 3 ສ້າງ.

ສາມ. ສືບຕໍ່ເອົາໃຈໃສ່ກໍ່ສ້າງພະນັກງານ-ສະມາຊິກພັກ ເພື່ອສືບທອດປ່ຽນແທນ ເປັນຕົ້ນແມ່ນມະຫາຊົນຜູ້ກ້າວໜ້າ, ເຂົ້າເປັນສະມາຊິກພັກ ການເລືອກເຟັ້ນເອົາບັນດາບຸກຄົນຜູ້ທີ່ດີເດັ່ນ, ຜູ້ທີ່ມີຄວາມຮູ້ຄວາມສາມາດ, ມີຫົວຄິດປະດິດສ້າງ, ມີແບບແຜນດຳລົງຊີວິດທີ່ປອດໃສ ໃນຖັນແຖວຊົນຊັ້ນກຳມະກອນ, ຖັນແຖວນັກຮຽນຮູ້ປັນຍາຊົນ ແລະ ປະຊາຊົນຜູ້ອອກແຮງງານ ເຂົ້າເປັນສະມາຊິກພັກ ເພື່ອຂະຫຍາຍເຂົ້າພັກ ໃຫ້ຮັບປະກັນທາງດ້ານປະລິມານ ແລະ ດ້ານຄຸນນະພາບ ໃຫ້ໄດ້ພະນັກງານສືບທອດຜູ້ທີ່ດີ ກາຍເປັນກຳລັງແຮງທີ່ສຳຄັນໃຫ້ແກ່ການຈັດຕັ້ງພັກ, ອົງການປົກຄອງແຕ່ລະຂັ້ນ.

ສີ່. ຄະນະພັກ, ອົງການປົກຄອງທຸກຂັ້ນ, ທຸກຂະແໜງການ ຕ້ອງເປັນເຈົ້າການຈັດຕັ້ງຜັນຂະຫຍາຍ

ອ່ານຕໍ່ໜ້າ 50

ປັບປຸງການຈັດຕັ້ງຮາກຖານພັກ ຢູ່ເມືອງໝອກ ແຂວງຊຽງຂວາງ

ໂດຍ: ຕູ້ຊໍ່ ຢົງເນັ້ງວ່າງ

ອີງຄະນະພັກເມືອງໝອກ ຫ່າງຈາກເທດສະບານແຂວງຊຽງຂວາງ 145 ກິໂລແມັດ, ມີເນື້ອທີ່ທັງໝົດ 3.290 ກິໂລຕາແມັດ ເນື້ອທີ່ສ່ວນໃຫຍ່ເປັນພູສູງ 85%, ມີພົນລະເມືອງທັງໝົດ 16.796 ຄົນ, ຍິງ 8.181 ຄົນ, ມີ 28 ບ້ານ, ມີ 2.912 ຄອບຄົວ ແລະ ບັນດາສຳນັກງານອົງການປົກຄອງເມືອງແມ່ນຕັ້ງຢູ່ບ້ານນາຄ່ອນ.

ໃນພາລະກິດປ່ຽນແປງໃໝ່ຂອງການປະຕິວັດ, ມັນຮຽກຮ້ອງໃຫ້ທຸກການຈັດຕັ້ງໃນລະບົບການເມືອງຕ້ອງໄດ້ຮັບການປັບປຸງໃຫ້ສົມເຫດສົມຜົນ ແລະ ເຄື່ອນໄຫວຢ່າງມີຄຸນນະພາບ ສຳລັບການຈັດຕັ້ງຮາກຖານພັກມີບົດບາດເປັນແກນນຳທາງດ້ານການເມືອງຢູ່ຮາກຖານ, ເປັນບ່ອນສຶກສາອົບຮົມເອົາມະຫາຊົນເຂົ້າເປັນສະມາຊິກພັກ, ເປັນບ່ອນເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດໃຫ້ແທດເໝາະກັບຈຸດພິເສດຂອງທ້ອງຖິ່ນຮາກຖານ, ເປັນບ່ອນສະກັດກັ້ນ ແລະ ແກ້ໄຂບັນດາປະກົດການຫຍໍ້ທໍ້, ປັບປຸງບັນຫາທີ່ເຫັນວ່າມີຄວາມລັງເລຄອນແຄນປຸກລະດົມນຳພາການຈັດຕັ້ງປະຕິບັດບັນດາຂະບວນການວຽກງານຕ່າງໆໃນແຕ່ລະໄລຍະໃຫ້ປະກົດຜົນເປັນຈິງ. ຍ້ອນເຫັນໄດ້ຄວາມສຳຄັນດັ່ງກ່າວໄລຍະຜ່ານມາຄະນະພັກເມືອງໝອກໄດ້ເອົາໃຈໃສ່ປັບປຸງກໍ່ສ້າງຮາກຖານພັກຂອງຕົນເອງຢ່າງຕໍ່ເນື່ອງຕະຫຼອດມາອັນໄດ້ເຮັດໃຫ້ໜ່ວຍພັກກາຍເປັນແກນນຳໃນລະບົບການເມືອງໃນການນຳພາຮອບດ້ານຢູ່ຮາກຖານ, ເປັນໃຈກາງການເຕົ້າໂຮມກຳລັງແຮງໃນການເຮັດໜ້າທີ່ການເມືອງຢູ່ຮາກຖານ ແລະ ອັນທີ່ພົ້ນເດັ່ນແມ່ນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຕິດພັນກັບການພັດທະນາຊົນນະບົດຮອບດ້ານ ແລະ ລຶບລ້າງຄວາມທຸກຍາກໃຫ້ແກ່ພໍ່ແມ່ປະຊາຊົນ.

ປະຈຸບັນໃນທົ່ວເມືອງໝອກມີ 28 ບ້ານ, ມີ 66 ໜ່ວຍພັກ, ມີ 4 ຄະນະພັກຮາກຖານ, ມີສະມາຊິກພັກທັງໝົດ 983 ສະຫາຍ, ຍິງ 248 ສະຫາຍ, ສາມາດສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໄດ້ຈຳນວນ 57 ໜ່ວຍພັກ, ໜ່ວຍພັກກາງ 06 ໜ່ວຍພັກ ແລະ ບໍ່ໄດ້ປະເມີນ 03 ໜ່ວຍພັກ, ສະມາຊິກພັກແຂງ 872 ສະຫາຍ, ຍິງ 227 ສະຫາຍ, ສະມາຊິກພັກກາງ 53 ສະຫາຍ, ຍິງ 08 ສະຫາຍ, ສະມາຊິກພັກສົມບູນ 924 ສະຫາຍ, ຍິງ 223 ສະຫາຍ ແລະ ສະມາຊິກພັກສຳຮອງ 59 ສະຫາຍ, ຍິງ 26 ສະຫາຍ, ຄຸນນະພາບຂອງການຈັດຕັ້ງໄດ້ຮັບການປັບປຸງດີຂຶ້ນ ຄະນະພັກເມືອງໝອກໄດ້ຖືສຳຄັນ ແລະ ໄດ້ເອົາໃຈໃສ່ຕໍ່ວຽກງານກວດກາຄຸ້ມຄອງ ແລະ ປ້ອງກັນພັກ-ພະນັກງານໂດຍຖືເອົາການກວດກາປົກກະຕິເປັນຕົ້ນຕໍ.

ດ້ານແບບແຜນວິທີການນຳພາຂອງການຈັດຕັ້ງຮາກຖານຄະນະພັກເມືອງໝອກແມ່ນໄດ້ຮັບການປັບປຸງໃຫ້ເຂົ້າສູ່ລະບຽບຫຼັກການ ແລະ ບົນພື້ນຖານຄວາມ

ສອດຄ່ອງກັບສະພາບຕົວຈິງຂອງຮາກຖານພັກຢູ່ເມືອງໝອກ, ເຮັດໃຫ້ແຕ່ລະໜ່ວຍພັກໃນທົ່ວເມືອງໝອກໄດ້ປະຕິບັດລະບອບຄວບຕຳແໜ່ງນັບທັງຢູ່ການຈັດຕັ້ງຮາກຖານພັກບ້ານ ແລະ ການຈັດຕັ້ງຮາກຖານພັກຢູ່ສຳນັກງານອົງການຂອງເມືອງມີການພົວພັນປະສານສົມທົບກັນຢ່າງຖືກຕ້ອງສອດຄ່ອງກັນລະຫວ່າງການນຳພາຂອງພັກກັບການເຊີດຊູຄວາມສັກສິດໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ແລະ ການເສີມຂະຫຍາຍບົດບາດເປັນເຈົ້າການຂອງບັນດາອົງການຈັດຕັ້ງມະຫາຊົນຢູ່ໃນແຕ່ລະຮາກຖານພັກ ຈຶ່ງໄດ້ກາຍເປັນກຳລັງແຮງສູ້ຮົບໃນການນຳພາການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດໃຫ້ປະກົດຜົນເປັນຈິງ. ເຮັດໃຫ້ຫຼາຍໜ່ວຍພັກໄດ້ກາຍເປັນແບບຢ່າງທີ່ດີໃນການນຳພາ-ຊີ້ນຳ ອັນໄດ້ເປັນການປະກອບສ່ວນເຮັດໃຫ້ບົດບາດຂອງພັກກາຍເປັນແກນນຳໃນການນຳພາຢູ່ຂັ້ນຮາກຖານຕະຫຼອດມາ. ພາຍໃຕ້ການນຳພາຂອງຄະນະພັກ, ພະນັກງານ, ສະມາຊິກພັກ, ຕໍ່ພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວເມືອງໝອກໄດ້ເສີມຂະຫຍາຍຈິດໃຈຮັກຊາດ, ຮັກລະບອບໃໝ່, ຕັ້ງໜ້າປະກອບສ່ວນເຂົ້າໃນການປະຕິບັດສອງໜ້າທີ່ຍຸດທະສາດດ້ວຍຄວາມຮັບຜິດຊອບສູງ, ບຸກບືນຜ່ານຜ່າທຸກຄວາມຫຍຸ້ງຍາກສັບສົນ, ພະຍາຍາມຍົກລະດັບຄວາມຮູ້ທາງດ້ານທິດສະດີການເມືອງ ແລະ ຄວາມສາມາດທາງດ້ານວິຊາສະເພາະ. ພ້ອມກັນຍົກສູງສະຕິຕື່ນຕົວເປັນເຈົ້າຕົນເອງໃນການປະຕິບັດສິດ, ພັນທະ ແລະ ໜ້າທີ່ໃຫ້ຖືກຕ້ອງຕາມລັດຖະທຳມະນູນ ແລະ ກົດໝາຍ. ປະກອບສ່ວນທຶນຮອນ, ກຳລັງແຮງ, ສະຕິປັນຍາເພື່ອຊຸກຍູ້ສົ່ງເສີມໃຫ້ເກີດມີໜໍ່ແໜງ ແລະ ປັດໄຈໃໝ່ໃນການຜະລິດເປັນສິນຄ້າຕາມກົນໄກເສດຖະກິດຕະຫຼາດ, ສຸມໃສ່ປັບປຸງກົນໄກຄຸ້ມຄອງເສດຖະກິດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາຕາມທິດສາມສ້າງ, ເພີ່ມທະວີບົດບາດການນຳພາຂອງພັກ, ເຊີດຊູຄວາມສັກສິດໃນການຄຸ້ມຄອງລັດດ້ວຍກົດໝາຍຄະນະພັກເມືອງໝອກໄດ້ຍົກສູງບົດບາດ, ຄວາມສາມາດນຳພາໃນລະບົບການເມືອງປະຊາທິປະໄຕ ປະຊາຊົນສຸມໃສ່ທຸກກຳລັງແຮງ ແລະ ຄວາມສາມາດເຂົ້າໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ສະໄໝທີ V ຂອງເມືອງວາງອອກໄດ້ເປັນຢ່າງດີ.

ຄຽງຄູ່ກັບດ້ານດີ ແລະ ຜົນສຳເລັດທີ່ກ່າວມາຂ້າງເທິງນີ້ກໍ່ຍັງມີຫຼາຍວຽກງານທີ່ການຈັດຕັ້ງຮາກຖານພັກບໍ່ທັນເຮັດໄດ້ດີຍ້ອນສະພາບຈຸດພິເສດດ້ານທີ່ຕັ້ງພູມສາດ, ເສດຖະກິດ-ສັງຄົມພາຍໃນເມືອງບໍ່ທັນມີການຂະຫຍາຍຕົວ, ໃນດ້ານໜຶ່ງແມ່ນຍ້ອນການຈັດຕັ້ງຮາກຖານພັກບໍ່ທັນໄດ້ຮັບການປັບປຸງ, ລະດັບຄວາມຮັບຮູ້ຂອງຄະນະພັກຮາກຖານແຕ່ລະໜ່ວຍ ແລະ ສະມາຊິກພັກຈຳນວນໜຶ່ງຍັງບໍ່ທັນສູງໂດຍສະເພາະແມ່ນບົດຮຽນໃນການນຳພາບໍ່ທັນອຸດົມສົມບູນມີບາງໜ່ວຍພັກສ້າງຕັ້ງຂຶ້ນໃໝ່, ບົດຮຽນໃນການເຄື່ອນໄຫວບໍ່ທັນຫຼາຍ, ຄຸນນະພາບການນຳພາບໍ່ທັນສູງ; ການນຳພາຈັດຕັ້ງປະຕິບັດວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ສະມາຊິກພັກຍັງບໍ່ທັນເປັນປົກກະຕິ ແລະ ບໍ່ທັນມີຫຼາຍຮູບການທີ່ແທດເໝາະແຕ່ລະເປົ້າໝາຍ. ສະແດງອອກການຫັນປ່ຽນທາງດ້ານທັດສະນະແນວຄິດ ແລະ ພຶດຕິກຳມີການປ່ຽນແປງຊ້າ; ແບບວິທີນຳພາຂອງການຈັດຕັ້ງຮາກຖານພັກ, ໜ່ວຍພັກຈຳນວນໜຶ່ງຍັງບໍ່ທັນທັນເຂົ້າສູ່ລະບຽບແບບແຜນທີ່ແທ້ຈິງ, ເປັນຕົ້ນລະບອບການປະຊຸມປຶກສາຫາລື, ການປະຕິບັດລະບອບລວມສູນປະຊາທິປະໄຕພາຍ

ໃນພັກຍັງບໍ່ທັນເຂັ້ມງວດ, ເຮັດແບບຊິນເຄີຍ ແລະ ດັ່ງເດີມບໍ່ທັນໄດ້ຕັ້ງໜ້າເຄື່ອນໄຫວຕາມພາລະບົດບາດຂອງຕົນ. ການແບ່ງງານໃຫ້ຄະນະພັກ, ສະມາຊິກພັກບໍ່ລະອຽດ, ການຊຸກຍູ້ຕິດຕາມບັນດາອົງການຈັດຕັ້ງມະຫາຊົນ, ອົງການສັງຄົມຕ່າງໆບໍ່ທັນປົກກະຕິ; ການສົມທົບນຳພາເປັນໝູ່ຄະນະຍັງເຮັດໄດ້ໜ້ອຍ ແລະ ສະຕິຄວາມຮັບຜິດຊອບຍັງບໍ່ທັນສູງ, ໃນເມື່ອມີຈຸດບົກຜ່ອງມັກຈະຖິ້ມຄວາມຮັບຜິດຊອບໃຫ້ກັນ, ບາງໜ່ວຍພັກຂັ້ນບ້ານຍັງມີສະພາບເຮັດວຽກແບບອາຍາສິດ ແລະ ອູ້ມວຽກ, ບາງກໍລະນີເຮັດແທນອົງການປົກຄອງ; ການຕິດຕາມ, ກວດກາການເອົາໃຈໃສ່ກໍ່ສ້າງ-ບຳລຸງພະນັກງານຍັງບໍ່ທັນມີແຜນກຳນົດລະອຽດຈະແຈ້ງ; ບັນຫາການຄຸ້ມຄອງປ້ອງກັນພັກ, ປ້ອງກັນພະນັກງານ, ການດຳເນີນຊີວິດການເມືອງພາຍໃນພັກ, ການຕິຊົມຕົນເອງ, ຕິຊົມກັນຍັງບໍ່ທັນເຮັດໄດ້ຢ່າງແຂງແຮງ ແລະ ເລິກເຊິ່ງ, ຍັງມີລັກສະນະລວມໆບໍ່ກ້າເວົ້າຄວາມຈິງ, ເຫັນແຕ່ຜົນງານປິດບັງຂໍ້ຂາດຕົກບົກພ່ອງ; ວຽກງານຂະຫຍາຍພັກບໍ່ທັນໄດ້ດີ, ມີບາງບ່ອນເອົາການຂະຫຍາຍພັກເປັນຈຸດໜັກ, ແຕ່ບໍ່ເອົາໃຈໃສ່ປັບປຸງກໍ່ສ້າງພັກ ແລະ ເນັ້ນທາງຄຸນນະພາບ; ໝາຍຄວາມວ່າເອົາແຕ່ປະລິມານ ແລະ ອັດຕະວິໄສ, ມີບາງໄລຍະກໍ່ເກີດສະພາບທີ່ສ່ອງແສງເຖິງລັກສະນະຄັບແຄບທ້ອງຖິ່ນ; ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຍັງບໍ່ທັນໄດ້ເອົາໃຈໃສ່ຢ່າງຈິງຈັງຈາກຄະນະພັກແຕ່ລະໜ່ວຍ, ຍິ່ງໄປກວ່ານັ້ນຄະນະພັກຈຳນວນໜຶ່ງບໍ່ທັນກຳແໜ້ນເນື້ອໃນຈິດໃຈມະຕິ, ຄຳສັ່ງກ່ຽວກັບການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນສະແດງອອກມີຫຼາຍໜ່ວຍພັກໄດ້ຮັບຮອງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຫຼາຍປີແລ້ວແຕ່ບໍ່ມີການກວດກາປະເມີນຜົນແຕ່ກໍ່ຍັງໄດ້ເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຢູ່ບ່ອນທີ່ໄດ້ປະເມີນຜົນຈຳນວນໜຶ່ງໄດ້ແຕ່ຮູບການບໍ່ທັນຕິດພັນກັບໜ້າທີ່ການເມືອງ, ເຮັດແບບລວມໆແລ່ນນຳແຕ່ຕົວເລກຄາດໝາຍ, ແຕ່ປະສິດທິຜົນບໍ່ສູງ, ເຮັດໃຫ້ໜ່ວຍພັກປອດໃສ, ເຂັ້ມແຂງ , ໜັກແໜ້ນມີທ່າອ່ຽງຫຼຸດລົງ. ອີກຂອດໜຶ່ງຄະນະພັກຂັ້ນເທິງລົງໃກ້ຊິດຕິດແທດບໍ່ປົກກະຕິ, ການປະສານລະຫວ່າງໜ່ວຍພັກກັບຂັ້ນເທິງຍັງຊັກຊ້າບໍ່ທັນກັບສະພາບການ, ມີບາງໜ່ວຍພັກເຄີຍໄດ້ຮັບຮອງ ແລະ ຢັ້ງຢືນເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ມາແລ້ວແຕ່ພັດບໍ່ໄດ້ເອົາໃຈໃສ່ປັບປຸງໃຫ້ດີຂຶ້ນ.

ເພື່ອເຮັດໃຫ້ການຈັດຕັ້ງຮາກຖານພັກຢູ່ເມືອງໝອກໄດ້ຮັບການປັບປຸງໃຫ້ມີຄຸນນະພາບ ແລະ ມີຄວາມໜັກແໜ້ນ, ເຂັ້ມແຂງ, ຄະນະພັກເມືອງໝອກຄວນເອົາໃຈໃສ່ບາງດ້ານຄືດັ່ງລຸ່ມນີ້:

1). ຄະນະພັກຕ້ອງກຳແໜ້ນພາລະບົດບາດຄວາມສຳຄັນຂອງການຈັດຕັ້ງຮາກຖານຂອງພັກ ແລະ ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານຕ້ອງຮັບຜິດຊອບໂດຍກົງຕໍ່ຄະນະພັກຂັ້ນເທິງກ່ຽວກັບວຽກງານປັບປຸງກໍ່ສ້າງການຈັດຕັ້ງຮາກຖານພັກ. ສູ້ຊົນປະຕິບັດໃຫ້ໄດ້ຕາມຄາດໝາຍການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນທີ່ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງອົງຄະນະພັກແຂວງຊຽງຂວາງວາງອອກໃຫ້ເກີດໝາກເກີດຜົນຕົວຈິງ.

2). ຄະນະພັກຕ້ອງດຳເນີນການກວດກາຕີລາຄາຢ່າງຖືກຕ້ອງພາວະວິໄສກັບສະພາບຄວາມເປັນຈິງຂອງແຕ່ລະປະເພດໜ່ວຍພັກ ເພື່ອປັບປຸງບູລະນະໜ່ວຍພັກໃຫ້ມີການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານໂດຍສະເພາະຕ້ອງເລັ່ງໃສ່ຈຸດທີ່ສຳຄັນມີລັກສະນະ

ຍຸດທະສາດ ແລະ ບັນດາໜ່ວຍພັກທີ່ອ່ອນກວ່າໝູ່ແນໃສ່ລົບລ້າງໜ່ວຍພັກອ່ອນໃຫ້ໄດ້ເທື່ອລະກ້າວ, ເອົາໃຈໃສ່ຊຸກຍູ້ຕິດຕາມຊີ້ນຳຢ່າງໃກ້ຊິດຕໍ່ບັນດາໜ່ວຍພັກທີ່ພວມມີປັດໄຈໃໝ່ສືບຕໍ່ສ້າງໃຫ້ກາຍເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເພື່ອຖອດຖອນບົດຮຽນ ແລະ ຂະຫຍາຍກວ້າງອອກໃນທົ່ວອົງຄະນະພັກຂອງຕົນ.

3). ຄະນະພັກເມືອງ, ຄະນະພັກກອງບັນຊາການປກຊ-ປກສ ເມືອງ, ຄະນະພັກຮາກຖານ, ຄະນະໜ່ວຍພັກຕ້ອງຄົ້ນຄວ້າເຊື່ອມຊຶມ, ກຳແໜ້ນໜ້າທີ່ລວມຂອງຮາກຖານພັກທີ່ກຳນົດໄວ້ໃນກົດລະບຽບພັກ ແລະ ໜ້າທີ່ສະເພາະຂອງແຕ່ລະປະເພດໜ່ວຍພັກ, ກຳແໜ້ນບັນດາເງື່ອນໄຂມາດຖານສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ບົນພື້ນຖານເພື່ອວາງທິດທາງແຜນການສູ້ຊົນສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃຫ້ແທດເໝາະສອດຄ່ອງກັບຈຸດພິເສດ ແລະ ໜ້າທີ່ການເມືອງຂອງແຕ່ລະປະເພດໜ່ວຍພັກ, ໃນແຜນການຕ້ອງກຳນົດຕົວເລກຄາດໝາຍສູ້ຊົນໃນແຕ່ລະດ້ານໃຫ້ຈະແຈ້ງ ແລະ ຖືກກັບສະພາບການຕົວຈິງ, ເຮັດຢ່າງມີຈຸດສຸມ ແລະ ຕໍ່ເນື່ອງມີການຈັດຕັ້ງນຳພາຢ່າງເຂັ້ມງວດ.

4). ເອົາໃຈໃສ່ປັບປຸງວຽກງານກວດກາພັກ-ລັດຂັ້ນຂອງຕົນແນໃສ່ເຮັດໃຫ້ອົງການດັ່ງກ່າວມີຄວາມສາມາດພຽງພໍ ເພື່ອປະຕິບັດບົດບາດໃນການຕິດຕາມ, ກວດກາໂດຍສະເພາະແມ່ນຕິດຕາມກວດກາການກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ.

5).ນອກຈາກຮັບຜິດຊອບລວມແລ້ວຄະນະບໍລິຫານງານພັກເມືອງ, ຄະນະພັກກອງບັນຊາການປກຊ-ປກສ ເມືອງ, ຄະນະພັກຮາກຖານ ແລະ ໜ່ວຍພັກຮາກຖານທຸກຂັ້ນຕ້ອງຊີ້ນຳວຽກງານກໍ່ສ້າງຮາກຖານການເມືອງ, ປັບປຸງກໍ່ສ້າງພັກ ແລະ ມີຄວາມຮັບຜິດຊອບກໍ່ສ້າງການຈັດຕັ້ງຮາກຖານພັກ ຫຼື ໜ່ວຍພັກທີ່ຕົນສັງກັດຢູ່ ໃຫ້ກາຍເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

6). ວຽກງານປັບປຸງກໍ່ສ້າງຮາກຖານພັກແມ່ນໜ້າທີ່ຂອງໝົດທຸກພາກສ່ວນ, ເພາະສະນັ້ນຄະນະພັກເມືອງໝອກຕ້ອງຊີ້ນຳປະສານສົມທົບກົມກຽວລະຫວ່າງຂະແໜງການ ແລະ ພາກສ່ວນຕ່າງໆ, ເອົາໃຈໃສ່ນຳພາເຕົ້າໂຮມທຸກກຳລັງທີ່ຕົນມີ, ເພື່ອສຸມໃສ່ໃນວຽກງານປັບປຸງກໍ່ສ້າງຮາກຖານພັກຢ່າງແຂງແຮງເປັນຂະບວນໂດຍມີການຈັດຕັ້ງບັນຊາເປັນເອກະພາບຂອງຄະນະພັກ ແລະ ມີແຜນການ, ໂຄງການຢ່າງຈະແຈ້ງ.

7). ຄະນະພັກເມືອງໝອກຕ້ອງໄດ້ເອົາໃຈໃສ່ເຖິງການຍົກສູງຄຸນນະພາບໃນການຂະຫຍາຍສະມາຊິກພັກໃຫ້ສອດຄ່ອງ ແລະ ຖືກຕ້ອງ; ເຊື່ອມຊຶມບັນດາມະຕິຄຳສັ່ງຂອງຄະນະພັກຂັ້ນເທິງວາງອອກ ໃຫ້ຄະນະພັກຮາກຖານທຸກຂັ້ນທີ່ນອນຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ.

ສັງລວມແລ້ວ ການຈັດຕັ້ງຮາກຖານພັກຢູ່ເມືອງໝອກໄດ້ມີຜົນສຳເລັດຫຼາຍດ້ານຄື: ເຄື່ອນໄຫວນຳພາປະຊາຊົນລາວບັນດາເຜົ່າພາຍໃນເມືອງສ້າງສະຖຽນລະພາບທາງດ້ານການເມືອງ, ພັດທະນາເສດຖະກິດ-ສັງຄົມ, ປັບປຸງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ, ປະຕິບັດນະໂຍບາຍສັງຄົມ, ປົກປັກຮັກສາຄວາມສະຫງົບປອດໄພໃນທົ່ວເມືອງ, ຊຸກຍູ້ຂະບວນການມະຫາຊົນສາມັກຄີສ້າງປອງດອງເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຢູ່ຮາກຖານບ້ານ. ປັບປຸງການຈັດຕັ້ງຮາກຖານພັກໃຫ້ມີຄວາມເຂັ້ມແຂງເຮັດໃຫ້ພັກມີກຳລັງແຮງສູ້ຮົບ, ເປັນບ່ອນອີງອັນແໜ້ນແກ່ນ ແລະ ເປັນຂົວຕໍ່ໃນການຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ ແລະ ກົດໝາຍຂອງລັດ...ຯ

ການກໍ່ສ້າງ-ບຳລຸງພະນັກງານທາງດ້ານທິດສະດີການເມືອງ ແລະ ການປົກຄອງ ຢູ່ໂຮງຮຽນການເມືອງ ແລະ ການປົກຄອງ ແຂວງສາລະວັນ ໃນເງື່ອນໄຂໃໝ່

ໂດຍ: ສີມອນ ສີວົງໄຊ

ການກໍ່ສ້າງ-ບຳລຸງພະນັກງານ ແມ່ນຂອດໜຶ່ງທີ່ສຳຄັນຂອງວຽກງານພະນັກງານ ແມ່ນຂະບວນການວິວັດແຫ່ງການກະທົບໃສ່ພະນັກງານ ເພື່ອແນໃສ່ໃຫ້ພະນັກງານມີການຫັນປ່ຽນໃໝ່ທາງດ້ານມານະຈິດ, ຄຸນທາດການເມືອງ, ສ້າງວິໄສທັດໃຫ້ພະນັກງານມີສາຍຕາເບິ່ງກວ້າງເຫັນໄກ, ເຫັນໄດ້ບັນດາກົດເກນການເຄື່ອນເໜັງຂອງປະກົດການຕ່າງໆ ແລະ ໃຫ້ມີຄວາມຮູ້ຄວາມສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ໃນການປະຕິບັດໜ້າທີ່ການເມືອງຂອງພັກແຕ່ລະໄລຍະ. ພັກປະຊາຊົນປະຕິວັດລາວ ນັບແຕ່ມື້ສ້າງຕັ້ງເຖິງປະຈຸບັນໄດ້ເອົາໃຈໃສ່ຕໍ່ການກໍ່ສ້າງ-ບຳລຸງພະນັກງານຢ່າງບໍ່ຢຸດຢັ້ງເນັ້ນໃສ່ຮັບປະກັນທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ ສະແດງອອກໃນມະຕິກອງປະຊຸມໃຫຍ່ຂອງພັກແຕ່ລະຄັ້ງ ໂດຍສະເພາະແມ່ນຄັ້ງທີ XI ຂອງພັກກໍ່ໄດ້ຢ້ຳວ່າ: ພະນັກງານແມ່ນປັດໄຈຕັດສິນຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ແລະ ວຽກງານພະນັກງານ, ແມ່ນຂໍ້ກຸນແຈສຳຄັນໃນຂະບວນວິວັດການຈັດຕັ້ງປະຕິບັດບົດບາດການນຳພາຂອງພັກຕໍ່ພາລະກິດປະຕິວັດ[(1)]. ປະທານ ໄກສອນ ພົມວິຫານ ໄດ້ໃຫ້ທັດສະນະວ່າ: ບັນຫາສຳຄັນທີ່ສຸດບັນຫາໜຶ່ງໃນວຽກງານກໍ່ສ້າງພັກ ແມ່ນວຽກກໍ່ສ້າງ, ບຳລຸງພະນັກງານ. ຢາກປະຕິບັດແນວທາງ, ນະໂຍບາຍຂອງພັກໄດ້ ຕ້ອງມີກຳລັງພະນັກງານທີ່ເຂັ້ມແຂງ, ຜູ້ທີ່ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮູ້, ຄວາມສາມາດພຽງພໍ ເພື່ອເຮັດໜ້າທີ່ສຳຄັນທີ່ພັກ-ລັດມອບໝາຍໃຫ້.

ເພື່ອເຮັດໃຫ້ພະນັກງານມີມາດຕະຖານ, ເງື່ອນໄຂຄົບຖ້ວນ, ມີຄວາມຮູ້ທາງດ້ານທິດສະດີ ແລະ ວິຊາສະເພາະທີ່ໜັກແໜ້ນ ມີຄວາມສາມາດນຳພາ ແລະ ຈັດຕັ້ງຜັນຂະຫຍາຍແນວທາງໃຫ້ມີຜົນສຳເລັດຕາມຄາດໝາຍທີ່ກຳນົດໄວ້ ໂຮງຮຽນການເມືອງ ແລະ ການປົກຄອງ ແຂວງສາລະວັນ ແມ່ນພາກສ່ວນໜຶ່ງທີ່ສຳຄັນໃນການປະກອບຄວາມຮູ້ໃຫ້ແກ່ພະນັກງານ, ມີໜ້າທີ່ ແລະ ພາລະບົດບາດໃນການກໍ່ສ້າງ-ບຳລຸງ, ຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ ໃຫ້ແກ່ຖັນແຖວພະນັກງານຫຼັກແຫຼ່ງຂັ້ນແຂວງ ແລະ ເມືອງ, ບັນດາບ້ານຢູ່ທ້ອງຖິ່ນ ຕາມໂຄງການຫຼັກສູດທີ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດວາງອອກ, ຄົ້ນຄວ້າທິດສະດີ ແລະ ພຶດຕິກຳຮັບໃຊ້ການຮຽນ-ການສອນໃຫ້ແກ່ຄະນະພັກ ແລະ ອົງການປົກຄອງຂອງແຂວງ. ປະຈຸບັນມີພະນັກງານ, ຄູອາຈານທັງໝົດ 24 ສະຫາຍ, ຍິງ 11 ສະຫາຍ, ຄະນະໂຮງຮຽນ 3 ສະຫາຍ, ຍິງ

(1) ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ ປີ 2021 ໜ້າ 90.

1 ສະຫາຍ, ຄູອາຈານສອນປະຈໍາ 17 ສະຫາຍ, ຍິງ 6 ສະຫາຍ, ລະດັບການສຶກສາ: ປະລິນຍາໂທ 6 ສະຫາຍ, ຍິງ 1 ສະຫາຍ, ປະລິນຍາຕີ 12 ສະຫາຍ, ຍິງ 6 ສະຫາຍ, ອະນຸປະລິນຍາ 6 ສະຫາຍ, ຍິງ 4 ສະຫາຍ, ລະດັບທິດສະດີຂັ້ນສູງ 11 ສະຫາຍ, ຍິງ 3 ສະຫາຍ, ທິດສະດີຂັ້ນກາງ 4 ສະຫາຍ, ຍິງ 1 ສະຫາຍ, ຂັ້ນຕົ້ນ 2 ສະຫາຍ, ຍິງ 2 ສະຫາຍ, ລະບົບບໍາລຸງ 45 ວັນ 2 ສະຫາຍ, ຍິງ 2 ສະຫາຍ. ຍັງບໍ່ໄດ້ຜ່ານການຮຽນທິດສະດີມາກ-ເລນິນຢ່າງເປັນລະບົບ 5 ສະຫາຍ, ຍິງ 2 ສະຫາຍ ເຊິ່ງສາມາດເວົ້າໄດ້ວ່າ ຄູ-ອາຈານເຫຼົ່ານີ້ສາມາດຮັບຮອງການສິດສອນ, ຖ່າຍທອດຄວາມຮູ້ໃຫ້ນັກສຶກສາ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່.

ໄລຍະຜ່ານມາຄະນະພັກ, ຄະນະໂຮງຮຽນການເມືອງ ແລະ ການປົກຄອງແຂວງສາລະວັນໄດ້ເອົາໃຈໃສ່ນໍາພາ-ຊີ້ນໍາທັນກັບມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງອົງຄະນະພັກແຂວງ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງໜ່ວຍພັກຕົນມາເປັນແຜນງານ ແລະ ໂຄງການອັນລະອຽດສາມາດຈັດຕັ້ງປະຕິບັດໂຄງການຫຼັກສູດການຮຽນ-ການສອນລະບົບກໍ່ສ້າງຂັ້ນກາງ, ຂັ້ນຕົ້ນ, ລະບົບບໍາລຸງ 45 ວັນ, ລະບົບຝຶກອົບຮົມ 10 ວັນສໍາລັບຄະນະພັກບ້ານ ແລະ ນາຍບ້ານ ເຊິ່ງເປັນຫຼັກສູດຂອງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ.

ປີ 2023 ໂຮງຮຽນການເມືອງ ແລະ ການປົກຄອງແຂວງສາລະວັນສາມາດເປີດການຮຽນ-ການສອນກໍ່ຄືສ້າງນັກສຶກສາໄດ້ເປັນຕົ້ນ: ລະບົບກໍ່ສ້າງຂັ້ນກາງ ຮຸ່ນ 16 ໄດ້ມີນັກສຶກສາ ຈໍານວນ 41 ທ່ານ, ຍິງ 9 ທ່ານ; ລະບົບບໍາລຸງຂັ້ນກາງ ຮຸ່ນທີ 1 ມີທັງໝົດ 56 ທ່ານ, ຍິງ 16 ທ່ານ; ຂັ້ນຕົ້ນໄດ້ທັງໝົດ 2 ຮຸ່ນ ມີນັກສຶກສາຈໍານວນ 120 ທ່ານ, ຍິງ 42 ທ່ານ, ຈັດຕັ້ງປະຕິບັດໂຄງການຫຼັກສູດເຝິກອົບຮົມ 10 ວັນສໍາລັບຄະນະພັກບ້ານ ແລະ ນາຍບ້ານສໍາເລັດ 2 ຊຸດ ມີຜູ້ເຂົ້າຮ່ວມເຝິກອົບຮົມທັງໝົດ 93 ທ່ານ, ຍິງ 5 ທ່ານເຊິ່ງບັນດາທ່ານທີ່ຮຽນຈົບຈາກລະບົບຕ່າງໆນັ້ນ ໄດ້ກາຍເປັນພະນັກງານຫຼັກແຫຼ່ງ, ເປັນພະນັກງານສືບທອດຢູ່ແຕ່ລະກົມກອງ, ຂະແໜງການ, ຮາກຖານທ້ອງຖິ່ນໃນແຂວງສາລະວັນ.

ຈາກຜົນງານ, ຜົນສໍາເລັດທີ່ກ່າວມານັ້ນ, ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລ້ວຍັງມີຂໍ້ຈໍາກັດຈໍານວນໜຶ່ງ ເປັນຕົ້ນແມ່ນ:

1). ການຂຶ້ນແຜນ ແລະ ການຄັດເລືອກເປົ້າໝາຍ; ການປະຕິບັດນະໂຍບາຍຕ່າງໆ ແລະ ການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບວຽກງານກໍ່ສ້າງ-ບໍາລຸງພະນັກງານຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

2). ການຄຸ້ມຄອງຫຼັກສູດ ການຮຽນ-ການສອນ ບາງດ້ານຍັງບໍ່ທັນເຂັ້ມງວດ, ຍັງບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນໄລຍະໃໝ່, ການສິດສອນແບບໃໝ່ຂອງຄູ-ອາຈານ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ.

3). ການກໍ່ສ້າງ-ບໍາລຸງຖັນແຖວ ຄູ-ອາຈານ ບໍ່ທັນມີແຜນສ້າງຢ່າງຊັດເຈນ ແລະ ບໍ່ທັນຮັບປະກັນລັກສະນະສືບທອດ 3 ຮຸ່ນ ຄື: ອາວຸໂສ, ກາງ, ໜຸ່ມນ້ອຍ.

4). ການສະໜອງງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ທີ່ຈໍາເປັນ ແລະ ການກໍ່ສ້າງພື້ນຖານໂຄງລ່າງບໍ່ທັນຕອບສະໜອງເທົ່າທີ່ຄວນເປັນຕົ້ນ: ຫ້ອງຮຽນ, ຫ້ອງຄອມພິວເຕີ, ສະໂມສອນ, ຫໍສະໝຸດ, ຄອມພິວເຕີ, ເຄື່ອງສາຍແອວອີດີ, ພາຫະນະ ແລະ ອື່ນໆ.

5). ການກວດກາ ແລະ ປະເມີນຜົນ ການກໍ່ສ້າງ-ບໍາລຸງພະນັກງານ ໃນແຕ່ລະໄລຍະຍັງບໍ່ທັນກາຍເປັນລະບອບແບບແຜນ ເທົ່າທີ່ຄວນ, ບາງຈຸດບໍ່ສາມາດປະຕິບັດຕາມໂຄງການຫຼັກສູດກໍານົດໄວ້ ເປັນຕົ້ນແມ່ນຊົ່ວໂມງການຂຶ້ນຫ້ອງບັນຍາຍ, ກຽມສໍາມະນາ ແລະ ສໍາມະນາ, ບາງວິຊາປະຕິບັດບໍ່ໄດ້ຕາມຫຼັກສູດກໍາ

ນົດໄວ້, ເວລາຂຶ້ນຫ້ອງສະໝຸດ, ເວລາຄົ້ນຄວ້າ ແລະ ການໄປທັດສະນະລົງເກັບກຳຂໍ້ມູນມີຈຳກັດ.

ເພື່ອເຮັດໃຫ້ວຽກງານກໍ່ສ້າງ-ບຳລຸງພະນັກງານ ຢູ່ໂຮງຮຽນການເມືອງ ແລະ ການປົກຄອງແຂວງສາລະວັນ ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ຖືກຕ້ອງ, ສອດຄ່ອງຫຼັກການຂອງພັກ ໃນສະພາບເງື່ອນໄຂປະຈຸບັນ ຕ້ອງໄດ້ເພີ່ມທະວີເອົາໃຈໃສ່ປັບປຸງແກ້ໄຂເນື້ອໃນຕົ້ນຕໍດັ່ງນີ້:

ໜຶ່ງ: ຄະນະພັກ-ຄະນະນຳຂອງແຂວງ, ໂຮງຮຽນການເມືອງ ແລະ ການປົກຄອງແຂວງ ຈະຕ້ອງເພີ່ມທະວີເອົາໃຈໃສ່ໃນການກໍ່ສ້າງ-ບຳລຸງພະນັກງານຢ່າງເປັນລະບົບ ແລະ ຕໍ່ເນື່ອງ, ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢ່າງລະອຽດ ເພື່ອຄັດເລືອກເປົ້າໝາຍໃຫ້ຖືກຕ້ອງ ແລະ ສອດຄ່ອງກັບມາດຕະຖານເງື່ອນໄຂທີ່ກຳນົດ, ພ້ອມດຽວກັນນັ້ນ, ກໍ່ຕ້ອງໃຫ້ບູລິມະສິດພິເສດຕໍ່ຄູ-ອາຈານ ໂຮງຮຽນການເມືອງ-ການປົກຄອງ ໄດ້ມີໂອກາດ ໄປຍົກລະດັບວິຊາສະເພາະ ຫຼື ທິດສະດີການເມືອງ-ການປົກຄອງໃນລະດັບຕ່າງໆ ທີ່ແນ່ນອນ.

ສອງ: ເພີ່ມທະວີການຄົ້ນຄວ້າປັບປຸງຫຼັກສູດການຮຽນ-ການສອນ ໃຫ້ມີການຫັນປ່ຽນໄປໃນທາງທີ່ດີຂຶ້ນ ໂດຍຖືເອົາຄຸນນະພາບ ຂອງການຮຽນ-ການສອນເປັນສຳຄັນ, ຫັນໄປສູ່ການສິດສອນແບບໃໝ່ ຕິດພັນກັບການນຳໃຊ້ເຄື່ອງມືອຸປະກອນການສິດສອນທີ່ທັນສະໄໝ, ເອົານັກສຶກສາເປັນໃຈກາງ, ນຳເອົາບັນຫາຕ່າງໆທີ່ພົ້ນເດັ່ນໃນສັງຄົມເຂົ້າມາສຶກສາຄົ້ນຄວ້າໃນຫ້ອງຮຽນ ແລະ ສຳມະນາ ເພື່ອຊອກຫາຄຳຕອບ ແລະ ວິທີການແກ້ໄຂ; ເນື້ອໃນການສອນຂອງຄູ-ອາຈານ ຕ້ອງພັດທະນາໃຫ້ສອດຄ່ອງກັບເນື້ອໃນຫຼັກສູດ ຕາມມາດຕະຖານການສຶກສາແຫ່ງຊາດ, ພ້ອມທັງຍົກລະດັບເນື້ອໃນການສອນຂອງຄູ-ອາຈານ ໃຫ້ສອດຄ່ອງກັບຫຼັກສູດ; ຄົ້ນຄວ້ານິຕິກຳຕ່າງໆ ເພື່ອຕອບສະໜອງໃຫ້ແກ່ການຮຽນ-ການສອນ ໃຫ້ແທດເໝາະກັບຄວາມຕ້ອງການຕົວຈິງທາງດ້ານປະລິມານ ແລະ ຄຸນນະພາບ.

ສາມ: ເອົາໃຈໃສ່ຍົກລະດັບຖັນແຖວຄູ-ອາຈານ ໃຫ້ເປັນລະບົບຄົບຊຸດ ດ້ວຍຮູບການສົ່ງໄປຍົກລະດັບທິດສະດີການເມືອງ-ການປົກຄອງ ແລະ ວິຊາສະເພາະ, ຝຶກອົບຮົມໄລຍະສັ້ນ-ໄລຍະຍາວຫົວຂໍ້ຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດຢ່າງເປັນປົກກະຕິ, ສົ່ງລົງກໍ່ສ້າງຮາກຖານການເມືອງຕາມສາຍວິຊາສະເພາະ ແລະ ເຂົ້າຮ່ວມສຳມະນາຄົ້ນຄວ້າວິທະຍາສາດ, ຄົ້ນຄວ້າທິດສະດີ, ພຶດຕິກຳ ເພື່ອໃຫ້ມີຄວາມສຳນິສຳນານໃນການສິດສອນ, ເອົາໃຈໃສ່ຕິດຕາມ, ປະເມີນຜົນຢ່າງຮອບດ້ານ ຕໍ່ການບຳລຸງ-ກໍ່ສ້າງໃຫ້ເປັນປົກກະຕິ ພ້ອມທັງຄຸ້ມຄອງ, ນຳໃຊ້ຢ່າງແທດເໝາະກັບສະພາບຄວາມເປັນຈິງ.

ສີ່: ຄະນະພັກ, ຄະນະນຳຕ້ອງເອົາໃຈໃສ່ໃນການຈັດສັນງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ ໃຫ້ພຽງພໍຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ພ້ອມທັງຫັນໄປສູ່ຄວາມທັນສະໄໝເທື່ອລະກ້າວ.

ສັງລວມແລ້ວ, ວຽກງານກໍ່ສ້າງ-ບຳລຸງພະນັກງານທາງດ້ານທິດສະດີການເມືອງ ແລະ ການປົກຄອງໃຫ້ແກ່ພະນັກງານ ຂອງໂຮງຮຽນການເມືອງ ແລະ ການປົກຄອງແຂວງສາລະວັນ ເປັນບັນຫາສຳຄັນ ແລະ ຈຳເປັນທີ່ສຸດ ເພາະນັກສຶກສາສ່ວນໃຫຍ່ແມ່ນພະນັກງານທີ່ນອນແຜນກໍ່ສ້າງ ແລະ ເປັນເປົ້າໝາຍສືບທອດປ່ຽນແທນໃນແຕ່ລະຂະແໜງການ. ສະນັ້ນ, ຄະນະພັກແຕ່ລະຂັ້ນ ຕ້ອງໄດ້ເປັນເຈົ້າການ ແລະ ເອົາໃຈໃສ່ຢ່າງຈິງຈັງໃນການຄົ້ນຄວ້າ, ເລືອກເຟັ້ນເປົ້າໝາຍທີ່ຈະມາກໍ່ສ້າງໃຫ້ຖືກຕ້ອງຕາມມາດຕະຖານເງື່ອນໄຂທີ່ກຳນົດໄວ້ ແນໃສ່ສ້າງພະນັກງານໃຫ້ພຽບພ້ອມໄປດ້ວຍຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທຳປະຕິວັດ ເພື່ອເຮັດຫຼອນໜ້າທີ່ການເມືອງທີ່ການຈັດຕັ້ງມອບໝາຍໃຫ້, ສືບຕໍ່ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງໜ່ວຍພັກຕົນ ໃຫ້ປະກົດຜົນເປັນຈິງເທື່ອລະກ້າວ...ຯ

ເພີ່ມທະວີການນຳພາຂອງຄະນະພັກ ຕໍ່ວຽກງານສະຫະພັນນັກຮົບເກົ່າ ແຂວງຈຳປາສັກ

ໂດຍ: ຄຳຝົນ ແສງປະເສີດ

ເພື່ອສືບຕໍ່ຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ ນຳພາປວງຊົນລາວທັງຊາດປະຕິບັດສອງໜ້າທີ່ຍຸດທະສາດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດແນໃສ່ກໍ່ສ້າງ ແລະ ເສີມຂະຫຍາຍລະບອບປະຊາທິປະໄຕປະຊາຊົນຕາມທິດກ້າວຂຶ້ນສັງຄົມນິຍົມຢ່າງໜັກແໜ້ນເຂັ້ມແຂງ. ພັກຕ້ອງເພີ່ມທະວີບົດບາດການນຳພາຂອງພັກ ໃນທຸກຂົງເຂດວຽກງານ. ໄປຄຽງຄູ່ກັນນັ້ນ, ການປັບປຸງກົງຈັກລັດໃຫ້ມີຄວາມສັກສິດ ແລະ ມີປະສິດທິພາບ ແລະ ເອົາໃຈໃສ່ຊຸກຍູ້ວຽກງານແນວໂຮມ ແລະ ອົງການເຄື່ອນໄຫວປົ່ນອ້ອມ, ເສີມຂະຫຍາຍສິດເປັນເຈົ້າຕົນເອງຂອງປະຊາຊົນຢ່າງຕັ້ງໜ້າ. ສະນັ້ນ, ຄະນະພັກທຸກຂັ້ນຕ້ອງປັບປຸງ ແລະ ເພີ່ມທະວີການນຳພາຂອງຕົນຕໍ່ການເຄື່ອນໄຫວ ຂອງອົງການແນວລາວສ້າງຊາດ,ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງສັງຄົມອື່ນໆ ທີ່ເຮັດໜ້າທີ່ເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນທົ່ວສັງຄົມ ເວົ້າລວມ, ເວົ້າສະເພາະສະຫະພັນນັກຮົບເກົ່າ ແມ່ນອົງການໜຶ່ງເຮັດໜ້າທີ່ເຕົ້າໂຮມຄວາມສາມັກຄີ ທັງເປັນຕົວແທນແຫ່ງຄວາມມຸ່ງມາດປາຖະໜາຜົນປະໂຫຍດອັນຊອບທຳຂອງອະດີດທະຫານ, ນັກຮົບປະຕິວັດ ນັບທັງຜູ້ເສຍອົງຄະໃນການສູ້ຮົບ ຕ້ອງໄດ້ຮັບການດູແລເບິ່ງແຍງຊີວິດການເປັນຢູ່ໃຫ້ດີຂຶ້ນ.

ຕໍ່ກັບຄວາມໝາຍສຳຄັນດັ່ງກ່າວ ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກໄດ້ກຳນົດຄາດໝາຍຈຸດສຸມໃນການເພີ່ມທະວີວຽກງານແນວໂຮມ ແລະ ວຽກງານມະຫາຊົນ ຂອງພັກໄວ້ວ່າ: ຄະນະກຳມະການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ ແລະ ສະຫະພັນກຳມະບານລາວ ພ້ອມທັງບັນດາອົງການຈັດຕັ້ງສັງຄົມຕ່າງໆທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວສອດຄ່ອງຕາມກົດໝາຍຂອງ ສປປ ລາວ ເປັນກົນໄກພື້ນຖານ ໃນການປະຕິບັດວຽກງານມະຫາຊົນຂອງພັກ, ເປັນບ່ອນເຕົ້າໂຮມ ແລະ ສຶກສາອົບຮົມຍົກລະດັບຄວາມຕື່ນຕົວທາງການເມືອງ ໃຫ້ປະຊາຊົນບັນດາເຜົ່າ ທັງຈັດຕັ້ງນຳພາເຂົ້າຮ່ວມຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ສ້າງຂະບວນການເຄື່ອນໄຫວຕ້ານປະກົດການຫຍໍ້ທໍ້ໃນສັງຄົມ. ພ້ອມດຽວກັນນັ້ນ, ຄະນະພັກທຸກຂັ້ນຕ້ອງຖືການປັບປຸງອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ ຢູ່ຂັ້ນຂອງຕົນໃຫ້ເຂັ້ມແຂງ ແມ່ນວຽກງານພື້ນຖານ ແລະ ເປັນຄວາມຮັບຜິດຊອບການເມືອງ ທີ່ຕ້ອງໄດ້ນຳພາ-ຊີ້ນຳໂດຍກົງເປັນທັງສ່ວນປະກອບທີ່ສຳຄັນໃນການປັບປຸງພາຍໃນຖັນແຖວຂອງພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ. ເວົ້າລວມ, ເວົ້າສະເພາະອົງຄະນະພັກແຂວງຈຳປາສັກ ຍາມໃດກໍ່ໄດ້ເອົາໃຈໃສ່ຊີ້ນຳ-ນຳພາຢ່າງໃກ້ຊິດຕໍ່ສະຫະພັນນັກຮົບເກົ່າ ໃນການເບິ່ງແຍງດູແລຖັນແຖວນັກຮົບເກົ່າ ເປັນວຽກງານໜຶ່ງທີ່ສຳຄັນ ເພື່ອເປັນແວ່ນແຍງໃຫ້ຄົນຮຸ່ນໜຸ່ມໃນການປະຕິບັດສິດ ແລະ ພັນທະຕໍ່ປະເທດຊາດ ເຊິ່ງແມ່ນຄວາມຮັບຜິດຊອບຂອງທົ່ວສັງຄົມທີ່ຈະຕ້ອງໄດ້ເພີ່ມທະວີການສຶກສາອົບຮົມ ໃຫ້ມີຄວາມຕື່ນຕົວສູງທາງດ້ານການເມືອງ, ແນວຄິດ ແລະ ການຈັດຕັ້ງ, ພ້ອມກັນນັ້ນ, ກໍ່

ຕ້ອງເອົາໃຈໃສ່ໃນການຍົກລະດັບຄວາມຮູ້, ຄວາມສາມາດໃນດ້ານຕ່າງໆໃຫ້ແກ່ພະນັກງານ-ສະມາຊິກພັກຜູ້ທີ່ເຮັດວຽກງານດັ່ງກ່າວ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນໄລຍະໃໝ່; ພ້ອມທັງປັບປຸງລະບອບນະໂຍບາຍທາງດ້ານວັດຖຸ ແລະ ຈິດໃຈ ໃຫ້ເໝາະສົມກັບສະພາບເສດຖະກິດ-ສັງຄົມ, ປັບປຸງລະບອບນະໂຍບາຍຕໍ່ຜູ້ອາວຸໂສອອກບຳນານຕື່ມອີກ, ສ້າງເງື່ອນໄຂໃຫ້ພວກເພິ່ນໄດ້ເຄື່ອນໄຫວຮ່ວມຊີວິດທາງດ້ານການເມືອງ, ໄດ້ຮັບການເບິ່ງແຍງດູແລດ້ານສຸຂະພາບ, ໄດ້ຮັບຄວາມອົບອຸ່ນທາງດ້ານຈິດໃຈ, ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານການອຸທິດໃນພາລະກິດຕໍ່ສູ້ກູ້ຊາດ ກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາລະບອບໃໝ່.

ຜ່ານການຈັດຕັ້ງປະຕິບັດໃນຊຸມປີຜ່ານມາ ເຫັນວ່າ ຄະນະພັກແຕ່ລະຂັ້ນໄດ້ມີຄວາມເອົາໃຈໃສ່ໃນການຊີ້ນຳຢ່າງໃກ້ຊິດ, ອຳນວຍຄວາມສະດວກຫຼາຍດ້ານໃນການພັດທະນາສະຫະພັນນັກຮົບເກົ່າ ໂດຍໄດ້ຫັນເອົາແນວທາງຂອງພັກ, ບັນດາຂໍ້ກຳນົດຂອງລັດມາເປັນແຜນການ, ໂຄງການ, ການເຄື່ອນໄຫວຂອງຕົນເຊິ່ງມີຜົນສຳເລັດໃນຫຼາຍດ້ານເປັນຕົ້ນ:

ສະຫະພັນນັກຮົບເກົ່າແຕ່ລະຂັ້ນ ໄດ້ຖືສຳຄັນວຽກງານສຶກສາອົບຮົມການເມືອງ-ນຳພາແນວຄິດ, ເຕົ້າໂຮມຄວາມສາມັກຄີ ຂອງນັກຮົບເກົ່າ, ເພີ່ມທະວີຄວາມສາມັກຄີຮັກແພງໃນຖັນແຖວນັກຮົບເກົ່າ ແລະ ສາມັກຄີກັບທຸກຊັ້ນຄົນໃນສັງຄົມ ປະກອບສ່ວນເຂົ້າໃນການສ້າງກ້ອນກຳລັງມະຫາສາມັກຄີປອງດອງອັນເປັນປຶກແຜ່ນຂອງປວງຊົນລາວຢູ່ອ້ອມຂ້າງພັກ-ລັດເຊິ່ງກ່ອນອື່ນໝົດໄດ້ຫັນລົງຮາກຖານຢ່າງຕໍ່ເນື່ອງ ແລະ ເກັບກຳສະພາບການເມືອງ-ແນວຄິດ, ຮັບຟັງຄວາມຄິດຄວາມເຫັນຂອງຖັນແຖວພະນັກງານນັກຮົບເກົ່າ, ພ້ອມທັງຈັດຕັ້ງສຶກສາອົບຮົມໃຫ້ແຕ່ລະເປົ້າໝາຍຢ່າງເປັນປະຈຳ ດ້ວຍຫຼາຍຮູບ, ຫຼາຍວິທີ ໂດຍໄດ້ສຸມໃສ່ຊຸກຍູ້ ແລະ ປະຕິບັດລະບອບດຳເນີນຊີວິດການເມືອງ, ຈັດຕັ້ງເຜີຍແຜ່ເຊື່ອມຊຶມບັນດາເອກະສານສຳຄັນຕ່າງໆຂອງພັກ, ກົດໝາຍຂອງລັດ, ມະຕິ, ຄຳສັ່ງ, ຂໍ້ກຳນົດກົດລະບຽບຂອງສະຫະພັນນັກຮົບເກົ່າ ໄດ້ເອົາໃຈໃສ່ເຮັດວຽກງານສຶກສາອົບຮົມການເມືອງໃຫ້ແກ່ສະມາຊິກພັກ, ພະນັກງານ ແລະ ຖັນແຖວນັກຮົບເກົ່າທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຊັ່ນ: ເຜີຍແຜ່ມະຕິ XI ຂອງສູນກາງພັກ, ມະຕິ 68,69 ຂອງກົມການເມືອງສູນກາງພັກ, ມະຕິ VIII ຂອງອົງຄະນະພັກແຂວງ, ມະຕິ IV ແລະ ກົດລະບຽບ ຂອງສະຫະພັນນັກຮົບເກົ່າແຫ່ງຊາດລາວ, ຄຳສັ່ງແນະນຳ ສະບັບເລກທີ 120/ສນຫລ, ກົດໝາຍວ່າດ້ວຍນັກຮົບເກົ່າລາວ, ຂໍ້ກຳນົດສະຫະພັນນັກຮົບເກົ່າແຫ່ງຊາດລາວ ສະບັບເລກທີ 15/ສນຫລ, ວັນ18 ກຸມພາ 2022, ມະຕິ IV ສະຫະພັນນັກຮົບເກົ່າແຂວງ 10 ຄັ້ງ ມີຜູ້ເຂົ້າຮ່ວມ 1.800 ເທື່ອຄົນ, ຍິງ 235 ເທື່ອຄົນ ແລະ ຍັງໄດ້ຈັດຕັ້ງປະຕິບັດຫົວຂໍ້ແຂ່ງຂັນ 3 ດີ 6 ຮັກສາ, ຕິດພັນກັບຫົວຂໍ້ແຂ່ງຂັນ ຮັກຊາດ ແລະ ພັດທະນາ, ວັນຄ້າຍວັນເກີດຂອງຜູ້ນຳການປະຕິວັດ 27 ຄັ້ງ ມີຜູ້ເຂົ້າຮ່ວມ 729 ເທື່ອຄົນ, ຍິງ 243 ເທື່ອຄົນ ແລະ ເຄື່ອນໄຫວປາຖະກະຖາວັນສ້າງຕັ້ງ ສະຫະພັນນັກຮົບເກົ່າແຫ່ງຊາດລາວຄົບຮອບ 20 ປີ ຢ່າງເປັນຂະບວນຟົດຟື້ນໃນທົ່ວແຂວງໃນຂົງເຂດ 9 ເມືອງ 1 ນະຄອນ ມີຜູ້ເຂົ້າຮ່ວມທັງໝົດ 5.569 ເທື່ອຄົນ, ຍິງ 2.082 ເທື່ອຄົນ ແລະ ໄດ້ຮັບການຢັ້ງຢືນ 3 ດີ 6 ຮັກສາ ຂັ້ນປະທານ ສະຫະພັນນັກຮົບເກົ່າແຫ່ງຊາດລາວ ລວມທັງໝົດ 974 ໃບດັ່ງນີ້: ປະເພດບຸກຄົນ 674 ໃບ, ຍິງ 51 ໃບ, ປະເພດກົມກອງ 11 ກົມກອງ, ປະເພດໜ່ວຍຮາກຖານກຸ່ມບ້ານ 116 ໜ່ວຍ, ປະເພດບ້ານ 173 ບ້ານ ແລະ ຍັງໄດ້ປະເມີນບ້ານແບບຢ່າງນັກຮົບເກົ່າເຂັ້ມແຂງ ປີ 2023 ຈຳນວນ 6 ເມືອງ 16 ບ້ານ; ການປັບປຸງກົງຈັກການຈັດຕັ້ງ: ຜ່ານມາໄດ້ເອົາໃຈໃສ່ປັບປຸງເນື້ອໃນ ແລະ ວິທີການເຄື່ອນໄຫວວຽກງານໃຫ້ສອດຄ່ອງ ກັບສະພາບແວດລ້ອມ ແລະ ຄວາມເປັນຈິງຂອງທ້ອງຖິ່ນ, ໂດຍອີງໃສ່ທິດຊີ້ນຳ-ນຳພາ ຂອງຄະນະປະຈຳພັກແຂວງ, ທາງດ້ານວິຊາການແມ່ນໄດ້ຮັບການຊີ້ນຳຈາກສະຫະພັນນັກຮົບເກົ່າແຫ່ງຊາດລາວທັງຮັບປະກັນໃຫ້ຖືກຕາມຫຼັກການ ຂອງພັກ, ໄດ້ບັນຈຸສັບຊ້ອນພະນັກງານ-ລັດຖະກອນໂດຍຖືເອົາຄຸນນະ

ພາບ; ປະຕິບັດຕາມຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 190/ຄລສພ, ຄຳແນະນຳນາຍົກລັດຖະ ມົນຕີ ສະບັບເລກທີ 01/ນຍ ແລະ ຂໍ້ກຳນົດ ຂອງປະທານ ສະຫະພັນນັກຣົບເກົ່າແຫ່ງຊາດລາວ ສະບັບເລກທີ 15/ສນຫລ ໄດ້ປັບປຸງກົງຈັກການຈັດຕັ້ງຢູ່ຂັ້ນແຂວງ, ຂັ້ນເມືອງ, ຂັ້ນແຂວງ ຈາກ 4 ຂະແໜງການມາເປັນ 3 ຂະແໜງການ, ຂັ້ນເມືອງ ຈາກ 4 ໜ່ວຍງານມາເປັນ 2 ໜ່ວຍງານ, ຍັງໄດ້ສັບຊ້ອນປ່ຽນແທນບຸກຄະລາກອນຢູ່ຂັ້ນໜ່ວຍຮາກຖານກຸ່ມບ້ານ 9 ຄັ້ງ ຈຳນວນ: 18 ທ່ານ ແລະ ຍັງເກັບກຳ ຈຳນວນສະມາຊິກນັກຣົບເກົ່າໃນທົ່ວແຂວງມີ 4,789 ສະຫາຍ, ຍິງ 628 ສະຫາຍ; ພ້ອມນັ້ນຍັງໄດ້ຮັບການເລື່ອນຊັ້ນ ຂັ້ນເງິນເດືອນໃຫ້ພະນັກງານ ທີ່ເຮັດໜ້າທີ່ຢູ່ສະຫະພັນນັກຣົບເກົ່າແຂວງຈຳປາສັກ ຄື: ໄດ້ສະເໜີເລື່ອນຊັ້ນ-ຂັ້ນເງິນເດືອນປົກກະຕິ, ໃຫ້ພະນັກງານ-ລັດຖະກອນເປັນປົກກະຕິຕາມງວດ ຈຳນວນ 25 ທ່ານ/ຍິງ 14 ທ່ານ ແລະ ເລື່ອນ 95% ຂຶ້ນສົມບູນ 3 ທ່ານ, ຮັບລັດຖະກອນໃໝ່ 95% 2 ທ່ານ, ຮັບລັດຖະກອນໃໝ່ຢູ່ຂັ້ນແຂວງ 1 ທ່ານ, ຍິງ 1 ທ່ານ, ຢູ່ຂັ້ນເມືອງ 1 ທ່ານ, ຍິງ 1 ທ່ານ; ໄດ້ຮັບການຕົກລົງເລື່ອນຊັ້ນ, ທຽບຊັ້ນຈາກກະຊວງປ້ອງກັນປະເທດ ເລື່ອນຊັ້ນໃຫ້ນາຍ ແລະ ພົນທະຫານທີ່ມາເຮັດໜ້າທີ່ຢູ່ສະຫະພັນນັກຣົບເກົ່າໃນທົ່ວແຂວງ ໄດ້ຮັບການທຽບຊັ້ນຮ້ອຍໂທຂຶ້ນຮ້ອຍເອກ 4 ສະຫາຍ, ຍິງ 1 ສະຫາຍ, ຮັບການທຽບຊັ້ນຮ້ອຍເອກຂຶ້ນພັນຕີ 1 ສະຫາຍ.

ການຊຸກຍູ້ວຽກງານສ້າງເສດຖະກິດ, ປູກຝັງ-ລ້ຽງສັດ ເພື່ອແກ້ໄຂຊີວິດການເປັນຢູ່ຂອງນັກຣົບເກົ່າ ຄະນະພັກ, ຄະນະນຳຂອງແຂວງ ກໍ່ຄືຄະນະປະທານສະຫະພັນນັກຣົບເກົ່າໄດ້ຊີ້ນຳການຈັດຕັ້ງຜັນຂະຫຍາຍພັດທະນາເສດຖະກິດ-ສັງຄົມ ໃນຂົງເຂດນັກຣົບເກົ່າໄດ້ຜັນຂະຫຍາຍສ້າງເສດຖະກິດຄອບຄົວ, ປຸກລະດົມຖັນແຖວນັກຣົບເກົ່າເຊີດຊູຮັກສາມູນເຊື້ອດຸໝັ່ນຂະຫຍັນພຽນ, ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ສ້າງໄດ້ຕົວແບບໃນການລ້ຽງສັດມີ 12 ຄອບຄົວ, ປະເພດງົວ 5.117 ໂຕ, ຄວາຍ 2.100 ໂຕ, ແບ້ 1.272 ໂຕ; ໄດ້ຈັດຕັ້ງກອງທຶນໃນຮູບແບບຕ່າງໆເຊັ່ນ: ກອງທຶນພັດທະນາໃນທົ່ວແຂວງ ມີ 8 ກອງທຶນ, ສະມາຊິກທັງໝົດ 492 ທ່ານ, ຍິງ 11 ທ່ານ ມີທຶນໝູນວຽນຈຳນວນ 256 ລ້ານກວ່າກີບ; ກອງທຶນສະມາຄົມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວລາເສຍຊີວິດໃນທົ່ວແຂວງ ມີ 9 ກອງທຶນ, ມີສະມາຊິກກອງທຶນທັງໝົດ 6.678 ທ່ານ, ຍິງ 1.054 ທ່ານ ມີເງິນທັງໝົດ 628 ລ້ານກວ່າກີບ; ກອງທຶນຄັງສະຫວັດດີການສະຫະພັນນັກຣົບເກົ່າແຂວງຈຳປາສັກ 1 ກອງທຶນ ມີສະມາຊິກທັງໝົດ 291 ທ່ານ ເຊິ່ງການລະດົມທຶນເຂົ້າເປັນເງິນຄັງເກັບຜູ້ລະ 50.000 ກີບ ແລະ ເວລາເສຍຊີວິດ ເກັບຜູ້ລະ 15.000 ກີບ/ຄົນ/ສົບ ເພື່ອແບ່ງປັນຊ່ວຍເຫຼືອກັນໃນເວລາສະມາຊິກເສຍຊີວິດ.

ຄຽງຄູ່ກັບຜົນງານທີ່ຍາດມາໄດ້ຂ້າງເທິງນັ້ນ ຍັງມີບາງບັນຫາຄົງຄ້າງ ຈະຕ້ອງໄດ້ເອົາໃຈໃສ່ໃນການນຳພາຂອງພັກ ຕໍ່ວຽກງານນັກຣົບເກົ່າເປັນຕົ້ນແມ່ນການນຳພາຂອງພັກບາງບ່ອນໃນວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານນັກຣົບເກົ່າເພື່ອດຶງດູດເອົາຖັນແຖວນັກຣົບເກົ່າເຂົ້າການຈັດຕັ້ງຍັງບໍ່ທັນແຂງແຮງ ແລະ ກວ້າງຂວາງ, ການຈັດຕັ້ງຜັນຂະຫຍາຍເອກະສານສຳຄັນຕ່າງໆຂອງພັກ, ຂອງລັດ ແລະ ຂອງນັກຣົບເກົ່າຍັງບໍ່ທັນບັນລຸຄາດໝາຍເທົ່າທີ່ຄວນ, ການຈັດຕັ້ງນັກຣົບເກົ່າຂັ້ນຮາກຖານເຄື່ອນໄຫວຍັງບໍ່ປົກກະຕິ, ການສ້າງຄວາມເປັນເອກະພາບດ້ານເນື້ອໃນ ແລະ ການເຄື່ອນໄຫວລົງຮອດຮາກຖານຍັງບໍ່ທັນໄດ້ດີ, ການພົວພັນປະສານສົມທົບຂອງສະຫະພັນນັກຣົບເກົ່າຈຳນວນໜຶ່ງກັບຄະນະພັກ, ອຳນາດການປົກຄອງຂັ້ນຂອງຕົນບໍ່ທັນສະໜິດແໜ້ນ ແລະ ກົມກຽວເທົ່າທີ່ຄວນ, ການປະຕິບັດນະໂຍບາຍບາງບ່ອນຍັງບໍ່ທັນແທດກັບຕົວຈິງ; ພະນັກງານ, ລັດຖະກອນຈຳນວນໜຶ່ງທີ່ເປັນເສນາທິການຊ່ວຍ ຄວາມຮັບຮູ້ເຂົ້າໃຈຕໍ່ວຽກງານດັ່ງກ່າວບໍ່ທັນເລິກເຊິ່ງ, ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງບໍ່ທັນສູງ; ດ້ານອຸປະກອນນຳໃຊ້ຈຳນວນໜຶ່ງບໍ່ທັນຕອບສະໜອງໄດ້ກັບຄວາມຕ້ອງການ ຂອງໜ້າທີ່ວຽກງານ; ການສະຫຼຸບ, ສ່ອງແສງລາຍງານຂອງບັນດາເມືອງ ທີ່ສົ່ງໃຫ້ສະຫະພັນນັກຣົບເກົ່າ

ແຂວງ ຍັງເຮັດບໍ່ທັນໄດ້ດີ, ການເບິ່ງແຍງຊ່ວຍເຫຼືອເຊິ່ງກັນ ແລະ ກັນຂອງນັກຮົບເກົ່າດ້ວຍກັນໃນເວລາພົບຄວາມຫຍຸ້ງຍາກ, ເວລາເຈັບເປັນບໍ່ທັນໄດ້ຮັບການສົ່ງເສີມຢ່າງຕັ້ງໜ້າ; ການສ້າງເສດຖະກິດ, ການຜະລິດປູກຝັງ-ລ້ຽງສັດເປັນສິນຄ້າ ເພື່ອແກ້ໄຂຊີວິດການເປັນຢູ່ຍັງບໍ່ທັນສົມກັບທ່າແຮງທີ່ມີຢູ່.

ເພື່ອຮັບປະກັນໃຫ້ແກ່ການນໍາພາຂອງພັກຕໍ່ກັບວຽກງານນັກຮົບເກົ່າ ໃນການປະຕິບັດນະໂຍບາຍຕໍ່ນັກຮົບຜູ້ທີ່ມີຄຸນງາມຄວາມດີໃຫ້ຖືກຕ້ອງ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ເຮັດໃຫ້ສະຫະພັນນັກຮົບເກົ່າປະຕິບັດໜ້າທີ່ການເມືອງຂອງຕົນໃຫ້ສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການກັບສະພາບການໃໝ່ ຄວນເອົາໃຈໃສ່ບາງເນື້ອໃນລຸ່ມນີ້:

ໜຶ່ງ, ຄະນະພັກທຸກຂັ້ນ ຕ້ອງເພີ່ມທະວີເອົາໃຈໃສ່ນໍາພາ-ຊີ້ນໍາຢ່າງໃກ້ຊິດຕໍ່ສະຫະພັນນັກຮົບເກົ່າ ເພື່ອສ້າງເງື່ອນໄຂໃຫ້ເຂົາເຈົ້າປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຕິດພັນກັບການກໍາແໜ້ນ ແລະ ຜັນຂະຫຍາຍແນວທາງຂອງພັກ, ລັດຖະທໍາມະນູນ ແລະ ກົດໝາຍຂອງລັດຢ່າງມີຫົວຄິດປະດິດສ້າງ, ຕ້ອງຖືເອົາທຸກໆມະຕິ, ຄໍາສັ່ງ, ຄໍາແນະນໍາຂອງພັກເປັນບ່ອນອີງພື້ນຖານໃນການຈັດຕັ້ງປະຕິບັດ, ທັງມີການຕິດຕາມ, ກວດກາ, ສະຫຼຸບຕີລາຄາການເຄື່ອນໄຫວວຽກງານຢ່າງເປັນປະຈໍາ.

ສອງ, ສະຫະພັນນັກຮົບເກົ່າ ຕ້ອງເປັນເຈົ້າການເຕົ້າໂຮມຄວາມສາມັກຄີໃນຖັນແຖວນັກຮົບເກົ່າ, ປະສານສົມທົບກັບອົງການຂອງພັກ ແລະ ລັດໃນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ຄຸນງາມຄວາມດີໃຫ້ທົ່ວເຖິງ ແລະ ສອດຄ່ອງ; ຊຸກຍູ້ໃຫ້ນັກຮົບເກົ່າປະກອບສ່ວນສຶກສາອົບຮົມຮຸ່ນຄົນສືບທອດໃຫ້ມີນໍ້າໃຈຮັກຊາດ, ມີຄວາມເອກອ້າງທະນົງໃຈຕໍ່ຜົນງານການອຸທິດຂອງນັກຮົບເກົ່າ ແລະ ເສີມຂະຫຍາຍມູນເຊື້ອອັນສະຫງ່າລາສີຂອງນັກຮົບປະຕິວັດ, ຊຸກຍູ້ໃຫ້ບັນດານັກຮົບເກົ່າໄດ້ແລກປ່ຽນບົດຮຽນການດໍາລົງຊີວິດນໍາກັນ, ຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ.

ສາມ, ສືບຕໍ່ປັບປຸງການຈັດຕັ້ງສະຫະພັນນັກຮົບເກົ່າແຕ່ລະຂັ້ນ ໃຫ້ສາມາດເປັນຕົວແທນສິດຜົນປະໂຫຍດຂອງນັກຮົບເກົ່າໄດ້ຢ່າງແທ້ຈິງ, ເຄື່ອນໄຫວປຸກລະດົມຂົນຂວາຍນັກຮົບເກົ່າເຂົ້າໃນການຈັດຕັ້ງ ແລະ ໂຄສະນາສຶກສາອົບຮົມໃຫ້ພວກເພິ່ນສືບຕໍ່ເສີມຂະຫຍາຍມູນເຊື້ອຮັກຊາດ, ຮັກກຽດສັກສີ ແລະ ຄວາມເປັນແບບຢ່າງໃຫ້ແກ່ລູກຫຼານ ແລະ ຄົນຮຸ່ນສືບທອດ.

ສີ່, ຫັນລົງຮາກຖານຢ່າງແຂງແຮງ, ກໍາແໜ້ນສະສະພາບການເມືອງ-ແນວຄິດ ກໍ່ຄືສະພາບດ້ານອື່ນໆຂອງຖັນແຖວນັກຮົບເກົ່າ, ສົມທົບແໜ້ນກັບຄະນະພັກ-ອໍານາດການປົກຄອງທ້ອງຖິ່ນຂັ້ນຕ່າງໆແນໃສ່ເພີ່ມທະວີການນໍາພາຂອງພັກຕໍ່ວຽກງານນັກຮົບເກົ່າ; ສ້າງເງື່ອນໄຂໃຫ້ນັກຮົບເກົ່າ ໄດ້ປະກອບສ່ວນໃນຂະບວນການຕ່າງໆ ຢູ່ຮາກຖານ. ພ້ອມກັນນັ້ນ, ນໍາພາຢ່າງໃກ້ຊິດສ້າງເງື່ອນໄຂ, ສິ່ງອໍານວຍຄວາມສະດວກໃນການສ້າງເສດຖະກິດ, ການຜະລິດປູກຝັງ-ລ້ຽງສັດຂອງນັກຮົບເກົ່າ ເພື່ອໃຫ້ນັກຮົບເກົ່າໄດ້ເຮັດຕາມທ່າແຮງ, ຕາມຄວາມສາມາດແບ່ງປັນຜົນປະໂຫຍດໃຫ້ນັກຮົບເກົ່າຢ່າງສົມເຫດສົມຜົນ, ຊຸກຍູ້ ແລະ ສົ່ງເສີມຄອບຄົວຕົວແບບໃນການຜະລິດ, ສ້າງເງື່ອນໄຂໃຫ້ຄອບຄົວນັກຮົບເກົ່າທີ່ທຸກຍາກໄດ້ມີໂອກາດຖອດຖອນບົດຮຽນ ແລະ ພັດທະນາຕົນເອງ.

ການເພີ່ມທະວີການນໍາພາຂອງພັກຕໍ່ວຽກງານນັກຮົບເກົ່າ ເນື້ອແທ້ກໍ່ແມ່ນພັກນໍາພາການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຫະພັນນັກຮົບເກົ່າໃຫ້ປະຕິບັດຕາມພາລະບົດບາດ, ສິດ, ໜ້າທີ່ຂອງຕົນ ໃນການຮັກສາມູນເຊື້ອອັນພິລະອາດຫານ, ການເຕົ້າໂຮມຄວາມສາມັກຄີຂອງນັກຮົບເກົ່າ, ເບິ່ງແຍງດູແລຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ, ການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານຕໍ່ການປະຕິວັດ, ຕໍ່ປະເທດຊາດ ກາຍເປັນແບບຢ່າງ ແລະ ແວ່ນແຍງທີ່ດີໃຫ້ຄົນຮຸ່ນຫຼັງ ຈາລຶກຄຸນງາມຄວາມດີຂອງນັກຮົບປະຕິວັດ ພ້ອມທັງຊ່ວຍເຫຼືອ ແລະ ສ້າງໂອກາດໃຫ້ໄດ້ພັດທະນາຊີວິດການເປັນຢູ່ຂອງນັກຮົບເກົ່າໃຫ້ນັບມື້ນັບດີຂຶ້ນເລື້ອຍໆ...ຯ

ບາງບັນຫາຄວນເອົາໃຈໃສ່ໃນວຽກງານ ປ້ອງກັນພັກ-ພະນັກງານ

ໂດຍ: ວິລະກອນ ວົງໄພຈິດ

ໃນເງື່ອນໄຂສະພາບການຂອງໂລກ, ພາກພື້ນ ແລະ ສະພາບພາຍໃນປະເທດມີການຜັນແປຢ່າງຢ່າງ ໄວວາ ແລະ ບໍ່ສາມາດຄາດການໄດ້, ສະພາບບັນຫາເສດຖະກິດ-ການເງິນພາຍໃນພົບຄວາມຫຍຸ້ງຍາກ ແລະ ໄພເງິນເຟີ້, , ບັນຫາໜີ້ສິນສາທາລະນະມາຍາວນານ ສະພາບບັນຫາດັ່ງກ່າວໄດ້ກາຍເປັນອຸປະສັກ ແລະ ສິ່ງຜົນກະທົບຢ່າງໃຫຍ່ຫຼວງຕໍ່ກັບປະຕິບັດຄາດໝາຍສູ້ຊົນ ແລະ ສິ່ງທ້າທາຍໂດຍກົງຕໍ່ບົດບາດການນຳພາຂອງພັກ ແລະ ຊີວິດການເປັນຢູ່ຂອງພະນັກງານ-ສະມາຊິກພັກ, ປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ອັນໄດ້ເຮັດໃຫ້ສະພາບແນວຄິດຈຳນວນໜຶ່ງຂາດຄວາມເຊື່ອໝັ້ນຕໍ່ການນຳພາລວມຂອງພັກ ແລະ ມັນຮຽກຮ້ອງໃຫ້ພັກຕ້ອງຍົກສູງບົດບາດການນຳພາຂອງພັກ ນັບມື້ສູງຂຶ້ນ, ໃນແຕ່ລະຂົງເຂດ ບໍ່ວ່າຢູ່ໃນຂົງເຂດລັດ, ເອກະຊົນ, ຂົງເຂດການຕ່າງປະເທດ ລ້ວນແຕ່ຮຽກຮ້ອງໃຫ້ມີເນື້ອໃນ, ຮູບການ ແລະ ວິທີການນຳພາຂອງພັກທີ່ສອດຄ່ອງ ແລະ ມີຄຸນນະພາບໃໝ່ ປະຈຸບັນຄຸນນະພາບ ຂອງຄະນະພັກ, ສະມາຊິກພັກຂອງພວກເຮົາບໍ່ທັນສູງ ເມື່ອທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນສະພາບການໃໝ່ ແລະ ອີກດ້ານໜຶ່ງພວກອິດທິກຳລັງປໍລະປັກ ກໍ່ຄືພວກຄົນບໍ່ດີ ຍັງສືບຕໍ່ປະຕິບັດກົນອຸບາຍທຳລາຍມ້າງເພພາຍໃນພັກ ຂອງພວກເຮົາ ເຊິ່ງນັບມື້ນັບເລິກແລບແນບນຽນກວ່າເກົ່າ ເພື່ອຫວັງລົບລ້າງລະບອບສັງຄົມນິຍົມ ດ້ວຍຫຼາຍຮູບແບບເປັນຕົ້ນແມ່ນໃຊ້ຮູບແບບຍຸຍົງສົ່ງເສີມໃຫ້ພາຍໃນເກີດມີບັນຫາແຕກແຍກ ແລະ ພະຍາຍາມເລັດລອດເຂົ້າພາຍໃນພັກ, ສ້າງຄວາມແບ່ງແຍກຄວາມສາມັກຄີພາຍໃນພັກ, ໂຄສະນາບິດເບືອນຄວາມຈິງ, ທັບຖົມບົດບາດການນຳພາຂອງພັກເຮົາ. ຈາກສະພາບຄືດັ່ງກ່າວ ພັກຈຶ່ງມີຄວາມຈຳເປັນຕ້ອງເພີ່ມທະວີເອົາໃຈໃສ່ໃນວຽກງານປ້ອງກັນພັກ, ປ້ອງກັນພະນັກງານໃນໄລຍະໃໝ່ໃຫ້ດີຂຶ້ນກວ່າເກົ່າ ເພື່ອຕອບຕ້ານ ແລະ ສະກັດກັ້ນປະກົດການທີ່ກະທົບໃສ່ບົດບາດການນຳພາຂອງພັກເຮົາ.

ວຽກງານປ້ອງກັນພັກ-ພະນັກງານແມ່ນປ້ອງກັນແນວທາງການເມືອງຂອງພັກເປັນພື້ນຖານ ເລີ່ມແຕ່ແນວຄິດທິດສະດີຂອງພັກ, ແນວທາງແຜນນະໂຍບາຍ, ນະໂຍບາຍຂອງພັກບໍ່ໃຫ້ຜິດເຂວອອກຈາກອຸດົມການ ແລະ ຈຸດໝາຍ; ພ້ອມນັ້ນກໍ່ຕອບຕ້ານທຸກເລ້ຫຼ່ຽມກົນອຸບາຍຂອງພວກຈັກກະພັດ ແລະ ອິດທິກຳລັງປໍລະປັກຢ່າງທັນການ, ປ້ອງກັນການຈັດຕັ້ງຂອງພັກແຕ່ລະຂັ້ນໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ຍືດໝັ້ນປົກປັກຮັກສາຫຼັກການລວມສູນປະຊາທິປະໄຕ ຂອງພັກ, ປົກປັກຮັກສາຄວາມສາມັກຄີເປັນເອກະພາບ, ບົດບາດອິດທິພົນ ຂອງພັກ, ຕ້ານລັດທິເອກະຊົນ, ລັດທິ

ສວຍໂອກາດ, ການສວຍໃຊ້ຖານະຕໍາແໜ່ງຫາຜົນປະໂຫຍດສ່ວນຕົວ, ປ້ອງກັນບໍ່ໃຫ້ຄົນບໍ່ຫວັງດີຕໍ່ການປະຕິວັດເລັດລອດເຂົ້າໃນອົງການນໍາພາແຕ່ລະຂັ້ນ ແລະ ປ້ອງກັນພະນັກງານສະມາຊິກພັກ ບໍ່ໃຫ້ຕົກເຂົ້າກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ.

ສະນັ້ນ, ພັກເຮົາໄດ້ຖືວຽກງານປ້ອງກັນພັກ-ພະນັກງານ ເປັນວຽກງານຍຸດທະສາດຂອງພັກ, ເປັນໜ້າທີ່ຮັບຜິດຊອບອັນຂາດບໍ່ໄດ້ຂອງພັກ ທີ່ຄະນະພັກແຕ່ລະຂັ້ນຕ້ອງເອົາໃຈໃສ່ກໍາແໜ້ນ ແລະ ຈັດຕັ້ງປະຕິບັດຕິດແໜ້ນກັບການປະຕິບັດ ສອງໜ້າທີ່ຍຸດທະສາດ ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເພື່ອສ້າງໃຫ້ພັກກາຍເປັນແກນນໍາໃນລະບົບການເມືອງໃນທົ່ວສັງຄົມ ເຊິ່ງໄລຍະຜ່ານມາສູນກາງໄດ້ອອກບັນດານິຕິກໍາຕ່າງໆ ເພື່ອໃຫ້ຄະນະພັກຂັ້ນຕ່າງໆເຂົ້າໃຈແຈ້ງຕໍ່ສິດ, ພາລະບົດບາດ ແລະ ໜ້າທີ່ ຂອງວຽກງານປ້ອງກັນພັກ-ພະນັກງານໃນໄລຍະໃໝ່ ເປັນຕົ້ນ: ຄໍາສັ່ງ ຂອງກົມການເມືອງສູນກາງພັກ ເລກທີ 08 ລົງວັນທີ 19/06/1998 ວ່າດ້ວຍວຽກງານປ້ອງກັນພັກໃນໄລຍະໃໝ່; ຂໍ້ກໍານົດຂອງຄະນະເລຂາທິການສູນກາງພັກເລກທີ 02 ລົງວັນທີ 24/12/2010 ວ່າດ້ວຍວຽກງານປ້ອງກັນພັກ-ພະນັກງານໃນໄລຍະໃໝ່ ແລະ ບົດແນະນໍາຂອງຄະນະຈັດຕັ້ງສູນກາງພັກ ເລກທີ 63 ລົງວັນທີ 07/09/1998 ແລະ ເລກທີ 63, 64, ລົງວັນທີ 22/01/2013 ວ່າດ້ວຍວຽກງານປ້ອງກັນພັກ-ພະນັກງານໃນໄລຍະໃໝ່; ນອກນັ້ນ, ໃນກົດລະບຽບຂອງພັກແຕ່ລະສະໄໝໄດ້ກໍານົດພາລະບົດບາດ, ສິດ, ໜ້າທີ່, ຂອບເຂດຄວາມຮັບຜິດຊອບ ແລະ ຂໍ້ຫ້າມຂອງສະມາຊິກພັກ ເຊິ່ງທັງໝົດເຫຼົ່ານັ້ນລ້ວນແຕ່ເປັນບ່ອນອີງໃຫ້ຄະນະພັກ ແລະ ຜູ້ຮັບຜິດຊອບວຽກງານກໍ່ສ້າງພັກ-ປ້ອງກັນພັກ ຢູ່ກະຊວງ-ອົງການ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ, ບັນຈຸ, ສັບຊ້ອນ, ໝູນວຽນ, ຈັດວາງສະມາຊິກພັກເຂົ້າຮັບຜິດຊອບວຽກງານໃນຕໍາແໜ່ງທີ່ສໍາຄັນຕ່າງໆ ພ້ອມກັນນັ້ນ, ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ໄດ້ກໍານົດແຈ້ງຕື່ມ ເພື່ອເປັນທິດໃນການຈັດຕັ້ງປະຕິບັດໄວ້ວ່າ: "ເອົາໃຈໃສ່ຍົກສູງຄຸນນະພາບຂອງສະມາຊິກພັກ ຕິດພັນກັບການເພີ່ມທະວີຄຸ້ມຄອງດ້ານລະບຽບວິໄນ, ຊຸກຍູ້ສົ່ງເສີມຂະບວນການຝຶກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທໍາປະຕິວັດ ຕິດພັນກັບການສຶກສາອົບຮົມແນວຄິດ ແລະ ຄຸນສົມບັດສິນທໍາປະຕິວັດຂອງປະທານ ໄກສອນ ພົມວິຫານ, ພັດທະນາດ້ານຄວາມຮູ້ ແລະ ປະສົບການໃນການເຄື່ອນໄຫວນໍາພາການເມືອງ ແລະ ວິຊາສະເພາະ ໃຫ້ສະມາຊິກພັກສູງຂຶ້ນເລື້ອຍໆ. ໃນການຂະຫຍາຍສະມາຊິກພັກໃໝ່ຕ້ອງຖືຄຸນນະພາບເປັນກົກ, ເດັດດ່ຽວ ແກ້ໄຂສະມາຊິກພັກ ທີ່ເສຍທາດຂາດຄຸນ, ຂາດສະຕິຮັບຜິດຊອບຕໍ່ໜ້າທີ່ ແລະ ຂາດຄວາມເປັນແບບຢ່າງໃນການດໍາລົງຊີວິດ ຫຼື ມີການລະເມີດວິໄນຂອງພັກ ແລະ ກົດໝາຍຂອງລັດ ອອກຈາກການຈັດຕັ້ງ ດ້ວຍວິທີການ ແລະ ມາດຕະການຕົວຈິງຢ່າງເດັດຂາດ, ເໝາະສົມ ແລະ ທັນການ".

ເພື່ອຈັດຕັ້ງຜັນຂະຫຍາຍທິດນໍາ ແລະ ບັນດານິຕິກໍາຕ່າງໆທີ່ວາງອອກມານັ້ນ, ຄະນະພັກແຕ່ລະຂັ້ນໄດ້ເອົາໃຈໃສ່ເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍບັນດານິຕິກໍາຕ່າງໆ ກ່ຽວກັບການປ້ອງກັນພັກ-ພະນັກງານ ຢ່າງກວ້າງຂວາງເລິກເຊິ່ງ, ພັກຍັງມີບົດບາດອິດທິພົນເປັນກໍາລັງການເມືອງທີ່ເຂັ້ມແຂງ, ມີຄວາມສາມາດສືບຕໍ່ເປັນແກນນໍາໃນລະບົບການເມືອງ, ເຮັດໃຫ້ສະມາຊິກພັກ-ພະນັກງານ ມີທັດສະນະຫຼັກໝັ້ນຊຶມຂັ້ນການເມືອງໜັກແໜ້ນ, ຈໍາແນກໄດ້ອັນຜິດອັນຖືກ,

ມິດ-ສັດຕູຢ່າງຈະແຈ້ງ, ມີສະຕິຕໍ່ການຈັດຕັ້ງ ແລະ ເປັນເຈົ້າການປ້ອງກັນແນວທາງ, ແຜນນະໂຍບາຍຂອງພັກ, ຕ້ານການໂຄສະນາບິດເບືອນຂອງສັດຕູ, ເລລ່ຽມການມ້າງເພພັກ ແລະ ການແຊກແຊງຂອງພວກກຸ່ມຄົນບໍ່ຫວັງດີຕໍ່ພັກ; ຄະນະພັກແຕ່ລະຂັ້ນຍັງໄດ້ແບ່ງຄວາມຮັບຜິດຊອບໃນການຕິດຕາມ, ກວດກາ, ກຳແໜ້ນສະພາບຖັນແຖວສະມາຊິກພັກທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ; ວຽກງານຂະຫຍາຍພັກເຊິ່ງພາກສ່ວນທີ່ຮັບຜິດຊອບວຽກງານປ້ອງກັນພັກ-ພະນັກງານ ແຕ່ລະຂັ້ນໄດ້ເອົາໃຈໃສ່, ພິຈາລະນາດ້ານການເມືອງຂອງບຸກຄົນຜູ້ຮ້ອງຂໍເຂົ້າພັກຢ່າງເຄັ່ງຄັດ; ວຽກງານບຸກຄະລາກອນກອງປະຊຸມໃຫຍ່ ຂອງພັກແຕ່ລະຂັ້ນ ແລະ ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ແຕ່ລະສະໄໝ ຄະນະພັກແຕ່ລະຂັ້ນ ໄດ້ພິສູດ, ຢັ້ງຢືນ ມາດຕະຖານການເມືອງ, ເລືອກເຟັ້ນເອົາບັນດາສະຫາຍທີ່ຄົບມາດຕະຖານປະກອບເຂົ້າໃນຄະນະພັກຊຸດໃໝ່, ພ້ອມກັນນັ້ນກໍ່ເອົາບັນດາກໍລະນີທີ່ບໍ່ຄົບຖ້ວນມາດຕະຖານການເມືອງອອກຈາກບັນຊີລາຍຊື່ທີ່ຈະອອກສະໝັກຄະນະພັກແຕ່ລະຂັ້ນ, ບໍ່ບັນຈຸເຂົ້າໃນອົງປະກອບຄະນະພັກຊຸດໃໝ່; ວຽກງານສ້າງແຜນກຳນົດພະນັກງານ, ການເລື່ອນຊັ້ນ-ເລື່ອນຂັ້ນ, ການແຕ່ງຕັ້ງພະນັກງານພາກສ່ວນທີ່ຮັບຜິດຊອບວຽກງານປ້ອງກັນພັກ-ພະນັກງານ ກໍ່ໄດ້ເອົາໃຈໃສ່ສົມທົບກັບຄະນະພັກແຕ່ລະຂັ້ນ ເພື່ອປະຕິບັດຕາມຄຳສັ່ງ, ຂໍ້ກຳນົດ ແລະ ຄຳແນະນຳພາກສ່ວນກ່ຽວຂ້ອງ ໃນການຕິດຕາມ, ກວດກາ ຢ່າງເຄັ່ງຄັດ ທາງດ້ານການເມືອງຕໍ່ກັບຜູ້ຈະເອົາເຂົ້າໃນແຜນກຳນົດ, ສ້າງເປັນພະນັກງານຫຼັກແຫຼ່ງຢູ່ແຕ່ລະຂັ້ນ, ພາກສ່ວນທີ່ສຳຄັນ, ເປັນຄວາມລັບ, ຜູ້ທີ່ໄປຕ່າງປະເທດ, ຜູ້ທີ່ມີສາຍພົວພັນກັບບຸກຄົນ, ການຈັດຕັ້ງຂອງຕ່າງປະເທດ. ພ້ອມກັນນັ້ນ ກໍ່ໄດ້ແກ້ໄຂບັນດາກໍລະນີທີ່ບໍ່ຄົບມາດຕະຖານການເມືອງ ທີ່ໄດ້ເລັດລອດເຂົ້າໃນຖັນແຖວພະນັກງານນຳພາ-ຄຸ້ມຄອງ ແລະ ຄະນະພັກແຕ່ລະຂັ້ນ; ໄດ້ແກ້ໄຂສະມາຊິກພັກ-ພະນັກງານ ທີ່ເມີນເສີຍ, ສົມຮູ້ຮ່ວມຄິດ, ໃຫ້ທ້າຍແກ່ການເຄື່ອນໄຫວຂອງພວກຕໍ່ຕ້ານພັກ-ລັດ, ພວກສວຍໂອກາດ, ຄວາມເຊື່ອຖືສາສະໜາ, ຊົນເຜົ່າ ທີ່ສ້າງຜົນກະທົບຕໍ່ຄວາມບໍ່ສະຫງົບດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ເຖິງວ່າໄລຍະຜ່ານມາ ຄະນະພັກແຕ່ລະຂັ້ນຈະເອົາໃຈໃສ່ ແລະ ຖືສຳຄັນກ່ຽວກັບວຽກງານປ້ອງກັນພັກ-ພະນັກງານຫຼາຍຂຶ້ນກໍ່ຕາມ, ຜ່ານການຈັດຕັ້ງປະຕິບັດເຫັນວ່າວຽກງານດັ່ງກ່າວ ຍັງມີບາງດ້ານຍັງຈຳກັດ ແລະ ມີຂໍ້ຄົງຄ້າງຈຳນວນໜຶ່ງເປັນຕົ້ນ:

1). ດ້ານນິຕິກຳກ່ຽວກັບວຽກງານປ້ອງກັນພັກ-ພະນັກງານເນື້ອໃນບາງອັນບໍ່ທັນລະອຽດຈຶ່ງເຮັດໃຫ້ການຈັດຕັ້ງຜັນຂະຫຍາຍພົບຄວາມຫຍຸ້ງຍາກ ແລະ ບໍ່ທັນເປັນເອກະພາບກັນຢູ່ບາງກະຊວງ, ອົງການ ແລະ ທ້ອງຖິ່ນ.

2). ຄວາມຮັບຜິດຊອບຂອງຄະນະພັກບາງບ່ອນຍັງຖືເບົາຕໍ່ກັບວຽກງານປ້ອງກັນພັກ-ພະນັກງານຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງບໍ່ທັນສູງ, ການຄົ້ນຄວ້າເຊື່ອມຊຶມ, ກຳແໜ້ນ, ຜັນຂະຫຍາຍແນວທາງປ້ອງກັນພັກ-ພະນັກງານ ຍັງບໍ່ທັນລົງເລິກເຖິງບັນຫາ, ການເສີມຂະຫຍາຍປະຊາທິປະໄຕບໍ່ແຂງແຮງ; ສະມາຊິກພັກ-ພະນັກງານ ຈຳນວນໜຶ່ງບໍ່ທັນຮັບຮູ້ເຂົ້າໃຈ ຕໍ່ວຽກງານດັ່ງກ່າວ ແລະ ຄະນະພັກສະມາຊິກພັກ-ພະນັກງານ ຈຳນວນໜຶ່ງບໍ່ທັນຮັກສາໄດ້ຄວາມເປັນແບບຢ່າງນຳໜ້າ, ເສື່ອມຖອຍທາງດ້ານຄຸນທາດການເມືອງ, ເກີດພະຍາດອາຍາ

ສິດ, ສວຍໃຊ້ສິດໜ້າທີ່ໄປທາງທີ່ບໍ່ຖືກຕ້ອງ, ສ້າງພັກພວກ, ກຸ່ມກ້ອນ, ເຮັດໃຫ້ບິດບາດອິດທິພົນຕໍ່ມະຫາຊົນເສື່ອມຖອຍລົງ.

3) ບັນດາສະມາຊິກພັກ-ພະນັກງານທີ່ເປັນເສນາທິການໃຫ້ແກ່ຄະນະພັກຂັ້ນເທິງ ກ່ຽວກັບວຽກງານປ້ອງກັນພັກ-ພະນັກງານ ຢູ່ບັນດາກະຊວງ-ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ຈຳນວນໜຶ່ງຍັງບໍ່ທັນກຳເນື້ອໃນໄດ້ລະອຽດ, ຈະແຈ້ງ ເຮັດໃຫ້ຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານດັ່ງກ່າວບໍ່ທັນເລິກເຊິ່ງ, ການຜັນຂະຫຍາຍເນື້ອໃນນິຕິກຳເຂົ້າສູ່ວຽກງານຕົວຈິງບໍ່ທັນໄດ້ດີເທົ່າທີ່ຄວນ, ພະນັກງານຜູ້ຮັບຜິດຊອບວຽກງານປ້ອງກັນພັກ-ພະນັກງານ ຈຳນວນໜຶ່ງຍັງບໍ່ທັນຜ່ານການຝຶກອົບຮົມວຽກງານດັ່ງກ່າວ ຈຶ່ງເຮັດໃຫ້ຄວາມເຂົ້າບໍ່ທັນເລິກເຊິ່ງ.

ເພື່ອເປັນການກຳຈັດປັດເປົ່າບັນດາປັດໄຈກີດຂວາງ, ກີດໜ່ວງການເຕີບໃຫຍ່ຂະຫຍາຍຕົວຂອງພັກ ທີ່ເກີດຂຶ້ນຢູ່ພາຍໃນກະໂຕຂອງພັກ ແນໃສ່ເຮັດໃຫ້ພັກປອດໃສ, ເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີນຳພາ ໃຫ້ສົມກັບຖານະນາມທີ່ພັກເປັນຜູ້ນຳພາ, ເປັນແກນນຳໃນລະບົບການເມືອງ ທັງເປັນການຍົກສູງຄຸນນະພາບວຽກງານປ້ອງກັນພັກ-ພະນັກງານໃນຕໍ່ໜ້າ ໄດ້ຮັບການຈັດຕັ້ງປະຕິບັດມີປະສິດທິຜົນສູງກວ່າເກົ່າ ຄວນເອົາໃຈໃສ່ດັ່ງນີ້:

ໜຶ່ງ: ອົງການເສນາທິການຕ້ອງເກັບກຳສະພາບການໃນການຈັດຕັ້ງບັນດານິຕິກຳກ່ຽວກັບວຽກງານປ້ອງກັນພັກ-ພະນັກງານ ລະຫວ່າງທິດສະດີ ແລະ ພຶດຕິກຳ ວ່າຖືກຕ້ອງສອດຄ່ອງກັບສະພາບເງື່ອນໄຂຕົວຈິງເອົາໃຈໃສ່ປັບປຸງນິຕິກຳໃຫ້ທັນການ ແລະ ສອດຄ່ອງກັບໜ້າທີ່ການເມືອງ ສາມາດຜັນຂະຫຍາຍເຂົ້າສູ່ຊີວິດຕົວຈິງຢູ່ກະຊວງ-ອົງການ ແລະ ທ້ອງຖິ່ນໄດ້ຢ່າງດີ.

ສອງ: ຄະນະພັກແຕ່ລະຂັ້ນ ເອົາໃຈໃສ່ຄົ້ນຄວ້າເຊື່ອມຊຶມທິດສະດີມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ, ແນວທາງ, ແຜນນະໂຍບາຍຂອງພັກ, ກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດ; ແນໃສ່ຍົກສູງສະຕິລະວັງຕົວປະຕິວັດ ແລະ ຍົກສູງບົດບາດເປັນແກນນຳ ຂອງຄະນະພັກ ດຳເນີນການສຶກສາອົບຮົມການເມືອງ-ແນວຄິດ ຕິດພັນກັບການສຳຫຼວດກວດກາ, ຕຳນິຕົນເອງ ແລະ ຕຳນິກັນຢ່າງເປັນປະຈຳ ແນໃສ່ຕອບຕ້ານຕໍ່ເລ່ລ່ຽມ ແລະ ກົນອຸບາຍ ຂອງອິດທິກຳລັງປໍລະປັກທີ່ຫວັງທຳລາຍ, ມ້າງເພພັກເຮົາໃຫ້ທັນການ; ນີ້ແມ່ນເນື້ອໃນມາດຕະການທີ່ສຳຄັນທີ່ສຸດ, ຕ້ອງຖືສຳຄັນວຽກສຶກສາອົບຮົມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ; ຍົກສູງສະຕິລະວັງຕົວໃຫ້ສະມາຊິກພັກ-ພະນັກງານ ໃຫ້ຮັບຮູ້ເຖິງກົນອຸບາຍ ແລະ ເລ່ລ່ຽມ ຂອງອິດທິກຳລັງປໍລະປັກທີ່ຫວັງທຳລາຍ, ມ້າງເພພາຍໃນພັກ.

ສາມ: ເອົາໃຈໃສ່ປະຕິບັດຫຼັກການ, ລະບຽບການ ກ່ຽວກັບວຽກງານພັກ-ພະນັກງານ ແລະ ເພີ່ມທະວີການຕິດຕາມ, ກວດກາໃນການຈັດຕັ້ງປະຕິບັດຕົວຈິງ; ເອົາໃຈໃສ່ປະຕິບັດເຂັ້ມງວດຂອດຄັດເລືອກ, ຈັດວາງ, ສັບຊ້ອນ, ສັບປ່ຽນ, ເລື່ອນຊັ້ນ, ເລື່ອນຕຳແໜ່ງພະນັກງານ, ການສ້າງແຜນກຳນົດພະນັກງານ ໂດຍສະເພາະ ພະນັກງານການນຳຂັ້ນຍຸດທະສາດ. ຖືສຳຄັນວຽກງານພິສູດ, ຢັ້ງຢືນ, ສະຫຼູບປະຫວັດການເມືອງ ເພື່ອເປັນບ່ອນອີງໃນການພິຈາລະນາມາດຕະຖານທາງດ້ານຄຸນທາດການເມືອງ. ກ່ອນສະເໜີເຂົ້າໃນແຜນກຳນົດ, ແຕ່ງຕັ້ງເຂົ້າຮັບໜ້າທີ່ສຳຄັນຕ່າງໆ, ກໍລະນີມີບັນຫາທາງດ້ານການເມືອງ ຫຼື ສາຍພົວພັນທາງດ້ານການເມືອງຍັງບໍ່ຈະແຈ້ງ ຕ້ອງໄດ້ຮັບການກວດກາ, ພິດສູດຢັ້ງຢືນ ແລະ ມີ

ການສະຫຼຸບສັງລວມຂອງຄະນະພັກທີ່ມີສິດອຳນາດລັດກ່ອນ. ກຳແໜ້ນພະນັກງານສືບທອດປ່ຽນແທນ ໃນແຕ່ລະຕຳແໜ່ງນຳພາ-ຄຸ້ມຄອງໃນລະບົບການເມືອງແຕ່ສູນກາງຮອດຮາກຖານ.

ສີ່: ເອົາໃຈໃສ່ຍົກສູງຄຸນນະພາບ ຂອງສະມາຊິກພັກ ຕິດພັນກັບເພີ່ມທະວີການຄຸ້ມຄອງດ້ານລະບຽບວິໄນ, ຊຸກຍູ້ສົ່ງເສີມຂະບວນການຝຶກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ຕິດພັນກັບການສຶກສາອົບຮົມແນວຄິດ ແລະ ຄຸນສົມບັດສິນທຳປະຕິວັດ ຂອງປະທານ ໄກສອນ ພົມວິຫານ, ພັດທະນາດ້ານຄວາມຮູ້ ແລະ ປະສົບການໃນການເຄື່ອນໄຫວນຳພາການເມືອງ ແລະ ວິຊາສະເພາະ ໃຫ້ສະມາຊິກພັກສູງຂຶ້ນເລື້ອຍໆ, ແກ້ໄຂສະມາຊິກພັກ ທີ່ເສຍທາດ ຂາດຄຸນ, ຂາດສະຕິຮັບຜິດຊອບຕໍ່ໜ້າທີ່ ແລະ ຂາດຄວາມເປັນແບບຢ່າງໃນການດຳລົງຊີວິດ ຫຼື ມີການລະເມີດວິໄນຂອງພັກ ແລະ ກົດໝາຍຂອງລັດ ອອກຈາກການຈັດຕັ້ງ ດ້ວຍວິທີການ ແລະ ມາດຕະການຕົວຈິງ ຢ່າງເດັດຂາດ, ເໝາະສົມ ແລະ ທັນການ.

ຫ້າ: ກວດກາ, ສະຫຼຸບ ແລະ ປະເມີນຄືນຢ່າງລະອຽດມາດຕະຖານການເມືອງ ຂອງສະມາຊິກພັກ-ພະນັກງານ, ເດັດຂາດບໍ່ໃຫ້ຜູ້ທີ່ບໍ່ຄົບມາດຕະຖານເລັດລອດເຂົ້າຢູ່ໃນຄະນະພັກແຕ່ລະຂັ້ນ. ກຳ ແລະ ແກ້ໄຂບັນຫາກ່ຽວກັບປະຫວັດການເມືອງໄປສູ່ບັນຫາການເມືອງທີ່ບໍ່ຈະແຈ້ງ. ທຸກຂອດວຽກງານຄຸ້ມຄອງສະມາຊິກພັກ-ພະນັກງານ ຕ້ອງຕິດພັນກັບສະພາບການຕົວຈິງຂອງຖັນແຖວສະມາຊິກພັກ-ພະນັກງານ ເພື່ອຕ້ານ, ສະກັດກັ້ນໃຫ້ທັນເວລາ ແລະ ມີປະສິດທິຜົນ;

ຫົກ: ປຸກລະດົມ, ນຳພາ ແລະ ຈັດຕັ້ງມະຫາຊົນເຂົ້າຮ່ວມວຽກງານປ້ອງກັນພັກ-ພະນັກງານ ຍົກສູງຄວາມຮັບຜິດຊອບທຸກການຈັດຕັ້ງພັກ ຕໍ່ວຽກງານປ້ອງກັນພັກ-ພະນັກງານ. ພ້ອມນັ້ນ, ເສີມຂະຫຍາຍບົດບາດຂອງມະຫາຊົນ, ຈັດຕັ້ງ, ໂຄສະນາ ແລະ ປຸກລະດົມມະຫາຊົນໃຫ້ທົ່ວເຖິງ ເພື່ອເຂົ້າຮ່ວມປ້ອງກັນພັກ-ພະນັກງານ ແລະ ປັບປຸງຄືນບັນດາກົນໄກປະສານງານ, ຊຸກຍູ້ ແລະ ຍົກສູງການສົມທົບລະຫວ່າງພາກສ່ວນທີ່ຮັບຜິດຊອບວຽກງານປ້ອງກັນພັກ-ພະນັກງານ ໂດຍສະເພາະແມ່ນວຽກການກຳສະພາບການ ແລະ ແກ້ໄຂບັນຫາການເມືອງພາຍໃນ ແລະ ເອົາໃຈໃສ່ວຽກງານກວດກາພາຍໃນເປັນປະຈຳ, ກວດພົບ, ແກ້ໄຂຢ່າງທັນການ.

ສັງລວມແລ້ວ, ວຽກງານປ້ອງກັນພັກ-ພະນັກງານ ແມ່ນໜ້າທີ່ສຳຄັນຕໍ່ການນຳພາຂອງພັກກຳອຳນາດ, ຂອງລະບອບປະຊາທິປະໄຕປະຊາຊົນ ແລະ ການປະຕິບັດໜ້າທີ່ວຽກງານປ້ອງກັນພັກ-ພະນັກງານແມ່ນຄວາມຮັບຜິດຊອບຂອງທົ່ວພັກ ເຮັດໃຫ້ພັກຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ. ສະນັ້ນ, ໃຫ້ຄະນະພັກການຈັດຕັ້ງພັກ, ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ຕ້ອງເພີ່ມທະວີປະຕິບັດວຽກງານປ້ອງກັນພັກ-ພະນັກງານ ໃນເງື່ອນໄຂພັດທະນາເສດຖະກິດຫຼາຍພາກສ່ວນ, ເປີດປະຕູເຊື່ອມໂຍງສາກົນ, ຕ້ອງໄດ້ສຶກສາອົບຮົມ, ຍົກສູງຄວາມຮັບຮູ້ໃຫ້ສະມາຊິກພັກ-ພະນັກງານ, ຍົກສູງຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນ, ປັບປຸງຖັນແຖວພະນັກງານ ທີ່ຮັບຜິດຊອບວຽກງານປ້ອງກັນພັກ-ພະນັກງານຢ່າງເໝາະສົມ ແລະ ສັງລວມວຽກງານປ້ອງກັນພັກ-ພະນັກງານ, ເອົາໃຈໃສ່ບັນດາເນື້ອໃນຄື: ການປະຕິບັດຄຳສັ່ງ, ມະຕິ, ວຽກງານປ້ອງກັນພັກ-ພະນັກງານ ແລະ ປ້ອງກັນການເມືອງພາຍໃນ ໃຫ້ເປັນປົກກະຕິ...໗

ຄອບຄົວຕົວແບບ ຜະລິດຕະພັນ ວາຍເຂົ້າໄກ່ນ້ອຍ (ສະຕິກກີວາຍ)

ໂດຍ : ບານສະຫວັນ

ຄືທີ່ຮູ້ນຳກັນແລ້ວວ່າ ການຈະຜະລິດສິນຄ້າ ຫຼື ສ້າງຜະລິດຕະພັນໃດໜຶ່ງ ໃຫ້ປະສົບຜົນສຳເລັດໄດ້ນັ້ນ ບໍ່ແມ່ນເລື່ອງງ່າຍ ເພາະມັນຕ້ອງຜ່ານຫຼາຍຂັ້ນຕອນ ແລະ ມີອົງປະກອບຫຼາຍຢ່າງ ແຕ່ກໍ່ບໍ່ແມ່ນເລື່ອງຍາກເກີນວິໄສ ສຳລັບຜູ້ທີ່ມີຄວາມພາກພຽນພະຍາຍາມ

ດັ່ງຄຳສຸພາສິດທີ່ວ່າ: "ຄວາມພະຍາຍາມຢູ່ບ່ອນໃດ ຜົນສຳເລັດຢູ່ບ່ອນນັ້ນ". ຖ້າເຮົາມີວິໄສທັດ, ມີຫົວຄິດປະດິດສ້າງ, ມີການວາງແຜນຢ່າງຮອບຄອບ ແລະ ມີຄວາມພາກພຽນພະຍາຍາມຊອກຮູ້ຮ່ຳຮຽນ ພ້ອມທັງລົງມືປະຕິບັດຢ່າງຕໍ່ເນື່ອງ, ບໍ່ທໍ້ຖອຍ ແນ່ນອນວ່າ: ມື້ໜຶ່ງເຮົາຈະປະສົບຜົນສຳເລັດ; ດັ່ງຄອບຄົວ ຂອງສະຫາຍ ຈັນເພັງ ພົມມາພາສຸກ ຖິ່ນກຳເນີດແຂວງວິລະຊົນ ປະຈຸບັນຢູ່ບ້ານຍອນ ເມືອງແປກ ແຂວງຊຽງຂວາງ ເປັນຄອບຄົວພະນັກງານ-ລັດຖະກອນ, ຄອບຄົວໜຶ່ງທີ່ໃຊ້ເວລາຫວ່າງໃຫ້ເກີດປະໂຫຍດ ໂດຍໄດ້ຍາດເວລາຫຼັງເລີກການ ແລະ ວັນເສົາ-ອາທິດ ສ້າງເສດຖະກິດເພື່ອສ້າງລາຍຮັບເສີມ ດ້ວຍການທົດລອງສ້າງຜະລິດຕະພັນ ທີ່ເປັນເອກະລັກສະເພາະຂອງຕົນ ອອກຈຳໜ່າຍ

ເຊິ່ງມີຊື່ແບຣນວ່າ: ອາຍເຂົ້າໄກ່ນ້ອຍ ຫຼື ສະຕິກກີອາຍ.

ປະຈຸບັນ ສະຫາຍ ຈັນເພັງ ພິມມາພາສຸກ ອາຍຸ 46 ປີ ອາຊີບອາຈານສອນ ຢູ່ໂຮງຮຽນ ມສ ພອນສະຫວັນ ເມືອງແປກ ແຂວງຊຽງຂວາງ; ສະຫາຍເຂົ້າເປັນສະມາຊິກພັກສຳຮອງ ໃນວັນທີ 17 ເດືອນ 12 ປີ 2006, ເລື່ອນເປັນສະມາຊິກພັກສົມບູນ ໃນວັນທີ 18 ເດືອນ 1 ປີ 2008; ໄດ້ສ້າງຄອບຄົວກັບນາງ ວິລ່ຳ ທຸມມະວົງສາ ເປັນພະນັກງານສັງກັດຢູ່ພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ, ປະຈຸບັນມີລູກນຳກັນ 3 ຄົນ. ສະຫາຍ ໄດ້ເລົ່າສູ່ຟັງວ່າ ກ່ອນໜ້ານີ້ໃນປີ 2016 ຊີວິດການເປັນຢູ່ຂອງຄອບຄົວພົບຄວາມຫຍຸ້ງຍາກສົມຄວນ ຍ້ອນຄອບຄົວຫາກໍ່ຍົກຍ້າຍມາໃໝ່ ເຊິ່ງຍ້າຍມາຈາກເມືອງຄຳ ເຂົ້າມາຢູ່ໃນເມືອງ ຄືບ້ານຢູ່ປະຈຸບັນ (ບ້ານຍອນ ເມືອງແປກ ແຂວງຊຽງຂວາງ) ບໍ່ມີເນື້ອທີ່ທຳການຜະລິດ, ລາຍຮັບກໍ່ອາໄສແຕ່ເງິນເດືອນເປັນຫຼັກ, ສະພາບເສດຖະກິດ ແລະ ຊີວິດການເປັນຢູ່ຂ້ອນຂ້າງຂາດເຂີນ ຕົນເອງຈຶ່ງໄດ້ຄິດຫາຫົນທາງດຳເນີນທຸລະກິດຄອບຄົວ ເພື່ອສ້າງລາຍຮັບເສີມ ຫຼັງຈາກທີ່ຮຽນຈົບປະລິນຍາໂທ ສາຍຄູຄະນິດສາດ ຈາກຣາຊະອານາຈັກໄທ ຈຶ່ງໄດ້ປຶກສາກັນພາຍໃນຄອບຄົວ ໄດ້ຕັດສິນໃຈທົດລອງເຮັດວາຍເຂົ້າໄກ່ນ້ອຍ ໃນປີ 2016 ດ້ວຍທຶນຂອງຕົນເອງທີ່ເກັບອອມໄດ້ໃນມູນຄ່າ 50 ລ້ານກີບ ສ້າງທຸລະກິດແບບຄອບຄົວ ເຊິ່ງແມ່ນຄວາມໃຝ່ຝັນຢາກມີສິນຄ້າ ຫຼື ຜະລິດຕະພັນເປັນຂອງຕົວເອງ; ພາຍຫຼັງຜະລິດໄດ້ກໍ່ນຳມາຂາຍ ຕອນນັ້ນຂາຍເປັນລິດ, ລາຄາ 35,000 ກີບ/ຕໍ່ລິດ ເພາະໃນເບື້ອງຕົ້ນບໍ່ທັນມີກວດບັນຈຸ ມາຮອດປີ 2017 ຈຶ່ງໄດ້ສັ່ງກວດບັນຈຸວາຍປະເພດຝາກຽວ ຈາກປະເທດຈີນ ເພາະເຫັນວ່າສະດວກກວ່າຝາຈຸກ.

ຈາກນັ້ນກໍ່ໄດ້ອອກແບບສະຕິກເກີ ແລະ ເຄື່ອງບັນຈຸພັນຕ່າງໆດ້ວຍຕົນເອງ ແລ້ວນຳມາວາງຂາຍ, ວາງສະແດງໃນງານຕ່າງໆ ພ້ອມທັງໂພດຂາຍທາງອອນລາຍ ເປັນຕົ້ນທາງເຟດບຸກ ຂາຍໃນລາຄາກວດລະ 25.000 ກີບ, ຍ້ອນໃນເບື້ອງຕົ້ນຄົນຍັງບໍ່ທັນຮູ້ຈັກຫຼາຍ ຈຶ່ງຂາຍໄດ້ເດືອນລະແກັດ-ສອງແກັດ ຕໍ່ມາກໍ່ເລີ່ມເປັນທີ່ສົນໃຈ ແລະ ຮູ້ຈັກຂອງສັງຄົມ ຍອດຂາຍກໍ່ຄ່ອຍໆເພີ່ມຂຶ້ນຈາກເດືອນລະແກັດມາເປັນຫ້າແກັດ, ສິບແກັດ. ຈາກນັ້ນ, ເພີ່ມຈຳນວນການຜະລິດອອກຈຳໜ່າຍຢ່າງຕໍ່ເນື່ອງ ຈົນກາຍເປັນຜະລິດຕະພັນໂດດເດັ່ນຂອງແຂວງ ແລະ ສາມາດຮັບຮອງເປັນສິນຄ້າໂອດ໋ອບ ໃນປີ 2018.

ຜະລິດຕະພັນດັ່ງກ່າວ ແມ່ນໄດ້ແຮງບັນດານໃຈຈາກການໄດ້ຊີມເຫຼົ້າສາເກຍີ່ປຸ່ນ ທີ່ອາຈານເອົາມາຕ້ອນໃນເວລາທີ່ຍັງຮຽນປະລິນຍາໂທ ຢູ່ຣາຊະອານາຈັກໄທ ຈຶ່ງເກີດຄວາມຄິດຢາກສ້າງຜະລິດຕະພັນເປັນຂອງຕົນເອງ ແລະ ຍ້ອນເຫັນວ່າ ຢູ່ທ້ອງຖິ່ນຕົນເອງກໍ່ມີເງື່ອນໄຂ, ອຳນວຍຄວາມສະດວກຫຼາຍດ້ານ ເປັນຕົ້ນມີວັດຖຸດິບທີ່ສາມາດນຳມາແປຮູບເປັນວາຍໄດ້, ນັ້ນກໍ່ແມ່ນເຂົ້າໄກ່ນ້ອຍ ເຊິ່ງເປັນເຂົ້າທີ່ມີຄຸນນະພາບ, ເປັນພືດປະຈຳທ້ອງຖິ່ນທີ່ນິຍົມກັນບໍລິໂພກ ແລະ ປູກກັນຢ່າງແຜ່ຫຼາຍ ໃນເຂດທີ່ອາກາດເໝາະສົມຄື: ເຂດອາກາດເຢັນ ເຮັດໃຫ້ເຂົ້າມີລົດຊາດດີ, ກິນແຊບ, ອ່ອນ, ມີກິ່ນຫອມເປັນເອກະລັກສະເພາະ; ສ່ວນຕົນເອງກໍ່ມັກ ແລະ ຫຼົງໄຫຼເປັນພິເສດ ຈຶ່ງຄິດຢາກຕໍ່ຍອດເປັນສິນຄ້າ ທີ່ນອກເໜືອຈາກເປັນອາຫານໃນຄາບເຂົ້າເທົ່ານັ້ນ.

ສະນັ້ນ ເພື່ອເປັນການສົ່ງເສີມ ແລະ ສ້າງມູນຄ່າເພີ່ມໃຫ້ພືດດັ່ງກ່າວ ຕົນເອງຈຶ່ງໄດ້ນຳມາທົດລອງເຮັດວາຍ ຕາມສູດ ແລະ ບົດຮຽນທີ່ຕົນເອງສຶກສາຄົ້ນຄວ້າຈາກແຫຼ່ງຂໍ້ມູນຕ່າງໆ ຜົນອອກມາເຫັນວ່າປະສົບຜົນສຳເລັດຕາມແຜນທີ່ຄາດໄວ້ ລົດຊາດທີ່ອອກມາເປັນ

ທີ່ໜ້າເພິ່ງພໍໃຈ ຈຶ່ງໄດ້ສືບຕໍ່ຜະລິດອອກ ເປັນຕົ້ນມາ ການດໍາເນີນກິດຈະການເຮັດວາຍເຂົ້າໄກ່ນ້ອຍ ກໍ່ເລີ່ມເປັນຂະບວນການທີ່ດີຂຶ້ນ ແລະ ໄດ້ມີການຜະລິດຢ່າງຕໍ່ເນື່ອງ; ທັງມີການພັດທະນາຕໍ່ຍອດຜະລິດຕະພັນໃຫ້ມີຫຼາກຫຼາຍລົດຊາດຕື່ມອີກ ມາຮອດປະຈຸບັນ ສາມາດຜະລິດວາຍອອກມາໄດ້ 7 ລົດຊາດຄື: ສະຕິກກ້ວຍ (ມີ 1. ວາຍເຂົ້າໄກ່ນ້ອຍ ແລະ 2. ວາຍເຂົ້າກໍ່າ), 3.ວາຍວິນລ່າວາລີ (Vinla Varly) (ລົດຊາດປະສົມສະຫຼາກ ວິດໍາ V black), 4. ວາຍກ້ວຍ (B seven), 5. ວາຍໝາກສົ້ມຂົມ (V red) 6. ວາຍສະຕໍເບີຣີ (B&K), 7. ວາຍໝາກໝັ້ນ ນອກນີ້ ຍັງໄດ້ຕໍ່ຍອດ ສ້າງຜະລິດຕະພັນເຊຣໍ່າເຂົ້າໄກ່ນ້ອຍ ສິດບໍາລຸງຜິວຕື່ມອີກ.

ປະຈຸບັນ ຜະລິດຕະພັນວາຍແຕ່ລະລົດຊາດແມ່ນໄດ້ຮັບການພັດທະນາ ແລະ ອອກແບບສະຕິກເກີກັບບັນຈຸພັນ, ການຫຸ້ມຫໍ່ຢ່າງຈົບງາມ ພ້ອມດຽວກັນນີ້ ກໍ່ໄດ້ດໍາເນີນການຕະຫຼາດໄປນໍາ ເຊັ່ນ ການອອກບູດວາງສະແດງໃນງານຕ່າງໆ ພາຍໃນແຂວງ ແລະ ຕ່າງແຂວງ ເປັນຕົ້ນແມ່ນ ນະຄອນຫຼວງວຽງຈັນ, ວັງວຽງ, ຫຼວງພະບາງ, ສະຫວັນນະເຂດ ແລະ ມີວາງຈໍາໜ່າຍຕາມຫ້າງຮ້ານຕ່າງໆແລ້ວເຊັ່ນ ຫຼວງພະບາງ ຮ້ານດີແອນທີ, ສະຫວັນນະເຂດ ຮ້ານຄ້າປອດພາສີລາວບາວ, ນະຄອນຫຼວງວຽງຈັນ ໂຊກໄຊມາດ ແລະ ກຽມເຂົ້າຈໍາໜ່າຍ ກ໊ອກງາມາດ, ເຈມາດ, ດີມາດ ໃນລາຄາກວດລະ 130.000 ກີບ, ເປັນແກັດລາຄາ 1.400.000ກີບ; ມາຮອດປະຈຸບັນ ຍອດຂາຍກໍ່ເລີ່ມດີຂຶ້ນ ສະເລ່ຍແລ້ວ ລາຍຮັບປີໜຶ່ງປະມານ 200 ລ້ານກວ່າກີບ, ສະເພາະກໍາໄລ ປະມານ 100 ລ້ານກວ່າກີບ. ຈຸດດີຂອງການສ້າງຜະລິດຕະພັນ ແມ່ນມີຫຼາຍ, ຂະບວນການເຮັດວາຍເຂົ້າໄກ່ນ້ອຍ ກໍ່ບໍ່ຫຍຸ້ງຍາກ ເບື້ອງຕົ້ນແມ່ນນໍາເອົາເຂົ້າເປືອກ (ເຂົ້າໄກ່ນ້ອຍ ທີ່ມີຄຸນນະພາບດີຈໍານວນ 180 ກິໂລກຣາມ ມາສີ ແລ້ວເອົາໄປໝ່າໃຫ້ໃບ່ ຈາກນັ້ນກໍ່ເອົາໄປໜຶ້ງໃຫ້ສຸກ ແລ້ວນໍາມາສວ່າຍ ແລະ ນໍາໄປໝັກໄວ້ໃນຖັງທີ່ກຽມໄວ້ ເປັນເວລາໜຶ່ງປີກ່ອນຈະນໍາມາຕອງ ແລະ ໝັກຕໍ່ອີກໜຶ່ງປີ ສ່ວນນໍ້າໝ່າເຂົ້າກໍ່ສາມາດສະກັດເຮັດເຊລໍ່າບໍາລຸງຜິວ; ສໍາລັບຂະບວນການຂາຍວາຍບໍ່ໄດ້ກໍານົດ ເພາະວາຍປະໄວ້ດົນລົດຊາດດີ ແລະ ລາຄາກໍ່ຈະເພີ່ມຂຶ້ນຕາມ; ສ່ວນຕົນເອງກໍ່ມີຄວາມພາກພູມໃຈ ທີ່ໄດ້ໃຊ້ຄວາມຮູ້, ຄວາມສາມາດ ແລະ ເວລາວ່າງຕິດພັນຢູ່ກັບກິດຈະການຄອບຄົວ, ທັງເປັນການຝຶກຝົນລູກໄດ້ເຮັດວຽກຮ່ວມກັນ ເຮັດໃຫ້ລູກມີຄວາມຮັບຜິດຊອບ ຮູ້ວຽກ-ຮູ້ງານ; ທີ່ສໍາຄັນແມ່ນສາມາດສ້າງລາຍຮັບ ເຮັດໃຫ້ມີທຶນໝູນວຽນໃນການຜະລິດຕໍ່, ມີທຶນສົ່ງລູກຮໍ່າຮຽນ ທັງຢູ່ພາຍໃນ ແລະ ຕ່າງປະເທດ, ສາມາດຊ່ວຍແກ້ໄຂຊີວິດການເປັນຢູ່ຂອງຄອບຄົວດີຂຶ້ນເປັນກ້າວໆຈາກຄອບຄົວທີ່ຫຍຸ້ງຍາກຂາດເຂີນ, ບໍ່ມີພື້ນທີ່ການຜະລິດ, ປະຈຸບັນສາມາດຊື້ທີ່ດິນເນື້ອທີ່ປະມານ 3 ເຮັກຕາ ເພື່ອຂະຫຍາຍກິດຈະການໃນຕໍ່ໜ້າ.

ຜົນສໍາເລັດທັງໝົດນັ້ນ, ແມ່ນມາຈາກຄວາມອົດທົນພະຍາຍາມຊອກຮູ້ຮໍ່າຮຽນ ແລະ ລົງມືເຮັດຢ່າງຕໍ່ເນື່ອງ, ຄອບຄົວມີຄວາມເປັນເອກະພາບກັນຢ່າງພ້ອມພຽງ ຄຽງຄູ່ກັນນັ້ນ, ການຈັດຕັ້ງຂັ້ນເທິງກໍ່ໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມຕະຫຼອດມາ ໃນການຜະລິດ ແລະ ພັດທະນາສິນຄ້າ ເປັນຕົ້ນ ໄດ້ສະໜອງຂໍ້ມູນໃນການຮຽນຮູ້ຂະຫຍາຍທຸລະກິດ ແລະ ຊ່ວຍອໍານວຍຄວາມສະດວກຫຼາຍດ້ານເຊັ່ນ: ໄດ້ແນະນໍາ, ໃຫ້ໂອກາດເຂົ້າຮ່ວມວາງສະແດງສິນຄ້າໃນງານຕ່າງໆ ຢູ່ພາຍໃນແຂວງ ແລະ ຕ່າງແຂວງ; ນອກນີ້ ຍັງນໍາສິນຄ້າໄປສະເໜີຢູ່ຫຼາຍບ່ອນ ລວມທັງນໍາໄປເປັນເຄື່ອງຕ້ອນ-ຂອງຝາກ ແກ່ແຂກຄົນ;

ພິເສດໃນທ້າຍປີ 2023 ກໍ່ໄດ້ຮັບຄັດເລືອກໃຫ້ເປັນສິນຄ້າໂດດເດັ່ນ ເຂົ້າຮ່ວມວາງສະແດງໃນກອງປະຊຸມເປີດກວ້າງຂອງລັດຖະບານ ຢູ່ຫໍປະຊຸມແຫ່ງຊາດອີກດ້ວຍ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ, ກໍ່ຍັງມີຂໍ້ຫຍຸ້ງຍາກຈຳນວນໜຶ່ງ ເປັນຕົ້ນແມ່ນແຮງງານມີໜ້ອຍ, ເວລາເຮັດກິດຈະການກໍ່ຈຳກັດ ເພາະອາໄສແຕ່ເວລາວ່າງ

ຫຼັງເລີກການ ແລະ ວັນເສົາ-ວັນທິດ ເຮັດໃຫ້ການບໍລິຫານຈັດການບໍ່ທັນເຕັມທີ່, ບາງເທື່ອການຈັດສົ່ງກໍບໍ່ທັນຕອບສະໜອງໄດ້ຕາມການສັ່ງຈອງຂອງລູກຄ້າ ແລະ ດ້ານທຶນຮອນກໍ່ຈຳກັດ, ສະຖານທີ່ຜະລິດ ກໍ່ບໍ່ທັນສະດວກ; ຖ້າເປັນໄປໄດ້ຢາກສະເໜີຂັ້ນເທິງສະໜອງທຶນເພື່ອຈະຂະຫຍາຍການຜະລິດໃນຕໍ່ໜ້າ.

ໃນໂອກາດນີ້ ສະຫາຍ ກໍ່ໄດ້ສະແດງຄວາມຂອບໃຈ , ຮູ້ບຸນຄຸນຕໍ່ການຈັດຕັ້ງຂັ້ນເທິງ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ໂດຍສະເພາະຫ້ອງການອຸດສາຫະກຳ ແລະ ການຄ້າເມືອງແປກ ທີ່ໄດ້ໃຫ້ການຊຸກຍູ້ສົ່ງເສີມຜະລິດຕະພັນ ວາຍເຂົ້າໄກ່ນ້ອຍ ໄດ້ຈົດທະບຽນເປັນສິນຄ້າໂອດ່ອບແຫ່ງຊາດ ແລະ ມີການຈັດງານສະແດງສິນຄ້າເພື່ອເປັນການໂຄສະນາ, ແນະນຳສິນຄ້າຕະຫຼອດມາ.

ການດຳເນີນກິດຈະການໄລຍະຜ່ານມາ ເຫັນວ່າມີຂໍ້ສະດວກຫຼາຍດ້ານ ຍ້ອນຕົນເອງເປັນພະນັກງານລັດ ເຊິ່ງມີການຕິດຕໍ່ພົວພັນກັບຫຼາຍພາກສ່ວນ, ການສຶກສາຫາຂໍ້ມູນ ແລະ ຮຽນຮູ້ລະບຽບກົດໝາຍຂອງບ້ານເມືອງ ເພື່ອດຳເນີນກິດຈະການໄດ້ງ່າຍ; ນອກນີ້ຍັງສາ

ມາຄຮຽນຮູ້ໄດ້ຈາກຫຼາຍພາກສ່ວນ ຈະເປັນຂໍ້ມູນຢູ່ພາຍໃນ ແລະ ຕ່າງປະເທດ ອັນສຳຄັນແມ່ນໄດ້ຮັບການຊຸກຍູ້ສົ່ງເສີມຈາກຫຼາຍພາກສ່ວນ ເປັນຕົ້ນ ຫ້ອງການການຄ້າເມືອງ, ພະແນກການຄ້າແຂວງ ລວມທັງກົມສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງ (SME) ຈຶ່ງເຮັດໃຫ້ກິດຈະການດັ່ງກ່າວປະສົບຜົນສຳເລັດເປັນກ້າວໆ ແລະ ໄດ້ເປັນຄອບຄົວແບບຢ່າງຂອງພະນັກງານ-ລັດຖະກອນ ໃນການສ້າງເສດຖະກິດຄອບຄົວ ຕາມແນວທາງນະໂຍບາຍຂອງພັກ-ລັດ.

ສຳລັບແຜນການໃນຕໍ່ໜ້າ ຈະສືບຕໍ່ພັດທະນາສິນຄ້າຢ່າງຮອບດ້ານ ແລະ ຊອກຄູ່ຮ່ວມທຸລະກິດ, ແຫຼ່ງທຶນເພື່ອຂະຫຍາຍໂຮງງານການຜະລິດໃຫ້ໄດ້ມາດຕະຖານພ້ອມທັງຂະຫຍາຍສາຂາຈຳໜ່າຍເຂົ້າໃນຮ້ານສະດວກຊື້ຢູ່ຕາມຕົວເມືອງໃຫຍ່ເປັນຕົ້ນ: ນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃຫ້ກວ້າງຂວາງຂຶ້ນ ທັງສາມາດສົ່ງອອກຈຳໜ່າຍຢູ່ຕ່າງປະເທດ; ສະຫາຍຍັງຝາກເຖິງຜູ້ທີ່ສົນໃຈຢາກແລກປ່ຽນ, ຖອດຖອນບົດຮຽນ ຫຼື ຢາກເປັນຕົວແທນຈຳໜ່າຍ ແມ່ນຍິນດີຕ້ອນຮັບ ແລະ ສາມາດພົວພັນໄດ້ ເບີໂທຕິດຕໍ່ 020 97455895, 020 93955 156. Facebook Page: Stickir Wine (ອາຍເຂົ້າໄກ່ນ້ອຍ)...ຯ

ອົງຄະນະພັກເມືອງຜົ້ງສາລີ ເອົາໃຈໃສ່ປັບປຸງ....

ຕໍ່ຈາກໜ້າ 29

ແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ, ຂອງຂະແໜງການຂອງຕົນທີ່ວາງອອກ, ເອົາໃຈໃສ່ພັດທະນາຕາມທ່າແຮງບົ່ມຊ້ອນ ທາງດ້ານຊັບພະຍາກອນທຳມະຊາດ ແລະ ເງື່ອນໄຂຄວາມສາມາດຕົວຈິງ ເພື່ອປະກອບສ່ວນເຮັດໃຫ້ເມືອງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງມີຄວາມສະຫງົບສຸກ, ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຖືກທິດ, ຊີວິດການເປັນຢູ່ ຂອງພະນັກງານ-ລັດຖະກອນ ແລະ ປະຊາຊົນບັນດາເຜົ່າດີຂຶ້ນເປັນກ້າວໆ ຕາມຄາດໝາຍທີ່ກຳນົດໄວ້.

ສັງລວມແລ້ວ, ເອົາໃຈໃສ່ປັບປຸງການຈັດຕັ້ງພັກຕິດພັນກັບການຊຸກຍູ້ພັດທະນາເສດຖະກິດ-ສັງຄົມ ແມ່ນວຽກໜຶ່ງທີ່ສຳຄັນທີ່ຕັດສິນການຄົງຕົວ ແລະ ຂະຫຍາຍຕົວຂອງພັກເຮົາ. ສະນັ້ນ, ຈຶ່ງເວົ້າໄດ້ວ່າ: ການນຳພາຂອງພັກເປັນປັດໄຈຕັດສິນຜົນສຳເລັດ ແລະ ໄຊຊະນະຂອງການປະຕິວັດຂອງປະເທດເຮົາ, ຄະນະພັກແຕ່ລະຂັ້ນ ຕ້ອງເຊີດຊູບົດບາດເປັນກຳລັງແຮງນຳໜ້າ ແລະ ຄວາມສາມາດນຳພາໃຫ້ທຽມທັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນເງື່ອນໄຂໃໝ່ ຖ້າຫາກການຈັດຕັ້ງພັກສາມາດກໍ່ສ້າງຕົນເອງໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ບັນລຸຕາມຄາດໝາຍຮັບປະກັນຄຸນນະພາບກັບຖານະນາມ ເປັນແກນນຳໃນລະບົບການເມືອງທີ່ໜັກແໜ້ນ ນຳພາປະຊາຊົນບັນດາເຜົ່າພັດທະນາເສດຖະກິດ-ສັງຄົມ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ ຊີວິດການເປັນຢູ່ຂອງປະຊາຊົນນັບມື້ດີຂຶ້ນ ແລະ ອັດຕາຄວາມທຸກຍາກມີທ່າອ່ຽງຫຼຸດລົງເປັນກ້າວໆ...ຯ

ຄວາມຮັບຮູ້ ກ່ຽວກັບຈຸພັກຂອງພັກກອມມູນິດຈີນ

ແປ ແລະ ຮຽບຮຽງໂດຍ: ສຳນຽງ ເມກລັນດອນ

ໃນການສ້າງຕັ້ງໜ່ວຍພັກ ຍັງມີຈຸດໜຶ່ງທີ່ຕ້ອງໄດ້ເວົ້າເຖິງ ນັ້ນກໍ່ຄືການສ້າງຕັ້ງຈຸພັກ. ຈຸພັກແມ່ນບໍ່ໄດ້ກຳນົດເປັນການຈັດຕັ້ງໜຶ່ງຂອງພັກ, ສ້າງຕັ້ງຂຶ້ນ ເພື່ອສະດວກໃນການຈັດຕັ້ງ, ຄຸ້ມຄອງສະມາຊິກພັກ, ສຶກສາອົບຮົມ, ດຳເນີນຊີວິດພັກ ແລະ ຈັດກິດຈະກຳອື່ນໆ ໂດຍອີງໃສ່ຈຳນວນ ແລະ ສະພາບການແຈກຢາຍຂອງສະມາຊິກພັກ. ສະນັ້ນ, ໜ່ວຍພັກ ທີ່ມີຈຳນວນສະມາຊິກພັກໜ້ອຍ ບໍ່ຈຳເປັນສ້າງຕັ້ງເປັນຈຸພັກ; ສຳລັບໜ່ວຍພັກທີ່ມີຈຳນວນສະມາຊິກພັກຫຼາຍ ແມ່ນສາມາດສ້າງຕັ້ງເປັນຫຼາຍຈຸພັກຂຶ້ນກັບ. ໃນລະບຽບການ ວ່າດ້ວຍວຽກງານໜ່ວຍພັກຂອງພັກກອມມູນິດຈີນ (ສະບັບທົດລອງ) ປີ 2018 ໄດ້ກຳນົດໄວ້ວ່າ: ໜ່ວຍພັກທີ່ມີຈຳນວນສະມາຊິກພັກຫຼາຍ ຫຼື ບ່ອນເຮັດວຽກ, ບ່ອນຢູ່ອາໄສຂອງສະມາຊິກພັກ ຄ່ອຍຂ້າງທີ່ກະແຈກກະຈາຍ ແມ່ນອີງຕາມຫຼັກການທີ່ວ່າ ສະດວກໃນການຈັດຕັ້ງ ດຳເນີນກິດຈະກຳຕ່າງໆຂອງພັກ ເຫັນຄວນຕ້ອງໄດ້ສ້າງຕັ້ງເປັນຫຼາຍຈຸພັກ, ພ້ອມທັງແຕ່ງຕັ້ງຫົວໜ້າຈຸພັກ ເພື່ອຈັດຕັ້ງນຳພາ, ໃນການດຳເນີນກິດຈະກຳຕ່າງໆ; ຫົວໜ້າຈຸພັກ ແມ່ນໜ່ວຍພັກເປັນຜູ້ບົ່ງຕົວແຕ່ງຕັ້ງ, ບົນພື້ນຖານການສະເໜີຂອງສະມາຊິກພັກພາຍໃນຈຸພັກດັ່ງກ່າວ, ໜ້າທີ່ຈຸພັກຕົ້ນຕໍແມ່ນຈັດຕັ້ງປະຕິບັດຕົວຈິງ ຕາມຄວາມຮຽກຮ້ອງຕ້ອງການວຽກງານຂອງໜ່ວຍພັກ ແລະ ປະຕິບັດໜ້າທີ່ຕາມການມອບໝາຍຂອງໜ່ວຍພັກໃຫ້ມີຜົນສຳເລັດ.

ໜ້າທີ່ຂອງຫົວໜ້າຈຸພັກ ແມ່ນນຳພາສະມາຊິກພັກເອົາໃຈໃສ່ສຶກສາອົບຮົມທິດສະດີ, ອົບຮົມແນວທາງພື້ນຖານ ແລະ ບັນດາທິດທາງ, ແຜນນະໂຍບາຍຂອງພັກ ລວມທັງຄວາມຮູ້ພື້ນຖານກ່ຽວກັບພັກ; ອົບຮົມວິຊາສະເພາະ ດ້ານວິທະຍາສາດເຕັກນິກ, ວັດທະນະທຳ ແລະ ດ້ານອື່ນໆ; ຈັດຕັ້ງຜັນຂະຫຍາຍມະຕິຂອງໜ່ວຍພັກ ແລະ ຄຳເຫັນຊີ້ນຳ ຂອງການຈັດຕັ້ງພັກຂັ້ນເທິງ, ແບ່ງຄວາມຮັບຜິດຊອບໃຫ້ສະມາຊິກພັກ, ພ້ອມທັງກວດກາ ສະພາບການຈັດຕັ້ງປະຕິບັດວຽກງານ ຂອງສະມາຊິກພັກ ນຳພາຮ່ວມຊີວິດຈຸພັກ ໃຫ້ເປັນປົກກະຕິຕາມກຳນົດເວລາ.

ໜ້າທີ່ຕົ້ນຕໍຂອງຈຸພັກແມ່ນ: ມອບໝາຍໜ້າທີ່ຄວາມຮັບຜິດຊອບໃຫ້ແກ່ສະມາຊິກພັກ ທຸກສະຫາຍ, ຕັ້ງໜ້າປະຕິບັດມະຕິຂອງໜ່ວຍພັກໃຫ້ປະກົດຜົນເປັນຈິງ; ຈັດຕັ້ງອົບຮົມທິດສະດີພື້ນຖານຂອງລັດທິມາກ, ແນວຄິດ, ທິດສະດີ ແລະ ທັດສະນະຂອງພັກທີ່ຫັນມາເປັນແບບຈີນ, ອົບຮົມແນວທາງພື້ນຖານ, ບັນດາທິດທາງ, ນະໂຍບາຍ ແລະ ມະຕິຂອງພັກ, ຄວາມຮູ້ພື້ນຖານກ່ຽວກັບພັກ, ຄວາມຮູ້ທາງດ້ານວິທະຍາສາດ, ວັດທະນະທຳ ແລະ ວິຊາສະເພາະດ້ານອື່ນໆ; ດຳເນີນຊີວິດຈຸພັກເປັນປົກກະຕິ, ຕຳນິຕິຊົມເຊິ່ງກັນ ແລະ ກັນ ແລະ ຕິຊົມຕົນເອງ, ຕິດຕາມຊຸກຍູ້ສະມາຊິກພັກເສຍເງິນສະຕິພັກ ຕາມກຳນົດເວລາ, ເຂົ້າຮ່ວມກິດຈະກຳຕ່າງໆຂອງພັກ; ຈັດຕັ້ງສະມາຊິກພັກເຮັດວຽກໂຄສະນາ ກ່ຽວກັບແນວທາງ, ທິດທາງ, ແຜນນະໂຍບາຍ ແລະ ມະຕິຂອງພັກຕໍ່ມະຫາຊົນ, ເຮັດວຽກງານການເມືອງ-ແນວຄິດໃນໝູ່

ມະຫາຊົນ, ເກັບກໍາຄວາມຄິດຄວາມເຫັນຂອງມະຫາຊົນ ເພື່ອສ່ອງແສງໃຫ້ຄະນະໜ່ວຍພັກຮັບຊາບເປັນປົກກະຕິ, ເກັບກໍາສະພາບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງມະຫາຊົນ; ຊ່ວຍໜ່ວຍພັກຕິດຕາມກວດກາ ແລະ ຕີລາຄາສະມາຊິກພັກ, ບໍາລຸງສ້າງມະຫາຊົນກ້າວໜ້າທີ່ຈະຂະຫຍາຍເຂົ້າພັກ, ຮັບເອົາສະມາຊິກພັກ ສໍາຮອງ, ເອົາໃຈໃສ່ເຮັດວຽກສຶກສາອົບຮົມ, ບໍາລຸງສ້າງ, ຕິດຕາມປະເມີນຜົນສະມາຊິກພັກສໍາຮອງ ເພື່ອສ້າງເງື່ອນໄຂເລື່ອນຂຶ້ນ ເປັນສະມາຊິກພັກສົມບູນ.

ຈຸພັກຕ້ອງກໍານົດໃຫ້ມີຫົວໜ້າຈຸພັກ. ຫົວໜ້າຈຸພັກແມ່ນພະນັກງານຫຼັກແຫຼ່ງ ທີ່ເຮັດວຽກງານຮາກຖານຂອງພັກ, ຕ້ອງຢູ່ພາຍໃຕ້ການນໍາພາຂອງໜ່ວຍພັກ, ຈັດຕັ້ງສະມາຊິກພັກ ພາຍໃນຈຸພັກດໍາເນີນກິດຈະກໍາຕ່າງໆ ດ້ວຍຄວາມກະຕືລືລົ້ນ, ເສີມຂະຫຍາຍບົດບາດຄວາມເປັນແບບຢ່າງນໍາໜ້າ ຂອງສະມາຊິກພັກຢ່າງເຕັມສ່ວນ, ຮັບປະກັນເຮັດສໍາເລັດທຸກໜ້າທີ່ວຽກງານການຈັດຕັ້ງມອບໝາຍໃຫ້. ຫົວໜ້າຈຸພັກແມ່ນໄດ້ມາຈາກການສະເໜີຊື່ ແລະ ການເລືອກເຟັ້ນຂອງສະມາຊິກພັກພາຍໃນຈຸພັກ, ແຕ່ໜ່ວຍພັກ ກໍ່ສາມາດບົ່ງຕົວແຕ່ງຕັ້ງໄດ້, ຫົວໜ້າຈຸພັກຕ້ອງແມ່ນສະມາຊິກພັກສົມບູນ.

ໃນສະເພາະໜ້ານີ້, ໂຄງປະກອບການຈັດຕັ້ງຂອງໜ່ວຍພັກຕ້ອງດໍາເນີນການປະຕິຮູບ ແລະ ປະດິດສ້າງໃໝ່ໃຫ້ສອດຄ່ອງກັບໄລຍະໃໝ່, ໂດຍອີງຕາມການປະຕິຮູບ ແລະ ເປີດປະຕູສູ່ພາຍນອກນັບມື້ຂະຫຍາຍຕົວເຂົ້າສູ່ລວງເລິກ, ບັນດາຮູບແບບຫົວໜ່ວຍເສດຖະກິດ ແລະ ອົງການຈັດຕັ້ງເສດຖະກິດ, ຊ່ອງທາງຮູບແບບປະກອບວິຊາຊີບ, ການເຄື່ອນຍ້າຍ ແລະ ການຍົກຍ້າຍຂອງສະມາຊິກພັກນັບມື້ນັບຫຼາຍ. ຮູບແບບການສ້າງຕັ້ງໜ່ວຍພັກໃນໄລຍະຜ່ານມາ ທີ່ອີງໃສ່ບ່ອນຈົດສໍາມະໂນຄົວຂອງສະມາຊິກພັກເປັນທີ່ຕັ້ງ ຮູບແບບ ແລະ ວິທີການດັ່ງກ່າວຈັດຕັ້ງປະຕິບັດກັນມາຕັ້ງແຕ່ສະໄໝດໍາເນີນເສດຖະກິດແຜນການ ແລະ ໄລຍະຕົ້ນຂອງການປະຕິຮູບ ແຕ່ຍັງມີບາງດ້ານບໍ່ສອດຄ່ອງ ແລະ ບໍ່ສະມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງການດໍາເນີນຊີວິດພັກ ໃນໄລຍະໃໝ່, ສະນັ້ນຈຶ່ງຮຽກຮ້ອງໃຫ້ຂະແໜງຈັດຕັ້ງຂອງພັກ ຕ້ອງເປັນເຈົ້າການໃຊ້ມານະຈິດແຫ່ງການປະຕິຮູບ ແລະ ປະດິດສ້າງໃໝ່, ສຶກສາຄົ້ນຄວ້າກໍາແໜ້ນສະພາບການໃໝ່ ເພື່ອມີວິທີໃນການປັບປຸງ, ແກ້ໄຂ ແລະ ດໍາເນີນການປະຕິຮູບຢ່າງປະດິດສ້າງຕໍ່ກັບຮູບແບບການສ້າງຕັ້ງໜ່ວຍພັກ, ໂດຍອີງໃສ່ຫຼັກສະນະພື້ນຖານຄື: ປັບປຸງຮູບແບບການສ້າງຕັ້ງການຈັດຕັ້ງຮາກຖານພັກ ທີ່ຖືເອົາທີ່ຕັ້ງສໍາມະໂນຄົວຂອງສະມາຊິກພັກເປັນພື້ນຖານ ມາເປັນການຖືເອົາທີ່ຕັ້ງບ່ອນເຮັດວຽກຂອງສະມາຊິກ ພັກເປັນພື້ນຖານໃນການສ້າງຕັ້ງການຈັດຕັ້ງຂອງພັກ. ຫາກເຮັດແນວນັ້ນ, ຈຶ່ງຈະຕອບສະໜອງໄດ້ກັບລັກສະນະເຄື່ອນຍ້າຍບ່ອນເຮັດວຽກຂອງສະມາຊິກພັກ, ແກ້ໄຂໄດ້ບັນຫາຄົງຄ້າງຕົວຈິງ ທີ່ການຈັດຕັ້ງພັກ, ສະມາຊິກພັກ ຈຶ່ງຈະສາມາດແກ້ໄຂໄດ້ຢ່າງຂາດຕົວ ທີ່ໄດ້ຍົກຂຶ້ນມາວ່າ: ບໍ່ວ່າສະມາຊິກພັກ ຈະໄປເຮັດວຽກຢູ່ບ່ອນໃດ ລ້ວນແຕ່ມີການສຶກສາອົບຮົມ, ການຄຸ້ມຄອງ, ການຕິດຕາມກວດກາ ແລະ ການບໍລິການຂອງການຈັດຕັ້ງພັກ, ລ້ວນແຕ່ສາມາດເຮັດວຽກຢູ່ພາຍໃຕ້ການນໍາພາຂອງການຈັດຕັ້ງພັກ ແລະ ລ້ວນແຕ່ສາມາດດໍາເນີນຊີວິດຢູ່ໃນການຈັດຕັ້ງໃດໜຶ່ງຂອງພັກ...ຯ

ແຫຼ່ງຂໍ້ມູນ: ຄັດຈາກປຶ້ມ ຄູ່ມືສໍາລັບເລຂາໜ່ວຍພັກ (ສະບັບພາສາຈີນ), ຮຽບຮຽງໂດຍ: ທ່ານ ຈ່າງຢົງເສີນ (Zhang Rongchen), ສໍານັກພິມທຸງແດງ, ປີ 2023, ໜ້າ 7-8

3 ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ສຳເລັດກອງປະຊຸມໃຫຍ່ ສະມາຊິກພັກຂອງຕົນ.

ຄະນະໜ່ວຍພັກໂທລະສັບຕັ້ງໂຕະ-ອິນເຕີເນັດ

ຄະນະໜ່ວຍພັກເຕັກນິກ

ໃນລະຫວ່າງເດືອນກໍລະກົດ 2024 ບັນດາໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ບໍລິສັດ ລາວໂທລະຄົມ ມະນາຄົມ ມະຫາຊົນ ໄດ້ດຳເນີນກອງປະຊຸມໃຫຍ່ ສະມາຊິກພັກຂອງຕົນ. ສຳເລັດ 3 ໜ່ວຍພັກຄື: ໜ່ວຍພັກໂທລະສັບຕັ້ງໂຕະ-ອິນເຕີເນັດ, ໜ່ວຍພັກເຕັກນິກ, ແລະ ໜ່ວຍພັກຕິດຕັ້ງ-ສ້ອມແປງໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ສຸພິນ ຈັນທະວິໄຊ ກຳມະການພັກກະຊວງເຕັກໂນໂລຊີ ແລະ ການສື່ສານ, ເລຂາຄະນະພັກຮາກຖານ ລລທ, ຕາງໜ້າອົງຄະນະພັກກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ມີສະຫາຍຄະນະພັກຮາກຖານ ລລທ, ຕາງໜ້າບັນດາໜ່ວຍພັກ, 3 ອົງການຈັດຕັ້ງມະຫາຊົນ, ຫ້ອງການພັກ ແລະ ສະມາຊິກພັກສົມບູນຂອງ 3 ໜ່ວຍພັກເຂົ້າຮ່ວມທັງໝົດ.

ຄະນະໜ່ວຍພັກຕິດຕັ້ງ-ສ້ອມແປງ

ກອງປະຊຸມຄັ້ງປະຖົມມະລຶກ ເລືອກໄດ້ຄະນະ**ໜ່ວຍພັກໂທລະສັບຕັ້ງໂຕະ-ອິນເຕີເນັດ** ຊຸດໃໝ່ 3 ສະຫາຍຄື: 1. ສະຫາຍ ສຸກັນ ຄູນປະເສີດ ເປັນເລຂາໜ່ວຍພັກ; 2. ສະຫາຍ ຄຳແດງ ເທບສົມບັດ ເປັນຮອງເລຂາ, ທັງເປັນປະທານກວດກາ; 3. ສະຫາຍ ສຸລິໄຊ ຈັນທະວິໄຊ ເປັນກຳມະການໜ່ວຍພັກ; ເລືອກໄດ້ຄະນະ**ໜ່ວຍພັກເຕັກນິກ** ຊຸດໃໝ່ 3 ສະຫາຍຄື: 1. ສະຫາຍ ແສງເດືອນ ສີລາປານີ ເປັນເລຂາໜ່ວຍພັກ; 2. ສະຫາຍ ບຸນຖອງ ສິດລາກອນ ເປັນຮອງເລຂາ, ທັງເປັນປະທານກວດກາ; 3. ສະຫາຍ ສີງລາ ວິມະນີ ເປັນກຳມະການໜ່ວຍພັກ; ແລະ ເລືອກໄດ້ຄະນະ**ໜ່ວຍພັກຕິດຕັ້ງ-ສ້ອມແປງ** ຊຸດໃໝ່ 3 ສະຫາຍຄື: 1. ສະຫາຍ ວິລະພອນ ວົງວິລະຈິດ ເປັນເລຂາໜ່ວຍພັກ; 2. ສະຫາຍ ສາຍພອນ ຊຸນສຸວັນ ເປັນຮອງເລຂາ, ທັງເປັນປະທານກວດກາ; 3. ສະຫາຍ ສີຈັນ ອຸ່ນຄຳ ເປັນກຳມະການໜ່ວຍພັກ.

ວາລະສານກໍ່ສ້າງພັກ, ສະບັບ 266 ປະຈຳປີ 2024/4

❀ ຜູ້ຊີ້ນຳ ❀

ທ່ານ ປອ ວິສຸກ ພົມພິທັກ
ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ

❀ ຄະນະບັນນາທິການ ❀

ທ່ານ ພອນສະຫວັນ ໄຊຊະນະ ຫົວໜ້າ
ທ່ານ ນ. ແກ້ວຕາ ພັນດານຸວົງ ຮອງ
ທ່ານ ນ. ແກ້ວໃຈ ແສງມີໄຊ ຮອງ
ທ່ານ ຄອນຄຳ ໂສລັດຕະນະວົງ ຮອງ

❀ ບັນນາທິການ, ອອກແບບ ແລະ ຈັດໜ້າ ❀

ທ່ານ ແສງອາລຸນ ຈັນທາທອນ
ທ່ານ ບານ ມູນປະເສີດ
ທ່ານ ນ. ພິດສະໄໝ ວິໄລຮັກ
ທ່ານ ນ. ແສງຄຳ ຈິດຕະວົງ

- ຂໍ້ຕົກລົງ 02/ ຄຈສພ, ທະບຽນພິມ 255/ສມຊ.
- ບກ ໂທ: (021) 840420, 840421.
- E-Mail: Korsangphakmagazine@gmail.com
- ແຈ້ງບົດສົ່ງທາງ E-Mail: 020 59846399

ຮັບຜິດຊອບບໍລິຫານ-ຈຳໜ່າຍ

ທ່ານ ນ. ແສງອອນ ແກ້ວມີມັນລັດ
ທ່ານ ນ. ແສງແກ້ວ ພົມມະວົງ
ທ່ານ ພອນສະຫວັນ ລາຊະບັນເທົາ (ຈຳໜ່າຍ)
ທ່ານ ນ. ຈັນອາລີຈິດ ສໍພາບມີໄຊ
ທ່ານ ນ. ອານຸລັກ ຈິດຕິລາດ

ສາລະບານ

✍ ນາມປາກກາ ✍	✍ ຫົວຂໍ້ບົດ	✍ ໜ້າ
	ທິດສະດີ ແລະ ພຶດຕິກຳ	
ນະຄອນໄຊ ແກ້ວສຸຣິຍະວົງ	- ການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ ຂອງພະນັກງານ-ສະມາຊິກພັກ	1
ວິໄລສິດ ພົມພັກດີ	- ກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ສະຖາບັນການເມືອງ	5
ພູວຽງ ແກ້ວບຸນພັນ	- ຍົກສູງວຽກງານຄຸ້ມຄອງ ແລະ ບຳລຸງພະນັກງານນຳພາ-ຄຸ້ມຄອງ ຢູ່ສູນກາງ	11
ແກ້ວຕາ ພັນດານຸວົງ	- ຍົກສູງຄຸນທາດການເມືອງ ໃຫ້ຖັນແຖວພະນັກງານ-ສະມາຊິກພັກ ຢູ່ແຂວງ	15
ພິດສະໄໝ	- ແຂວງໄຊສົມບູນ ສົ່ງເສີມການລົງທຶນທັງພາຍໃນແລະຕ່າງປະເທດ	19
ຂວັນສະໝອງ ສີຊະນະ	- ອົງຄະນະພັກເມືອງຟື້ງສາລີ ເອົາໃຈໃສ່ປັບປຸງການຈັດຕັ້ງພັກຕິດພັນກັບການ	25
ຕູ້ຊໍ່ ຢົງເນັ້ງວ່າງ	- ປັບປຸງການຈັດຕັ້ງຮາກຖານພັກຢູ່ເມືອງໝອກແຂວງຊຽງຂວາງ	30
ສີມອນ ສີວົງໄຊ	- ການກໍ່ສ້າງ-ບຳລຸງພະນັກງານທາງດ້ານທິດສະດີການເມືອງແລະການປົກຄອງຢູ່	34
ຄຳຜົນ ແສງປະເສີດ	- ເພີ່ມທະວີການນຳພາຂອງຄະນະພັກຕໍ່ວຽກງານສະຫະພັນນັກຮົບເກົ່າຢູ່ແຂວງ	37
	ຄົ້ນຄວ້າ-ແລກປ່ຽນ	
ວິລະກອນ ວົງໄພຈິດ	- ບາງບັນຫາຄວນເອົາໃຈໃສ່ໃນວຽກງານປ້ອງກັນພັກ-ພະນັກງານ	41
	ວຽກດີຄົນເດັ່ນ	
ບານສະຫວັນ	- ຄອບຄົວຕົວແບບຜະລິດຕະພັນວາຍເຂົ້າໄກ່ນ້ອຍ (ສະຕິກກີວາຍ)	46
	ບົດຮຽນຕ່າງປະເທດ	
ສຳນຽງ ເມກລັນດອນ	- ຄວາມຮັບຮູ້ກ່ຽວກັບຈຸພັກຂອງພັກກອມມູນິດຈີນ	51
✍✍✍✍	- ສາລະບານ	54